Bên nhận : Ông/bà ... (họ tên, chức vụ, tên nước),

Đã chuyển giao và tiếp nhận thi thể : Số lượng, chi tiết nhân thân (họ tên, ngày tháng năm sinh, nếu có), giới tính, các đặc điểm chính.

Thi thể người nói trên được ... (ai) phát hiện vào hồi ... giờ, ngày … tháng … năm … tại … (địa danh, số hiệu mốc quốc giới gần kề).

Hai Bên xác nhận, người này là công dân nước ... (quốc tịch), nguyên nhân tử vong có khả năng là ...

Tài sản được bàn giao cùng thi thể gồm: ... (tên gọi, số lượng, đặc điểm chính) (Nếu chưa thể chuyển giao tài sản, cần ghi rõ lý do chưa chuyển giao được).

Trong khi bàn giao ... (ghi rõ những việc liên quan hai bên cần lưu ý khi bàn giao).

Biên bản này làm tại … , ngày … tháng … năm … thành hai bản chính, mỗi bản bằng tiếng Việt và tiếng Lào, các văn bản đều có giá trị như nhau./.

Bên chuyển giao	**Bên tiếp nhận**
(Ký, ghi rõ họ tên và đóng dấu)	(Ký, ghi rõ họ tên và đóng dấu)

Phụ lục 11

BIÊN BẢN BÀN GIAO TÀI SẢN

Số ....

Ngày ....

Thời gian ....

Địa điểm ....

Thực hiện quy định tại Điều 47 Hiệp định về Quy chế quản lý biên giới và cửa khẩu biên giới trên đất liền giữa Chính phủ nước Cộng hoà xã hội chủ nghĩa Việt Nam và Chính phủ nước Cộng hoà dân chủ nhân dân Lào ký ngày 16 tháng 3 năm 2016;

Bên giao: Ông/bà ... (họ tên, chức vụ, tên nước),

Bên nhận : Ông/bà ... (họ tên, chức vụ, tên nước),

Đã chuyển giao và tiếp nhận tài sản ... (tên gọi, số lượng, các đặc điểm chính).

Tài sản trên được ...(ai) phát hiện vào hồi ... giờ, ngày ... tháng ... năm ... tại ... (địa danh, số hiệu mốc quốc giới gần kề). Hai bên xác nhận tài sản này thuộc sở hữu của nước ... (tên nước).

Trong khi bàn giao ... (ghi rõ những việc liên quan hai bên cần lưu ý khi bàn giao).

Biên bản này làm tại ... , ngày ... tháng ... năm ... thành hai bản chính, mỗi bản bằng tiếng Việt và tiếng Lào, các văn bản đều có giá trị như nhau./.

Bên chuyển giao	**Bên tiếp nhận**
(Ký và ghi rõ họ tên)	(Ký và ghi rõ họ tên)

Phụ lục 12

DANH SÁCH CÁC ĐƠN VỊ HÀNH CHÍNH CẤP HUYỆN CÓ MỘT PHẦN ĐỊA GIỚI TRÙNG HOẶC TIẾP GIÁP VỚI ĐƯỜNG BIÊN GIỚI QUỐC GIA VIỆT NAM - LÀO

Thực hiện quy định tại Điều 51 Hiệp định về Quy chế quản lý biên giới và cửa khẩu biên giới trên đất liền giữa Chính phủ nước Cộng hoà xã hội chủ nghĩa Việt Nam và Chính phủ nước Cộng hoà dân chủ nhân dân Lào ký ngày 16 tháng 3 năm 2016, xác định danh sách các đơn vị hành chính có một phần địa giới trùng hoặc tiếp giáp với đường biên giới quốc gia Việt Nam - Lào như sau:

I. Phía nước Cộng hoà xã hội chủ nghĩa Việt Nam

TT	Tỉnh biên giới	Huyện biên giới
1	Điện Biên	Mường Nhé
		Nậm Pồ
		Mường Chà
		Điện Biên
2	Sơn La	Sốp Cộp
		Sông Mã
		Mai Sơn
		Yên Châu
		Mộc Châu
		Vân Hồ
3	Thanh Hóa	Mường Lát
		Quan Hóa
		Quan Sơn
		Lang Chánh
		Thường Xuân
4	Nghệ An	Quế Phong

		Tương Dương
		Kỳ Sơn
		Con Cuông
		Anh Sơn
		Thanh Chương
5	Hà Tĩnh	Hương Sơn
		Vũ Quang
		Hương Khê
6	Quảng Bình	Tuyên Hóa
		Minh Hóa
		Bố Trạch
		Quảng Ninh
		Lệ Thủy
7	Quảng Trị	Hướng Hóa
		Đa Krông
8	Thừa Thiên Huế	A Lưới
9	Quảng Nam	Tây Giang
		Nam Giang
10	Kon Tum	Đắk Glei
		Ngọc Hồi

II. Phía nước Cộng hoà dân chủ nhân dân Lào

TT	Tỉnh biên giới	Huyện biên giới
1	Phông Sa Lỳ	Nhọt Ou
		Phông Sa Lỳ
		Sắm Phăn

		Mường Mày
2	Luông Pha Băng	Phôn Thoong
3	Hủa Phăn	Mường Xon
		Mường Ét
		Xiềng Khọ
		Sốp Bâu
		Viêng Xay
		Sầm Tạy
		Mường Quằn
4	Xiêng Khoảng	Nọng Hét
		Mường Mọc
5	Bo Ly Khăm Xay	Viêng Thoong
		Xay Chăm Phon
		Khăm Kợt
6	Khăm Muồn	Na Cai
		Bùa La Pha
7	Sạ Vẳn Nạ Khệt	Xê Pôn
		Mường Noòng
8	Sả Lạ Văn	Xà Muội
9	Xê Kông	Kà Lừm
		Đắk Chưng
10	Ắt Tạ Pư	Xảm Xay
		Phu Vông

ສັນຍາ

ວ່າດ້ວຍ

ລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ

ລະຫວ່າງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ແລະ

ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ປີ 2016

ສັນຍາ
ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ
ລະຫວ່າງ
ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ
ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ອີງຕາມສົນທິສັນຍາ ມິດຕະພາບ ແລະ ການຮ່ວມມື ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 18 ກໍລະກົດ 1977.

ອີງຕາມອະນຸສັນຍາ ວ່າດ້ວຍເສັ້ນຊາຍແດນ ແລະ ຫຼັກໝາຍຊາຍແດນປະເທດ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016.

ດ້ວຍຄວາມປາດຖະໜາ ທີ່ຢາກເພີ່ມທະວີສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານ ລາວ-ຫວຽດນາມ ໃຫ້ນັບມື້ເພີ່ມທະວີ ແລະ ພັດທະນາຢ່າງບໍ່ຢຸດຢັ້ງ, ບົນຫຼັກການເຄົາລົບຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງກັນ ແລະ ກັນ, ບໍ່ແຊກແຊງເຂົ້າກິດຈະການພາຍໃນຂອງກັນ ແລະ ກັນ, ສະເໝີພາບ, ຮ່ວມມືກັນຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ສາມັກຄີຊ່ວຍເຫຼືອຊຶ່ງກັນ ແລະ ກັນ ເພື່ອສ້າງຊາຍແດນໃຫ້ເປັນຊາຍແດນແຫ່ງສັນຕິພາບ, ສະຖຽນລະພາບ, ມິດຕະພາບ, ການຮ່ວມມື ແລະ ພັດທະນາແບບຍືນຍົງ.

ເພື່ອຮັບປະກັນຄວາມໝັ້ນຄົງຂອງເສັ້ນຊາຍແດນປະເທດ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງສັງຄົມ; ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການໄປມາຫາສູ່ ແລະ ການຜະລິດຂອງປະຊາຊົນທີ່ອາໄສຢູ່ຕາມບໍລິເວນຊາຍແດນ; ຊຸກຍູ້ການຮ່ວມມື ເພື່ອພັດທະນາເສດຖະກິດ-ສັງຄົມ ຢູ່ຕາມບໍລິເວນຊາຍແດນ ລະຫວ່າງ ສອງປະເທດ.

ດັ່ງນັ້ນ, ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ (ຕໍ່ໄປນີ້ເອີ້ນຫຍໍ້ວ່າ: " ສອງຝ່າຍ ") ໄດ້ຕົກລົງກັນດັ່ງນີ້:

ໝວດທີ I
ບັນດາຂໍ້ກຳນົດລວມ

ມາດຕາ 1 ອະທິບາຍຄຳສັບ

ບັນດາຄຳສັບທີ່ໃຊ້ໃນສັນຍາສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຊາຍແດນ** ໝາຍເຖິງເສັ້ນທີ່ກຳນົດດິນແດນຕາມທິດທາງຂອງເສັ້ນຕັ້ງສາກ ລວມມີ: ເຂດພື້ນດິນ, ນ່ານນ້ຳ ແລະ ນ່ານຟ້າ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ;
2. **ຫຼັກໝາຍຊາຍແດນປະເທດ** ໝາຍເຖິງວັດຖຸທີ່ນຳໃຊ້ເປັນເຄື່ອງໝາຍສະແດງໃຫ້ເຫັນທິດເນັ່ງຂອງເສັ້ນຊາຍແດນຢູ່ພູມີປະເທດຕົວຈິງ ລວມມີ: ຫຼັກໝາຍ ແລະ ຫຼັກທິດເນັ່ງທີ່ໄດ້ກໍ່ສ້າງຢູ່ເທິງເສັ້ນຊາຍແດນ ຫຼື ຢູ່ສອງຟາກຂອງ

ເສັ້ນຊາຍແດນ ຊຶ່ງສອງຝ່າຍໄດ້ຮັບຮອງຢ່າງເປັນລາຍລັກອັກສອນ, ໃນນັ້ນໄດ້ລະບຸຄ່າພິກັດຂອງຫຼັກໝາຍທີ່ໄດ້ວັດແທກຢູ່ພູມີປະເທດຕົວຈິງ;

3. **ແລວຊາຍແດນ** ໝາຍເຖິງແລວທີ່ສອງຝ່າຍຖາງຢູ່ຕອນຊາຍແດນທີ່ຈຳເປັນ ຊຶ່ງມີລວງກວ້າງເບື້ອງລະ 2,5 (ສອງຈຸດຫ້າ) ແມັດ ຫາ 5 (ຫ້າ) ແມັດ ນັບແຕ່ເສັ້ນຊາຍແດນໄປແຕ່ລະເບື້ອງ ເພື່ອໃຫ້ເຫັນເສັ້ນຊາຍແດນຈະແຈ້ງ ແລະ ຮັບຮູ້ໄດ້ງ່າຍ;
4. **ເຂດນ້ຳຊາຍແດນ** ໝາຍເຖິງເຂດນ້ຳທີ່ມີເສັ້ນຊາຍແດນໄປຜ່ານແມ່ນ້ຳ, ຫ້ວຍຊາຍແດນ ຫຼື ເຂດນ້ຳອື່ນໆທີ່ເສັ້ນຊາຍແດນທາງບົກໄປຜ່ານ;
5. **ເຂດຊາຍແດນ** ໝາຍເຖິງຂອບເຂດຫົວໜ່ວຍການປົກຄອງບັນດາເມືອງຂອງສອງປະເທດ ທີ່ມີເຂດແດນຕິດກັບຊາຍແດນປະເທດ ລາວ-ຫວຽດນາມ;
6. **ບໍລິເວນຊາຍແດນ** ໝາຍເຖິງຫົວໜ່ວຍການປົກຄອງຂັ້ນບ້ານຂອງລາວ ແລະ ຕາແສງ, ຄຸ້ມ, ເທດສະບານ (ຕໍ່ໄປນີ້ເອີ້ນຫຍໍ້ວ່າ: ຂັ້ນຕາແສງ) ສຳລັບຫວຽດນາມ ທີ່ມີເຂດແດນຕິດກັບຊາຍແດນປະເທດ ລາວ-ຫວຽດນາມ. ບໍລິເວນຊາຍແດນມີປ້າຍຊີ້ບອກວ່າ " ບໍລິເວນຊາຍແດນ ";
7. **ຂອບເຂດຊາຍແດນ** ໝາຍເຖິງເຂດແຕ່ເສັ້ນຊາຍແດນເຂົ້າໄປດິນແດນຂອງແຕ່ລະປະເທດ, ບ່ອນແຄບສຸດແມ່ນ 100 (ໜຶ່ງຮ້ອຍ) ແມັດ, ບ່ອນກວ້າງສຸດບໍ່ເກີນ 1.000 (ໜຶ່ງພັນ) ແມັດ. ຂອບເຂດຊາຍແດນມີປ້າຍຊີ້ບອກວ່າ " ຂອບເຂດຊາຍແດນ ";
8. **ເຂດຫວງຫ້າມ** ໝາຍເຖິງເຂດທີ່ໄດ້ສ້າງຂຶ້ນຢູ່ເຂດຊາຍແດນຂອງແຕ່ລະປະເທດ ເພື່ອຄຸ້ມຄອງ, ປ້ອງກັນ, ຮັກສາຄວາມສະຫງົບຄວາມເປັນລະບຽບຮຽບຮ້ອຍ; ສະກັດກັ້ນ ແລະ ຕ້ານການແຊກແຊງ, ທຳລາຍ, ຂຸດຄົ້ນ, ເກັບກຳຄວາມລັບຂອງຊາດ. ເຂດຫວງຫ້າມມີປ້າຍຊີ້ບອກວ່າ " ເຂດຫວງຫ້າມ ";
9. **ປະຊາຊົນຊາຍແດນ** ໝາຍເຖິງພົນລະເມືອງລາວ ຫຼື ພົນລະເມືອງຫວຽດນາມ ທີ່ຂຶ້ນທະບຽນຕັ້ງພູມລຳເນົາຢ່າງຖາວອນຢູ່ " ບໍລິເວນຊາຍແດນ ";
10. **ກິດຈະການກໍ່ສ້າງຕັດຜ່ານເສັ້ນຊາຍແດນ** ໝາຍເຖິງບັນດາກິດຈະການຂອງອົງການທີ່ມີສິດອຳນາດຂອງສອງປະເທດເປັນເອກະພາບກັນໃຫ້ກໍ່ສ້າງຕັດຜ່ານເສັ້ນຊາຍແດນເຊັ່ນ: ທາງລົດໄຟ, ທາງລົດ, ທໍ່ນ້ຳມັນ, ທໍ່ອາຍແກັສ, ສາຍໄຟຟ້າ, ສາຍໄຍແກ້ວ, ຂົວ, ອ່າງເກັບນ້ຳ ແລະ ອື່ນໆ;
11. **ຍານພາຫະນະການບິນ ແລະ ອຸປະກອນການບິນ** ໝາຍເຖິງເຮືອບິນ, ເຮລິຄອບເຕີ, ບາລູນ ແລະ ອຸປະກອນການບິນອື່ນໆ;
12. **ເຫດການທີ່ເກີດຂຶ້ນຕາມຊາຍແດນ** ໝາຍເຖິງເຫດການ ຫຼື ບັນຫາທີ່ເກີດຂຶ້ນຢູ່ບໍລິເວນຊາຍແດນທີ່ລະເມີດສັນຍາສະບັບນີ້, ອະນຸສັນຍາ ວ່າດ້ວຍເສັ້ນຊາຍແດນ ແລະ ຫຼັກໝາຍຊາຍແດນປະເທດ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016 ແລະ ບັນດາເອກະສານກວດກາປະສົມ, ຊຶ່ງເຮັດໃຫ້ຝ່າຍໃດຝ່າຍໜຶ່ງ ຫຼື ທັງສອງຝ່າຍໄດ້ຮັບຜົນກະທົບ ຫຼື ເສັຍຫາຍ;
13. **ຄົນເຂົ້າ-ອອກເມືອງຜິດກົດໝາຍ** ໝາຍເຖິງບຸກຄົນທີ່ລະເມີດບັນດາຂໍ້ກຳນົດ ກ່ຽວກັບການເຂົ້າ-ອອກເມືອງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍຂອງແຕ່ລະປະເທດ ຫຼື ສັນຍາສະບັບນີ້ ຫຼື ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ;
14. **ດ່ານຊາຍແດນ** ຫຼື **ດ່ານ** ໝາຍເຖິງສະຖານທີ່ປະຕິບັດວຽກງານການ ເຂົ້າ-ອອກເມືອງ, ການນຳເຂົ້າ ແລະ ການສົ່ງອອກ ທີ່ຜ່ານດ່ານຊາຍແດນປະເທດ ລາວ-ຫວຽດນາມ ສຳລັບຄົນ, ຍານພາຫະນະ, ສິນຄ້າ ແລະ ວັດຖຸພັນ ລວມມີ 3 ປະເພດດ່ານ ຄື: ດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ;

15. **ບໍລິເວນດ່ານຊາຍແດນ** (ຕໍ່ໄປເອີ້ນຫຍໍ້ວ່າ: ບໍລິເວນດ່ານ) ໝາຍເຖິງເນື້ອທີ່ໆໄດ້ກຳນົດໄວ້ໃນດິນແດນສ່ວນໜຶ່ງຢູ່ໃນເຂດຊາຍແດນຂອງແຕ່ລະປະເທດ, ມີເຂດແດນການປົກຄອງສ່ວນໜຶ່ງຕິດກັບເສັ້ນຊາຍແດນປະເທດ ລາວ-ຫວຽດນາມ, ໃນນັ້ນລວມມີສະຖານທີ່ເຮັດວຽກສະເພາະຂອງອົງການບໍລິຫານລັດທາງດ້ານວິຊາການ ແລະ ການດຳເນີນກິດຈະການຕ່າງໆຢູ່ບໍລິເວນດັ່ງກ່າວ, ບໍລິເວນດ່ານຊາຍແດນມີປ້າຍຊີ້ບອກວ່າ: " ບໍລິເວນດ່ານ ";
16. **ອົງການຊາຍແດນຂັ້ນສູນກາງ** ໝາຍເຖິງຄະນະກຳມະການຊາຍແດນ ລາວ-ຫວຽດນາມ, ກະຊວງການຕ່າງປະເທດ (ຝ່າຍລາວ) ແລະ ຄະນະກຳມະການຊາຍແດນແຫ່ງຊາດ, ກະຊວງການຕ່າງປະເທດ (ຝ່າຍຫວຽດນາມ);
17. **ອົງການທີ່ກ່ຽວຂ້ອງ** ໝາຍເຖິງອົງການບໍລິຫານລັດທາງດ້ານວິຊາການຂັ້ນສູນກາງທີ່ກົດໝາຍຂອງແຕ່ລະປະເທດໄດ້ກຳນົດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ເພື່ອແກ້ໄຂບັນຫາຕ່າງໆ ທີ່ໄດ້ກຳນົດໄວ້ໃນສັນຍາສະບັບນີ້;
18. **ອົງການບໍລິຫານລັດທາງດ້ານວິຊາການປະຈຳດ່ານ** ໝາຍເຖິງອົງການທີ່ປະຕິບັດພາລະບົດບາດໜ້າທີ່ດ້ານລະບຽບການ, ກວດກາຕິດຕາມຄົນ, ຍານພາຫະນະ, ສິນຄ້າ, ວັດຖຸພັນ, ນຳເຂົ້າ-ສົ່ງອອກຜ່ານດ່ານ ລວມມີ: ເຈົ້າໜ້າທີ່ຕຳຫຼວດ (ຕມ), ກົງສຸນ (ສຳລັບລາວ), ທະຫານຊາຍແດນ (ສຳລັບຫວຽດນາມ), ພາສີ, ສາທາລະນະສຸກ (ກັນພະຍາດ, ກວດກາອາຫານ, ຢາ, ກັກກັນພືດ ແລະ ສັດ) ແລະ ອົງການບໍລິຫານລັດທາງດ້ານວິຊາການທີ່ກ່ຽວຂ້ອງອື່ນໆ;
19. **ກຳລັງຮັບຜິດຊອບປ້ອງກັນຊາຍແດນ** ໝາຍເຖິງກຳລັງທະຫານຊາຍແດນຂອງແຕ່ລະປະເທດ;
20. **ກົມກອງຮັບຜິດຊອບປ້ອງກັນຊາຍແດນ** ໝາຍເຖິງຄ້າຍທະຫານຊາຍແດນຂອງແຕ່ລະປະເທດ;
21. **ຄົນປະເທດທີສາມ** ໝາຍເຖິງບຸກຄົນທີ່ບໍ່ແມ່ນສັນຊາດລາວ, ບໍ່ແມ່ນສັນຊາດຫວຽດນາມ ຫຼື ຄົນບໍ່ມີສັນຊາດ;
22. **ສິນຄ້າຂອງປະຊາຊົນຊາຍແດນ** ໝາຍເຖິງສິນຄ້າທີ່ໄດ້ຜະລິດ, ລ້ຽງ, ປູກຝັງຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ຊຶ່ງປະຊາຊົນຊາຍແດນໄດ້ຊື້-ຂາຍ, ແລກປ່ຽນຢູ່ບໍລິເວນຊາຍແດນຂອງສອງປະເທດ ເພື່ອຮັບໃຊ້ເຂົ້າໃນການດຳລົງຊີວິດ ແລະ ການຜະລິດຂອງປະຊາຊົນຊາຍແດນ;
23. **ວັດຖຸພັນ** ໝາຍເຖິງບັນດາຜະລິດຕະພັນທາງດ້ານວັດຖຸທີ່ໄດ້ນຳເຂົ້າ, ສົ່ງອອກຜ່ານດ່ານທີ່ບໍ່ແມ່ນເປົ້າໝາຍທາງດ້ານການຄ້າ ລວມມີ:
    ກ. ວັດຖຸພັນທາງດ້ານການແພດແມ່ນຊາກສົບ, ອັດຖິ, ຜະລິດຕະພັນຊີວະສາດ, ຕົວຢ່າງ ກ່ຽວກັບຊີວະວິທະຍາທາງດ້ານການແພດ, ເນື້ອເຍື່ອ, ອະໄວຍະວະຮ່າງກາຍຂອງຄົນ;
    ຂ. ວັດຖຸພັນທາງດ້ານວັດທະນະທຳ, ສິລະປະກຳ;
    ຄ. ວັດຖຸພັນທີ່ເປັນໂລຫະ, ອັນຍະມະນີ, ເຄື່ອງປະດັບ;
    ງ. ວັດຖຸພັນທີ່ເປັນຕົວຢ່າງແຮ່ທາດ, ສັດ, ພືດຮັບໃຊ້ການຄົ້ນຄວ້າ, ສະສົມ, ວາງສະແດງ;
    ຈ. ວັດຖຸພັນທີ່ເປັນເຄື່ອງໃຊ້ສ່ວນຕົວຂອງຜູ້ເຂົ້າ-ອອກເມືອງຜ່ານດ່ານ;
    ສ. ບັນດາວັດຖຸພັນອື່ນໆທີ່ເປັນວັດຖຸພັນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຂອງແຕ່ລະປະເທດ.
24. **ຍານພາຫະນະ** ໝາຍເຖິງພາຫະນະທາງດ້ານຄົມມະນາຄົມທາງບົກ, ທາງລົດໄຟ, ທາງນ້ຳ ທີ່ໄດ້ກຳນົດໃນບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ;
25. **ເຈົ້າຂອງຍານພາຫະນະ** ໝາຍເຖິງບຸກຄົນ, ການຈັດຕັ້ງທີ່ມີກຳມະສິດຕໍ່ຍານພາຫະນະ, ການຈັດຕັ້ງຄຸ້ມຄອງ, ຜູ້ເຊົ່າ, ຜູ້ນຳໃຊ້ຍານພາຫະນະ ຫຼື ຜູ້ທີ່ໄດ້ຮັບມອບໝາຍໃຫ້ຮັບຜິດຊອບຕໍ່ຍານພາຫະນະໃນເວລາເຂົ້າ-ອອກເມືອງ ຫຼື ເຄື່ອນໄຫວຢູ່ບໍລິເວນດ່ານ;

26. **ລະບຽບການຂ້າມຜ່ານຊາຍແດນ** ໝາຍເຖິງລະບຽບການທາງດ້ານບໍລິຫານທີ່ອົງການຈັດຕັ້ງອຳນາດລັດປະຈຳຢູ່ດ່ານທີ່ປະຕິບັດຕໍ່ຄົນ, ຍານພາຫະນະ, ສິນຄ້າ, ວັດຖຸພັນນຳເຂົ້າ-ສົ່ງອອກຜ່ານຊາຍແດນ ລວມມີ: ລະບຽບການດ້ານຊາຍແດນ (ການເຂົ້າ-ອອກເມືອງ), ລະບຽບການດ້ານພາສີ, ລະບຽບການກັກກັນທາງດ້ານສາທາລະນະສຸກ ແລະ ບັນດາລະບຽບການອື່ນໆທີ່ກ່ຽວຂ້ອງຕາມຂໍ້ກຳນົດກົດໝາຍພາຍໃນຂອງແຕ່ລະປະເທດ ແລະ ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ;

27. **ເຫດສຸດວິໄສ** ໝາຍເຖິງເຫດທີ່ເກີດຂຶ້ນໂດຍບັງເອີນທີ່ບໍ່ສາມາດຫຼີກລ້ຽງໄດ້;

28. **ບັນດານິຕິກຳກ່ຽວກັບການກວດກາປະສົມ** ໝາຍເຖິງບັນດານິຕິກຳທີ່ໄດ້ລົງນາມ ພາຍຫຼັງດຳເນີນການກວດກາຊາຍແດນຮ່ວມກັນ ລວມມີ: ອະນຸສັນຍາກວດກາປະສົມ ພ້ອມດ້ວຍບັນດາເອກະສານຊ້ອນທ້າຍ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງ.

ມາດຕາ 2 ບັນດາຫຼັກການປະຕິບັດສັນຍາ

1. ເຄົາລົບນັບຖືເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງກັນ ແລະ ກັນ, ບໍ່ແຊກແຊງເຂົ້າກິດຈະການພາຍໃນຂອງກັນ ແລະ ກັນ, ສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ປະຕິບັດຕາມບັນດາຫຼັກການພື້ນຖານອື່ນໆຂອງກົດໝາຍສາກົນ.
2. ປະຕິບັດຕາມສົນທິສັນຍາ ວ່າດ້ວຍການກຳນົດເສັ້ນຊາຍແດນ, ອະນຸສັນຍາ ວ່າດ້ວຍເສັ້ນຊາຍແດນ ແລະ ຫຼັກໝາຍຊາຍແດນປະເທດ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016 ແລະ ເອກະສານກວດກາປະສົມ ຕາມຂໍ້ກຳນົດກົດໝາຍຂອງແຕ່ລະປະເທດ ແລະ ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ.
3. ເພື່ອສ້າງຊາຍແດນ ລະຫວ່າງ ສອງປະເທດໃຫ້ເປັນຊາຍແດນແຫ່ງສັນຕິພາບ, ສະຖຽນລະພາບ, ມິດຕະພາບ, ຄວາມໝັ້ນຄົງ, ການຮ່ວມມື ແລະ ພັດທະນາແບບຍືນຍົງ, ພ້ອມທັງຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນຊາຍແດນ, ຂອງບຸກຄົນ ຫຼື ອົງການຈັດຕັ້ງຢູ່ໃນຂອບເຂດການດັດປັບຂອງສັນຍາສະບັບນີ້.

ມາດຕາ 3 ສິດອຳນາດໃນການແກ້ໄຂບັນຫາທີ່ກ່ຽວຂ້ອງກັບຊາຍແດນ, ຫຼັກໝາຍຊາຍແດນປະເທດ, ດ່ານຊາຍແດນ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ

1. ການດັດແປງ ຫຼື ດັດປັບເສັ້ນຊາຍແດນ ຊຶ່ງເຮັດໃຫ້ເສັ້ນຊາຍແດນ ຫຼື ທິດເນັ່ງຂອງເສັ້ນຊາຍແດນມີການປ່ຽນແປງແມ່ນອົງການສູງສຸດຂອງລັດທີ່ມີສິດອຳນາດຂອງສອງປະເທດເປັນຜູ້ຕົກລົງ. ທຸກໆການຕົກລົງກ່ຽວກັບບັນຫາດັ່ງກ່າວ ຖ້າບໍ່ແມ່ນຜູ້ທີ່ມີສິດອຳນາດທີ່ໄດ້ລະບຸໃນຂໍ້ນີ້ ລ້ວນແຕ່ບໍ່ມີຄຸນຄ່າທາງດ້ານກົດໝາຍ.
2. ການເປີດ, ປິດ ແລະ ການຍົກລະດັບດ່ານຊາຍແດນແມ່ນສິດອຳນາດຂອງລັດຖະບານສອງປະເທດ.
3. ການເຄື່ອນຍ້າຍ ຫຼື ປ່ຽນຈຸດທີ່ຕັ້ງຫຼັກໝາຍຊາຍແດນປະເທດ ແຕ່ບໍ່ເຮັດໃຫ້ເສັ້ນຊາຍແດນ ຫຼື ທິດເນັ່ງຂອງເສັ້ນຊາຍແດນມີການປ່ຽນແປງ ແລະ ການແກ້ໄຂບັນຫາອື່ນໆ ກ່ຽວກັບຫຼັກໝາຍຊາຍແດນປະເທດແມ່ນສິດອຳນາດຂອງອົງການຊາຍແດນສູນກາງຂອງສອງປະເທດ.
4. ການແກ້ໄຂບັນຫາອື່ນໆທີ່ກ່ຽວຂ້ອງເຖິງການກໍ່ສ້າງ, ການຄຸ້ມຄອງ ແລະ ປ້ອງກັນເສັ້ນຊາຍແດນ ແລະ ບໍລິເວນຊາຍແດນຂອງສອງປະເທດແມ່ນຂຶ້ນກັບຄວາມຮັບຜິດຊອບຂອງອົງການ, ທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ກຳລັງປ້ອງກັນຊາຍແດນຂອງສອງປະເທດ.

ໝວດທີ II
ການຄຸ້ມຄອງ, ການປົກປັກຮັກສາ ແລະ ການປ້ອງກັນເສັ້ນຊາຍແດນ, ຫຼັກໝາຍຊາຍແດນປະເທດ ແລະ ແລວຊາຍແດນ

ມາດຕາ 4 ຄວາມຮັບຜິດຊອບ ແລະ ພັນທະຂອງສອງຝ່າຍ

1. ສອງຝ່າຍມີຄວາມຮັບຜິດຊອບ ແລະ ພັນທະ ໃນການເຄົາລົບນັບຖື, ປ້ອງກັນ ແລະ ປົກປັກຮັກສາເສັ້ນຊາຍແດນ, ລະບົບຫຼັກໝາຍຊາຍແດນປະເທດ ລະຫວ່າງ ສອງປະເທດ, ແລວຊາຍແດນ ເພື່ອເຮັດໃຫ້ເສັ້ນຊາຍແດນມີຄວາມຈະແຈ້ງ ແລະ ໝັ້ນຄົງ.
2. ສອງຝ່າຍມີມາດຕະການອັນເດັດຂາດ ເພື່ອສະກັດກັ້ນ, ແກ້ໄຂທຸກໆການກະທຳ ທີ່ມ້າງເພທຳລາຍເສັ້ນຊາຍແດນ, ລະບົບຫຼັກໝາຍຊາຍແດນປະເທດ ແລະ ສິ່ງຜົນກະທົບເຮັດໃຫ້ເສັ້ນຊາຍແດນມີການປ່ຽນແປງ.
3. ສອງຝ່າຍຕ້ອງດຳເນີນການໂຄສະນາ, ສຶກສາອົບຮົມປະຊາຊົນຊາຍແດນຂອງປະເທດຕົນຢ່າງຕໍ່ເນື່ອງ, ຊຸກຍູ້ ສົ່ງເສີມເຂົາເຈົ້າ ເຂົ້າຮ່ວມການປົກປັກຮັກສາ ແລະ ປ້ອງກັນຫຼັກໝາຍຊາຍແດນປະເທດ ແລະ ແລວຊາຍແດນຢ່າງ ຕັ້ງໜ້າ.

ມາດຕາ 5 ບັນດາພຶດຕິກຳທີ່ຫ້າມຢູ່ບໍລິເວນຊາຍແດນ

1. ການເຄື່ອນຍ້າຍ, ທຳລາຍ ຫຼື ເຮັດໃຫ້ຫຼັກໝາຍຊາຍແດນປະເທດເປ່ເພ, ເຄື່ອງໝາຍຮັບຮູ້ເສັ້ນຊາຍແດນ, ກີດຈະ ການສາທາລະນະ, ບັນດາປະເພດປ້າຍຊີ້ບອກ " ບໍລິເວນຊາຍແດນ ", " ຂອບເຂດຊາຍແດນ ", " ບໍລິເວນດ່ານ ", " ເຂດຫວງຫ້າມ ", ເຮັດໃຫ້ທິດເນັ່ງເສັ້ນຊາຍແດນປ່ຽນແປງ, ເຮັດໃຫ້ແລວນ້ຳທຳມະຊາດຂອງແມ່ນ້ຳ ແລະ ຫ້ວຍ ຊາຍແດນປ່ຽນແປງ.
2. ການຍຸແຍ່ ຫຼື ກໍ່ຄວາມບໍ່ສະຫງົບ, ຄວາມບໍ່ປອດໄພ, ຄວາມບໍ່ເປັນລະບຽບຮຽບຮ້ອຍຂອງສັງຄົມ, ຍິງປືນຂ້າມ ແດນ, ການກໍ່ໃຫ້ເກີດລະເບີດ, ການຕັດ ແລະ ການຈູດປ່າໄມ້ໃນຂອບເຂດຊາຍແດນ, ຂ້າມແດນເພື່ອທຳການ ຜະລິດ ແລະ ຕັ້ງພູມລຳເນົາ, ຂຸດຄົ້ນຊັບພະຍາກອນທຳມະຊາດ, ເຄື່ອງປ່າຂອງດົງ, ສັດນ້ຳທີ່ຜິດກົດໝາຍ ແລະ ການກະທຳອື່ນໆທີ່ສົ່ງຜົນກະທົບຕໍ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ສຸຂະພາບຂອງຄົນ.
3. ການເຮັດໃຫ້ແຫຼ່ງນ້ຳແຫ້ງ, ການເຮັດໃຫ້ນ້ຳຖ້ວມ, ການເຮັດໃຫ້ສິ່ງແວດລ້ອມເປັນພິດ, ການຕິດຕັ້ງອຸປະກອນ ຮັກສາທາດເຄມີທີ່ເປັນອັນຕະລາຍ ແລະ ການກໍ່ສ້າງສະຖານທີ່ບຳບັດທາດເຄມີທີ່ເປັນອັນຕະລາຍໃນຂອບເຂດ 1.000 (ໜຶ່ງພັນ) ແມັດ ຫຼື ການຂຸດຄົ້ນແຮ່ທາດໃນຂອບເຂດ 500 (ຫ້າຮ້ອຍ) ແມັດ ນັບແຕ່ເສັ້ນຊາຍແດນເຂົ້າ ໄປຫາແຕ່ລະປະເທດ (ຍົກເວັ້ນກໍລະນີທີ່ສອງຝ່າຍຕົກລົງກັນຕ່າງຫາກ).
4. ການເຂົ້າ-ອອກເມືອງ ແລະ ພັກເຊົາທີ່ຜິດກົດໝາຍຢູ່ໃນບໍລິເວນຊາຍແດນ; ການຄ້າມະນຸດ; ການຄ້າຂາຍເຖື່ອນ, ການຫຼອກລວງທາງການຄ້າ, ການຄ້າຂາຍຂົນສັ່ງເງິນຕາ, ອາວຸດ, ຢາເສບຕິດ, ທາດລັງສີ, ວັດຖຸມີອັນຕະພັຍ, ທາດເຄ ມີອັນຕະລາຍ, ທາດເສດເຫຼືອ, ທາດອັນຕະລາຍທາງດ້ານອັກຄີໄພ, ລະເບີດຂ້າມແດນ, ການຂົນສົ່ງຂ້າມແດນ ຜະລິດຕະພັນມີລັກສະນະທີ່ເປັນພິດ, ສິນຄ້າ, ວັດຖຸພັນທຸ໌ທີ່ອາດເປັນພະຍາດຕິດຕໍ່ ແລະ ເປັນອັນຕະລາຍຕໍ່ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ.
5. ການບິນລ່ວງລ້ຳເຂົ້າເຂດຫວງຫ້າມ, ຍິງ, ປ່ອຍ, ນຳເອົາອຸປະກອນການບິນ, ວັດຖຸຂ້າມແດນທາງນ່ານຟ້າ ລະຫວ່າງ ສອງປະເທດ, ບັນດາທາດອັນຕະລາຍ ຫຼື ມີຄວາມສ່ຽງຕໍ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ເສດ ຖະກິດ, ສຸຂະພາບຂອງຄົນ, ສິ່ງແວດລ້ອມ, ຄວາມປອດໄພທາງອາກາດ ແລະ ຄວາມເປັນລະບຽບຮຽບຮ້ອຍ ທາງສັງຄົມ.

6. ການສຳຫຼວດ, ການຖ່າຍວີດີໂອ, ຖ່າຍພາບ, ອັດສຽງ, ວັດແທກ ແລະ ການແຕ້ມຮູບພາບຢູ່ສະຖານທີ່ບ່ອນທີ່ມີປ້າຍຫວງຫ້າມ.
7. ການປອມແປງເອກະສານຂອງອົງການທີ່ມີສິດອຳນາດຂອງສອງປະເທດ ເພື່ອເຄື່ອນໄຫວຢູ່ບໍລິເວນຊາຍແດນ, ຂອບເຂດຊາຍແດນ, ເຂດຫວງຫ້າມ ແລະ ບໍລິເວນດ່ານ.
8. ບັນດາການກະທຳອື່ນໆ ທີ່ລະເມີດຂໍ້ກຳນົດຂອງສັນຍາສະບັບນີ້.

ມາດຕາ 6 ການແບ່ງຄວາມຮັບຜິດຊອບການຄຸ້ມຄອງ ແລະ ປ້ອງກັນຫຼັກໝາຍຊາຍແດນປະເທດ

1. ອີງຕາມຂໍ້ກຳນົດທີ່ກ່ຽວຂ້ອງຂອງອະນຸສັນຍາ ວ່າດ້ວຍເສັ້ນຊາຍແດນ ແລະ ຫຼັກໝາຍຊາຍແດນປະເທດ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016 ແລະ ບັນດາເອກະສານກວດກາປະສົມ, ແຕ່ລະຝ່າຍມີໜ້າທີ່ຮັບຜິດຊອບບຳລຸງຮັກສາ, ສ້ອມແປງ, ບູລະນະບັນດາຫຼັກໝາຍຊາຍແດນທີ່ປະເທດຕົນຄຸ້ມຄອງ, ປ້ອງກັນແລວຊາຍແດນໃນດິນແດນຂອງຕົນ, ຍົກເວັ້ນກໍລະນີທີ່ສອງຝ່າຍຕົກລົງກັນຕ່າງຫາກ.
2. ສອງຝ່າຍຕົກລົງກັນ ແບ່ງຄວາມຮັບຜິດຊອບໃນການປົກປັກຮັກສາ ແລະ ຄຸ້ມຄອງຫຼັກໝາຍຊາຍແດນປະເທດ ດັ່ງນີ້:
   ກ. ບັນດາຫຼັກໝາຍທີ່ຕັ້ງຢູ່ດິນແດນຂອງປະເທດໃດ ແມ່ນປະເທດນັ້ນ ເປັນຜູ້ຮັບຜິດຊອບໃນການຄຸ້ມຄອງ ແລະ ປົກປັກຮັກສາ;
   ຂ. ສຳລັບບັນດາຫຼັກໝາຍທີ່ຕັ້ງຢູ່ເທິງເສັ້ນຊາຍແດນ:

      ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຮັບຜິດຊອບຄຸ້ມຄອງ, ປົກປັກຮັກສາບັນດາຫຼັກໝາຍຊາຍແດນທີ່ມີຕົວເລກຄີກ;

      ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ຮັບຜິດຊອບຄຸ້ມຄອງ, ປົກປັກຮັກສາບັນດາຫຼັກໝາຍຊາຍແດນທີ່ມີຕົວເລກຄ่ູ;

      ໃນກໍລະນີ, ຍ້ອນພູມສັນຖານທຸລະກັນດານ ຊຶ່ງຝ່າຍໜຶ່ງມີຄວາມຫຍຸ້ງຍາກໃນການປະຕິບັດໜ້າທີ່ຄຸ້ມຄອງ, ປົກປັກຮັກສາຫຼັກໝາຍຊາຍແດນປະເທດທີ່ໄດ້ຮັບມອບໝາຍ, ອາດມອບໃຫ້ອີກປະເທດໜຶ່ງຄຸ້ມຄອງ, ປົກປັກຮັກສາຕາມການຕົກລົງກັນເປັນລາຍລັກອັກສອນຂອງສອງຝ່າຍ, ຍົກເວັ້ນບັນດາຫຼັກໝາຍທີ່ໄດ້ກຳນົດໄວ້ໃນຂໍ້ ກ ຂອງຂໍ້ທີ 2 ໃນມາດຕານີ້.
   ຄ. ໃນກໍລະນີຈຳເປັນ, ສອງຝ່າຍອາດຕົກລົງກັນດັດປັບການແບ່ງຄວາມຮັບຜິດຊອບທີ່ລະບຸຢູ່ຂ້າງເທິງ.

ມາດຕາ 7 ການຄຸ້ມຄອງ ແລະ ປົກປັກຮັກສາຫຼັກໝາຍຊາຍແດນປະເທດ

1. ກຳລັງຮັບຜິດຊອບປ້ອງກັນຊາຍແດນຂອງສອງຝ່າຍ ມີຄວາມຮັບຜິດຊອບນຳໃຊ້ບັນດາມາດຕະການປ້ອງກັນ ແລະ ສະກັດກັ້ນບໍ່ໃຫ້ຫຼັກໝາຍຊາຍແດນປະເທດຖືກທຳລາຍ, ຖືກເຄື່ອນຍ້າຍ ຫຼື ຖືກລັກ, ຮັກສາຈຸດທີ່ຕັ້ງ, ປະເພດຫຼັກໝາຍ, ວັດຖຸກໍ່ສ້າງ, ຮູບຊົງ, ຂະໜາດ, ຕົວອັກສອນ ແລະ ສີຂອງຫຼັກໝາຍຊາຍແດນປະເທດໃຫ້ຖືກຕ້ອງຕາມຂໍ້ກຳນົດຢູ່ໃນບັນດານິຕິກຳ ວ່າດ້ວຍການກຳນົດເສັ້ນຊາຍແດນ ແລະ ປັກຫຼັກໝາຍຊາຍແດນ.
2. ບໍ່ໃຫ້ຝ່າຍໃດຝ່າຍໜຶ່ງປ່ຽນແປງຈຸດທີ່ຕັ້ງຫຼັກໝາຍ ຫຼື ສ້າງຫຼັກໝາຍຊາຍແດນປະເທດເພີ່ມເຕີມພຽງຝ່າຍດຽວ.
3. ຖ້າກຳລັງຮັບຜິດຊອບປ້ອງກັນຊາຍແດນປະເທດໃດ ພົບເຫັນຫຼັກໝາຍຊາຍແດນປະເທດເປ່ເພ, ຖືກທຳລາຍ, ຖືກເຄື່ອນຍ້າຍ ຫຼື ເສັຍຫາຍ ຕ້ອງແຈ້ງຕໍ່ອົງການຊາຍແດນຂັ້ນສູນກາງ ແລະ ຂັ້ນເທິງທີ່ມີສິດອຳນາດຂອງຕົນຊາບດ່ວນ, ພ້ອມກັນນັ້ນກໍ່ແຈ້ງໃຫ້ກຳລັງຮັບຜິດຊອບປ້ອງກັນຊາຍແດນຂອງອີກປະເທດໜຶ່ງຊາບໂດຍດ່ວນ ເພື່ອສົມທົບກັນຢັ້ງຢືນໃຫ້ຊັດເຈນ ແລະ ເປັນເອກະພາບ ກ່ຽວກັບວິທີການແກ້ໄຂຕາມຂໍ້ກຳນົດຂອງສັນຍາສະບັບນີ້.

ຝ່າຍຮັບຜິດຊອບການຄຸ້ມຄອງປົກປັກຮັກສາຫຼັກໝາຍຊາຍແດນປະເທດດັ່ງກ່າວ ຕ້ອງດຳເນີນການສ້ອມແປງ, ບຸລະນະຢ່າງທັນການ ຫຼື ກໍ່ສ້າງຫຼັກໝາຍຊາຍແດນປະເທດຄືນໃໝ່ຢູ່ຈຸດທີ່ຕັ້ງເກົ່າ ແລະ ແຈ້ງໃຫ້ອີກຝ່າຍໜຶ່ງຊາບກ່ອນລ່ວງໜ້າຢ່າງໜ້ອຍ 10 (ສິບ) ວັນ ຈຶ່ງຈັດຕັ້ງປະຕິບັດ. ໃນເວລາຝ່າຍໃດໜຶ່ງດຳເນີນວຽກງານຂ້າງເທິງ, ຜູ້ຕາງໜ້າຂອງອີກຝ່າຍໜຶ່ງຕ້ອງເຂົ້າຮ່ວມປະຕິບັດວຽກງານຢູ່ສະຖານທີ່ດັ່ງກ່າວ. ພາຍຫຼັງສຳເລັດວຽກງານ, ຜູ້ຕາງໜ້າຂອງສອງຝ່າຍ ຕ້ອງເຮັດບົດບັນທຶກ ແລະ ລົງນາມຮັບຮອງ. ບົດບັນທຶກດັ່ງກ່າວ ຕ້ອງເຮັດເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ລົງນາມໂດຍຜູ້ຕາງໜ້າຂອງສອງຝ່າຍ (ຕາມແບບຟອມບົດບັນທຶກມີຢູ່ໃນເອກະສານຊ້ອນທ້າຍ 1 ແລະ 2).

ສອງຝ່າຍຈະຕົກລົງເປັນເອກະພາບກັນແຕ່ງຕັ້ງຜູ້ຕາງໜ້າຂອງຕົນທີ່ມີສິດອຳນາດ ເພື່ອແກ້ໄຂວຽກງານທີ່ໄດ້ລະບຸຢູ່ໃນຂໍ້ນີ້.

4. ຮູບຊົງ, ຂະໜາດ, ວັດຖຸກໍ່ສ້າງ ແລະ ຈຸດທີ່ຕັ້ງຂອງຫຼັກໝາຍຊາຍແດນປະເທດທີ່ໄດ້ສ້ອມແປງ, ບຸລະນະ ຫຼື ກໍ່ສ້າງຄືນໃໝ່ ຕ້ອງສອດຄ່ອງກັບອະນຸສັນຍາ ວ່າດ້ວຍເສັ້ນຊາຍແດນ ແລະ ຫຼັກໝາຍຊາຍແດນປະເທດ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016 ແລະ ບັນດານິຕິກຳ ກ່ຽວກັບການກວດກາປະສົມ.
5. ສຳລັບບັນດາຫຼັກໝາຍຊາຍແດນປະເທດທີ່ບໍ່ສາມາດບຸລະນະໄດ້ ຫຼື ກໍ່ສ້າງຄືນໃໝ່ຢູ່ຈຸດທີ່ຕັ້ງເກົ່າ, ຜູ້ຕາງໜ້າຂອງສອງຝ່າຍຕ້ອງເຮັດບົດບັນທຶກ (ຕາມແບບຟອມມີຢູ່ໃນເອກະສານຊ້ອນທ້າຍ 3), ຕ້ອງລະບຸແຈ້ງສາເຫດທີ່ບໍ່ສາມາດບຸລະນະ ຫຼື ກໍ່ສ້າງຄືນໄດ້ຢູ່ຈຸດທີ່ຕັ້ງເກົ່າ ແລະ ລາຍງານສະພາບດັ່ງກ່າວ ຕໍ່ອົງການຊາຍແດນຂັ້ນສູນກາງຂອງສອງຝ່າຍ ເພື່ອພິຈາລະນາຕົກລົງ ແລະ ກຳນົດຈຸດທີ່ຕັ້ງໃໝ່ທີ່ເໝາະສົມ ເພື່ອປັກຫຼັກໝາຍຊາຍແດນປະເທດດັ່ງກ່າວ ໃຫ້ຕັ້ງຢູ່ເທິງເສັ້ນຊາຍແດນ (ສຳລັບຫຼັກໝາຍຊາຍແດນປະເທດທີ່ເປັນຫຼັກດ່ຽວ) ແລະ ບໍ່ສົ່ງຜົນສະທ້ອນຕໍ່ເສັ້ນຊາຍແດນ (ສຳລັບຫຼັກໝາຍຊາຍແດນປະເທດທີ່ເປັນຫຼັກຄູ່, ຫຼັກສາມເສົ້າທີ່ມີຕົວເລກດຽວກັນ) ການປັກຫຼັກໝາຍຊາຍແດນປະເທດຢູ່ຈຸດທີ່ຕັ້ງໃໝ່ຕ້ອງມີບົດບັນທຶກຮັບຮອງ (ຕາມແບບຟອມມີຢູ່ໃນເອກະສານຊ້ອນທ້າຍ 4).
6. ເອກະສານ ແລະ ບົດບັນທຶກກ່ຽວກັບການສ້ອມແປງ, ບຸລະນະ ແລະ ກໍ່ສ້າງຫຼັກໝາຍ ທີ່ໄດ້ລະບຸໄວ້ໃນຂໍ້ 3 ແລະ ຂໍ້ 5 ຂອງມາດຕານີ້ ຕ້ອງໄດ້ສົ່ງໃຫ້ອົງການຊາຍແດນຂັ້ນສູນກາງຂອງສອງຝ່າຍ ເພື່ອຮັບຮອງ ແລະ ເກັບຮັກສາ.
7. ອົງການທີ່ມີສິດອຳນາດຂອງແຕ່ລະຝ່າຍ ເປັນຜູ້ດຳເນີນມາດຕະການຕາມກົດໝາຍຂອງຝ່າຍຕົນ ຕໍ່ຜູ້ລະເມີດທີ່ເຮັດໃຫ້ຫຼັກໝາຍຊາຍແດນປະເທດເປ່ເພ, ເຄື່ອນຍ້າຍ, ລັກ ຫຼື ທຳລາຍຫຼັກໝາຍ.
8. ເມື່ອມີຫຼັກຖານອ້າງອີງຊັດເຈນວ່າຫຼັກໝາຍຖືກເປ່ເພ ຫຼື ຖືກທຳລາຍຍ້ອນພົນລະເມືອງຂອງປະເທດໃດໜຶ່ງ, ປະເທດຂອງພົນລະເມືອງນັ້ນ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດໃນການບຸລະນະ ຫຼື ສ້ອມແປງຫຼັກໝາຍຊາຍແດນນັ້ນ, ກໍລະນີຫຼັກໝາຍຖືກເປ່ເພ ຍ້ອນສາເຫດອື່ນ, ຝ່າຍໃດຮັບຜິດຊອບຄຸ້ມຄອງຫຼັກໝາຍນັ້ນ ຕ້ອງຮັບຜິດຊອບງົບປະມານການສ້ອມແປງ.

ມາດຕາ 8 ການຄຸ້ມຄອງປ້ອງກັນເສັ້ນຊາຍແດນ

1. ກຳລັງຮັບຜິດຊອບປ້ອງກັນຊາຍແດນຂອງແຕ່ລະຝ່າຍ ດຳເນີນການລາດຕະເວນປ້ອງກັນເສັ້ນຊາຍແດນ ແລະ ຫຼັກໝາຍຊາຍແດນປະເທດຕາມສິດໜ້າທີ່ໆໄດ້ກຳນົດໄວ້ໃນມາດຕາ 6 ຂອງສັນຍາສະບັບນີ້.
2. ກໍລະນີຈຳເປັນ, ສອງຝ່າຍອາດຈັດຕັ້ງໜ່ວຍກວດກາປະສົມຮ່ວມກັນລາດຕະເວນ ແລະ ກວດກາເສັ້ນຊາຍແດນ.

3. ບົດບັນທຶກກອງປະຊຸມຮ່ວມກັນ ຫຼື ບົດບັນທຶກກອງປະຊຸມກອດກາປະສົມຕ້ອງເຮັດເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ ຊຶ່ງມີລາຍເຊັນຂອງຫົວໜ້າໜ່ວຍລາດຕະເວນຮ່ວມ ຫຼື ຂອງຫົວໜ້າໜ່ວຍກວດກາປະສົມ ແລະ ພະນັກງານເຕັກນິກຂອງສອງຝ່າຍ (ຖ້າມີ), ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.
4. ກໍລະນີພົບເຫັນແມ່ນ້ຳ, ຫ້ວຍຊາຍແດນຖືກເຊາະເຈື່ອນ, ແລວນ້ຳປ່ຽນແປງທີ່ສົ່ງຜົນກະທົບຕໍ່ທິດເນັ່ງຂອງເສັ້ນຊາຍແດນສອງປະເທດ, ບັນດາໜ່ວຍປ້ອງກັນຊາຍແດນທີ່ກ່ຽວຂ້ອງ ຫຼື ອົງການປົກຄອງທ້ອງຖິ່ນແຂວງຊາຍແດນຂອງສອງປະເທດ ຕ້ອງເຮັດບົດບັນທຶກຮ່ວມກັນຢັ້ງຢືນການເຊາະເຈື່ອນຂອງແມ່ນ້ຳ, ຫ້ວຍ, ການປ່ຽນແປງແລວນ້ຳ ແລະ ສາເຫດ ເພື່ອລາຍງານຕໍ່ຂັ້ນທີ່ມີສິດອຳນາດ ແລະ ອົງການຊາຍແດນຂັ້ນສູນກາງຂອງແຕ່ລະຝ່າຍຊາບຢ່າງທັນການ.

ມາດຕາ 9 ການຄຸ້ມຄອງ ແລະ ປົກປັກຮັກສາແລວຊາຍແດນ

1. ສອງຝ່າຍມີໜ້າທີ່ປະສານສົມທົບກັນດຳເນີນການຖາງປ່າ ຫ່າງຈາກສອງຟາກເສັ້ນຊາຍແດນຢູ່ພື້ນທີ່ຕົວຈິງເບື້ອງລະ 2,5 (ສອງຈຸດຫ້າ) ແມັດ ຫຼື 5 (ຫ້າ) ແມັດ ເພື່ອຮັບປະກັນໃຫ້ເສັ້ນຊາຍແດນຈະແຈ້ງ ແລະ ແນມເຫັນໄດ້ງ່າຍ. ແລວທາງດັ່ງກ່າວນີ້ບໍ່ແມ່ນເສັ້ນຊາຍແດນ, ການຖາງປ່າແລວທາງເບື້ອງດິນແດນຂອງປະເທດໃດຕ້ອງແມ່ນກຳລັງຮັບຜິດຊອບປ້ອງກັນຊາຍແດນ ແລະ ອົງການປົກຄອງຂັ້ນແຂວງທີ່ມີຊາຍແດນຮ່ວມກັນນັ້ນຮັບຜິດຊອບ, ຝ່າຍທີ່ຖາງປ່າ ຕ້ອງແຈ້ງໃຫ້ກຳລັງຮັບຜິດຊອບປ້ອງກັນຊາຍແດນ ແລະ ອົງການປົກຄອງຂັ້ນແຂວງທີ່ມີຊາຍແດນຮ່ວມກັນຂອງອີກຝ່າຍໜຶ່ງຊາບລ່ວງໜ້າຢ່າງໜ້ອຍ 10 (ສິບ) ວັນ ກ່ອນການດຳເນີນວຽກງານ.
2. ການດຳເນີນການຖາງປ່າແລວທາງຊາຍແດນ ຫ້າມນຳໃຊ້ໄຟ, ທາດເຄມີ ຫຼື ມາດຕະການອື່ນໆທີ່ເປັນອັນຕະລາຍຕໍ່ດິນ, ສັດ, ພືດ ແລະ ສິ່ງແວດລ້ອມຢູ່ບໍລິເວນຊາຍແດນ ແລະ ເຂດໃກ້ຄຽງຂອງສອງປະເທດ.
3. ໃນຂອບເຂດແລວຊາຍແດນນັ້ນແມ່ນຫ້າມດຳເນີນການຜະລິດ, ການຂຸດຄົ້ນ, ກໍ່ສ້າງກິດຈະການໂຄງການຂຸດຄົ້ນ, ຂຸດຄົ້ນຊັບພະຍາກອນ ຫຼື ດຳເນີນການເຄື່ອນໄຫວອື່ນໆທີ່ອາດເປັນຜົນກະທົບຕໍ່ເສັ້ນຊາຍແດນ.

ມາດຕາ 10 ການກວດກາປະສົມ ກ່ຽວກັບຫຼັກໝາຍຊາຍແດນປະເທດ ແລະ ທິດເນັ່ງຂອງເສັ້ນຊາຍແດນ

1. ພາຍຫຼັງອະນຸສັນຍາ ວ່າດ້ວຍເສັ້ນຊາຍແດນ ແລະ ຫຼັກໝາຍຊາຍແດນປະເທດ ລາວ-ຫວຽດນາມ ມີຜົນບັງຄັບໃຊ້ທຸກໆ 10 (ສິບ) ປີໃດ, ສອງຝ່າຍຈະດຳເນີນການກວດກາເສັ້ນຊາຍແດນ ແລະ ຫຼັກໝາຍຊາຍແດນປະເທດຮ່ວມກັນໜຶ່ງຄັ້ງ.
2. ເພື່ອດຳເນີນການກວດກາປະສົມ, ສອງຝ່າຍຈະສ້າງຕັ້ງຄະນະກວດກາປະສົມຊາຍແດນ ລາວ-ຫວຽດນາມ ສ່ວນໜ້າທີ່, ຫຼັກການ, ຂັ້ນຕອນ, ວິທີເຮັດວຽກ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງເຖິງວຽກງານຄະນະກວດກາປະສົມຈະໄດ້ກຳນົດຕາມການຕົກລົງຂອງອົງການຊາຍແດນສູນກາງສອງຝ່າຍ.
3. ກ່ອນການກວດກາປະສົມໃນແຕ່ລະຄັ້ງ, ອົງການຊາຍແດນຂັ້ນສູນກາງສອງຝ່າຍຕ້ອງປຶກສາຫາລືເປັນເອກະພາບ ແລະ ຕົກລົງກ່ຽວກັບວັນເວລາ ແລະ ຂອບເຂດການກວດກາ ໂດຍຜ່ານທາງການທູດ.
4. ພາຍຫຼັງການກວດກາຮ່ວມກັນແຕ່ລະຄັ້ງ, ຄະນະກວດກາປະສົມຂອງສອງຝ່າຍ ຕ້ອງສ້າງເອກະສານຂອງການກວດກາຮ່ວມກັນ ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ. ຫົວໜ້າຄະນະກວດກາປະສົມຂອງສອງຝ່າຍ ຕ້ອງລົງລາຍເຊັນ ແລະ ລາຍງານຕໍ່ອົງການຄຸ້ມຄອງຊາຍແດນຂັ້ນສູນກາງ ເພື່ອສະເໜີໃຫ້ລັດຖະບານສອງປະເທດຮັບຮອງ, ເອກະສານກວດກາຮ່ວມກັນ ພາຍຫຼັງຮັບຮອງແມ່ນມີຜົນບັງຄັບໃຊ້ ແລະ ກາຍເປັນເອກະສານ ເພີ່ມເຕີມຂອງອະນຸສັນຍາ ວ່າດ້ວຍເສັ້ນຊາຍແດນ ແລະ ຫຼັກໝາຍຊາຍແດນປະເທດ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016.

ໝວດທີ III
ການຄຸ້ມຄອງ ແລະ ການນຳໃຊ້ເຂດນ້ຳຢູ່ຊາຍແດນ

ມາດຕາ 11 ຂໍ້ກຳນົດລວມ

1. ການຮ່ວມມືແກ້ໄຂບັນຫາຕ່າງໆ ທີ່ພົວພັນເຖິງການຄຸ້ມຄອງ, ການນຳໃຊ້ ແລະ ການປ້ອງກັນເຂດນ້ຳຊາຍແດນ ໃຫ້ປະຕິບັດຕາມຫຼັກການທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງສັນຍາສະບັບນີ້.
2. ເຂດນ້ຳຊາຍແດນ ແລະ ສະພາບແວດລ້ອມຂອງລະບົບນິເວດວິທະຍາ, ເຂດນ້ຳຊາຍແດນຕ້ອງໄດ້ຮັບການປົກປັກຮັກສາ ແລະ ນຳໃຊ້ ເພື່ອຕອບສະໜອງຄວາມຕ້ອງການໃນການດຳລົງຊີວິດ, ການຜະລິດ ແລະ ການຄົມມະນາຄົມຂອງພົນລະເມືອງຂອງສອງປະເທດ ທີ່ມີການດຳລົງຊີວິດຕິດພັນໂດຍກົງກັບເຂດນ້ຳຊາຍແດນ. ບັນດາມາດຕະການສະກັດກັ້ນ, ຕ້ານການປ່ອຍທາດເສດເຫຼືອທີ່ເຮັດໃຫ້ແມ່ນ້ຳ, ຫ້ວຍຊາຍແດນເປັນພິດ ຕ້ອງໄດ້ນຳໃຊ້ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ.
3. ການກໍ່ສ້າງໂຄງການຊົນລະປະທານ, ເຂື່ອນໄຟຟ້ານ້ຳຕົກ ແລະ ບັນດາກິດຈະການອື່ນໆຢູ່ເຂດນ້ຳຊາຍແດນ ທີ່ມີຜົນກະທົບໂດຍກົງຕໍ່ບໍລິມາດ, ຄຸນນະພາບຂອງນ້ຳ ແລະ ສະພາບແວດລ້ອມຂອງເຂດນ້ຳຊາຍແດນ ຕ້ອງໄດ້ຮັບການຕົກລົງເຫັນດີຈາກທັງສອງຝ່າຍ ຈຶ່ງສາມາດດຳເນີນການໄດ້.

ມາດຕາ 12 ການປູກຝັງ, ການລ້ຽງສັດ ແລະ ການຂຸດຄົ້ນຊັບພະຍາກອນນ້ຳຢູ່ບໍລິເວນເຂດນ້ຳຊາຍແດນ

1. ສອງຝ່າຍມີສິດດຳເນີນການເຄື່ອນໄຫວໃນການປູກຝັງ, ລ້ຽງສັດ ແລະ ການປະມົງຢູ່ບໍລິເວນເຂດນ້ຳຊາຍແດນຂອງຕົນ.
2. ອີງການທີ່ກ່ຽວຂ້ອງຂອງສອງຝ່າຍ ຫຼື ຝ່າຍດຽວ ນຳໃຊ້ບັນດາມາດຕະການສະກັດກັ້ນການຂຸດຄົ້ນຊັບພະຍາກອນນ້ຳທີ່ຜິດກົດໝາຍພາຍໃນຂອງປະເທດຕົນ, ພິເສດຫ້າມບໍ່ໃຫ້ນຳໃຊ້ລະເບີດ, ທາດເບື່ອ, ກະແສ ໄຟຟ້າ ແລະ ການກະທຳທີ່ມີລັກສະນະທຳລາຍ ຫຼື ເຮັດໃຫ້ຊັບພະຍາກອນນ້ຳ ແລະ ຊັບພະຍາກອນອື່ນໆ ໃນເຂດນ້ຳຊາຍແດນຖືກດັບສູນ.
3. ຫ້າມເຄື່ອນໄຫວຫາປາ, ຂຸດຄົ້ນຊັບພະຍາກອນນ້ຳຢູ່ໃນເຂດຫວງຫ້າມ ແລະ ໃນລະດູການຫວງຫ້າມ, ຍົກເວັ້ນຈຸດປະສົງການເຄື່ອນໄຫວ ເພື່ອຄົ້ນຄວ້າທາງວິທະຍາສາດຕາມການຕົກລົງຂອງສອງຝ່າຍ.
4. ການລ້ຽງ, ການຂຸດຄົ້ນ, ການປ້ອງກັນ ແລະ ການພັດທະນາສັດນ້ຳປະເພດຕ່າງໆ ແລະ ຊັບພະຍາກອນອື່ນໆໃນເຂດນ້ຳຊາຍແດນໃຫ້ປະຕິບັດຕາມສັນຍາສະບັບນີ້ ແລະ ຂໍ້ຕົກລົງທີ່ກ່ຽວຂ້ອງຂອງສອງຝ່າຍ.

ມາດຕາ 13 ການກໍ່ສ້າງກິດຈະການ ທີ່ພົວພັນເຖິງເຂດນ້ຳຊາຍແດນ

1. ຫ້າມບໍ່ໃຫ້ຝ່າຍໃດຝ່າຍໜຶ່ງ ດຳເນີນການກໍ່ສ້າງກິດຈະການຕ່າງໆທີ່ເຮັດໃຫ້ພູມສັນຖານ, ແລວນ້ຳຊາຍແດນມີການປ່ຽນແປງ, ການຟື້ນຟູບັນດາກິດຈະການກໍ່ສ້າງທີ່ພົວພັນເຖິງ ຫຼື ເປັນຜົນສະທ້ອນຕໍ່ເຂດນ້ຳຊາຍແດນໃຫ້ປະຕິບັດຕາມຂໍ້ກຳນົດຢູ່ຂໍ້ 5 ມາດຕານີ້.
2. ເພື່ອຮັກສາສະພາບພູມປະເທດຕົວຈິງຢູ່ເຂດນ້ຳຊາຍແດນ, ຮັບປະກັນຄວາມປອດໄພແກ່ຊີວິດ, ຊັບສິນຂອງປະຊາຊົນ ແລະ ວຽກງານຕ້ານໄພນ້ຳຖ້ວມ, ສອງຝ່າຍສາມາດສ້າງໂຄງການປ້ອງກັນຕາຝັ່ງເຈື່ອນຕາມເຂດນ້ຳຊາຍແດນ ແຕ່ບໍ່ເຮັດໃຫ້ແລວນ້ຳມີການປ່ຽນແປງ ແລະ ບໍ່ສົ່ງຜົນກະທົບຕໍ່ຝັ່ງແມ່ນ້ຳ, ຫ້ວຍ ຂອງອີກປະເທດໜຶ່ງ.

3. ໃນກໍລະນີຈຳເປັນສອງຝ່າຍອາດກໍ່ສ້າງ, ຟື້ນຟູ ຫຼື ຍົກເລີກສະຖາປະນິກ ຫຼື ກິດຈະການ (ລວມທັງບັນດາກິດຈະການທີ່ຕັດຜ່ານເສັ້ນຊາຍແດນ) ຢູ່ເຂດນ້ຳຊາຍແດນແຕ່ບໍ່ເປັນຜົນກະທົບເຖິງການຂົນສົ່ງທາງນ້ຳ, ການປ່ອຍນ້ຳ ຫຼື ສິ່ງຜົນກະທົບທີ່ບໍ່ດີຕໍ່ລຳນ້ຳ, ຫ້ວຍ ແລະ ຝັ່ງແມ່ນ້ຳ.
4. ເພື່ອຮັບປະກັນການຂົນສົ່ງຢູ່ເຂດນ້ຳຊາຍແດນ ແລະ ທາງປ່ອຍນ້ຳ, ສອງຝ່າຍອາດຕົກລົງກັນດຳເນີນການຂຸດຕົມ, ດິນຢູ່ເຂດນ້ຳຊາຍແດນອອກ. ຕົມ, ດິນທີ່ເອົາອອກຈາກລຳນ້ຳ, ລຳຫ້ວຍຕ້ອງໄດ້ຮັບການແກ້ໄຂຢ່າງສົມເຫດສົມຜົນ ໂດຍຫຼີກລ້ຽງການສົ່ງຜົນກະທົບທີ່ບໍ່ດີຕໍ່ລຳນ້ຳ, ຫ້ວຍ, ຝັ່ງແມ່ນ້ຳ ແລະ ສະພາບແວດລ້ອມ.
5. ບັນດາກິດຈະການ ແລະ ໂຄງການ (ລວມທັງບັນດາໂຄງການສຳຫຼວດຊອກຄົ້ນ, ຂຸດຄົ້ນບັນດາແຫຼ່ງຜົນປະໂຫຍດເສດຖະກິດ ແລະ ບັນດາໂຄງການທີ່ມີຂອບເຂດກວ້າງຂວາງອື່ນໆ) ຢູ່ເຂດນ້ຳຊາຍແດນທີ່ກຳນົດໄວ້ໃນມາດຕານີ້ ຕ້ອງມີການປຶກສາຫາລື, ເປັນເອກະພາບຂອງອົງການທີ່ກ່ຽວຂ້ອງຂອງທັງສອງຝ່າຍ ພ້ອມກັນພິຈາລະນາ ແລະ ເປັນເອກະພາບກັນບົນພື້ນຖານການເຫັນດີຮ່ວມກັນຢ່າງເປັນລາຍລັກອັກສອນຂອງອົງການຊາຍແດນຂັ້ນສູນກາງຂອງສອງຝ່າຍ. ໃນໄລຍະດຳເນີນວຽກງານອົງການທີ່ກ່ຽວຂ້ອງ ແລະ ອົງການຊາຍແດນຂັ້ນສູນກາງສອງຝ່າຍອາດແຕ່ງຕັ້ງຜູ້ຕາງໜ້າຂອງຕົນກວດກາ, ຕິດຕາມໂດຍກົງຢູ່ພາກສະໜາມ.

ໃນກໍລະນີມີລຳນ້ຳ, ລຳຫ້ວຍຊາຍແດນທີ່ສົ່ງຜົນກະທົບຢ່າງຮຸນແຮງຕໍ່ພື້ນຖານໂຄງລ່າງ ຫຼື ຄວາມປອດໄພຕໍ່ຊີວິດຂອງປະຊາຊົນຂອງປະເທດໃດໜຶ່ງ, ອົງການກ່ຽວຂ້ອງຂອງປະເທດທີ່ຖືກຜົນກະທົບສາມາດກໍ່ສ້າງບັນດາກິດຈະການຊົ່ວຄາວ ເພື່ອຕ້ານ, ສະກັດກັ້ນຢ່າງຮີບດ່ວນພຽງຝ່າຍດຽວ, ຫຼັງຈາກນັ້ນ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບ, ພ້ອມກັນນັ້ນ ກໍລາຍງານຕໍ່ອົງການຊາຍແດນຂັ້ນສູນກາງຂອງປະເທດຕົນ ເພື່ອປຶກສາຫາລືກັບອົງການຊາຍແດນຂອງອີກປະເທດໜຶ່ງກ່ຽວກັບມາດຕະການແກ້ໄຂ.
6. ອົງການຊາຍແດນຂັ້ນສູນກາງຂອງສອງປະເທດ ຕ້ອງແລກປ່ຽນ ແລະ ປຶກສາຫາລືກັນຕາມການຮຽກຮ້ອງຂອງອີກຝ່າຍໜຶ່ງ ເພື່ອແກ້ໄຂບັນດາພຶດຕິກຳ ແລະ ການກໍ່ສ້າງບັນດາກິດຈະການຂອງອີກຝ່າຍໜຶ່ງຢູ່ເຂດນ້ຳຊາຍແດນທີ່ມີຄວາມສ່ຽງທີ່ອາດສົ່ງຜົນກະທົບເຖິງຜົນປະໂຫຍດຂອງປະເທດຕົນ ຫຼື ຜົນປະໂຫຍດລວມຂອງທັງສອງປະເທດ.

ມາດຕາ 14 ການຄົມມະນາຄົມຢູ່ເຂດນ້ຳຊາຍແດນ

1. ເຮືອແພ ຂອງທັງສອງປະເທດສາມາດໄປ-ມາ ຕາມແລວນ້ຳ ຫຼື ຕາມຄອງນ້ຳເລິກຂອງແມ່ນ້ຳລຳເຊຊາຍແດນ.

ຫ້າມຝ່າຍໃດຝ່າຍໜຶ່ງອະນຸຍາດໃຫ້ເຮືອແພຂອງປະເທດທີສາມ ຂ້າມຜ່ານໃນຂອບເຂດແມ່ນ້ຳລຳເຊຊາຍແດນ, ຍົກເວັ້ນກໍລະນີ ທີ່ສອງຝ່າຍໄດ້ຕົກລົງກັນຕ່າງຫາກ.
2. ທຸກບັນຫາທີ່ພົວພັນເຖິງການໄປ-ມາຂອງເຮືອແພ ຢູ່ເຂດນ້ຳຊາຍແດນຄືປະເພດເຮືອແພ, ຫຼັກການໄປ-ມາ, ເຄື່ອງໝາຍຊີ້ບອກແລວນ້ຳ, ຂີວ, ລະດັບເລິກຂອງນ້ຳ, ຂະໜາດກວ້າງຂອງເຮືອ ແລະ ອື່ນໆ ຕ້ອງປະຕິບັດຕາມການຕົກລົງຂອງອົງການກ່ຽວຂ້ອງຂອງທັງສອງຝ່າຍ.
3. ກໍລະນີເຮືອແພຈົມນ້ຳ ຫຼື ມີສິ່ງກີດຂວາງທີ່ສົ່ງຜົນກະທົບຕໍ່ການໄປ-ມາຂອງເຮືອແພຢູ່ເຂດນ້ຳຊາຍແດນ ອົງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງຂອງທັງສອງຝ່າຍຈະປຶກສາຫາລືກັນບົນຈິດໃຈມິດຕະພາບ ແລະ ແກ້ໄຂໃຫ້ທັນການ.
4. ກໍລະນີເຮືອແພ ປະເທດໃດໜຶ່ງເກີດອຸປະຕິເຫດ, ມີບັນຫາ ຍ້ອນເຫດຜົນໃດກໍຕາມ ລ້ວນແຕ່ໄດ້ຮັບອະນຸຍາດໃຫ້ເຂົ້າຈອດຢູ່ແຄມຝັ່ງ ຫຼື ດອນຂອງອີກປະເທດໜຶ່ງໄດ້, ແຕ່ຕ້ອງແຈ້ງໃຫ້ອົງການປົກຄອງທ້ອງຖິ່ນ ແລະ ກົມກອງຮັບຜິດຊອບປ້ອງກັນຊາຍແດນຂອງສອງຝ່າຍຊາບໂດຍດ່ວນ. ພາຍຫຼັງອົງການປົກຄອງທ້ອງຖິ່ນ ແລະ ກົມກອງຮັບຜິດຊອບປ້ອງກັນຊາຍແດນຂອງສອງປະເທດ ໄດ້ຮັບແຈ້ງຈາກເຈົ້າຂອງເຮືອແພທີ່ເກີດອຸບັດຕິເຫດ ຕ້ອງຕອບສະໜອງໃຫ້ການຊ່ວຍເຫຼືອອັນຈຳເປັນ.

ມາດຕາ 15 ການຮ່ວມມືວັດແທກພູມີປະເທດ ແລະ ອຸທົກກະສາດ

ການຄຸ້ມຄອງ, ການຂຸດຄົ້ນ ແລະ ນຳໃຊ້ເຂດນ້ຳຊາຍແດນຢ່າງມີປະສິດທິຜົນ, ສະກັດກັ້ນໄພທຳມະຊາດ ເຊັ່ນ: ນ້ຳຖ້ວມ, ການເຊາະເຈື່ອນ ແລະ ອື່ນໆ, ອົງການທີ່ກ່ຽວຂ້ອງຂອງສອງຝ່າຍ ຕ້ອງຮ່ວມມືກັນ ດັ່ງນີ້:

1. ດຳເນີນການສຳຫຼວດ-ວັດແທກພູມີປະເທດ, ອຸທົກກະສາດລຳນ້ຳ, ຫ້ວຍຊາຍແດນ;
2. ກໍລະນີຈຳເປັນ ຕ້ອງໄດ້ຮັບການເຫັນດີຈາກອົງການກ່ຽວຂ້ອງຂອງທັງສອງຝ່າຍ, ຝ່າຍໜຶ່ງອາດຕິດຕັ້ງ, ສ້ອມແປງ ແລະ ປົກປັກຮັກສາອຸປະກອນວັດແທກອຸທົກກະສາດທີ່ກະທັດລັດ ໂດຍບໍ່ມີຄົນຄວບຄຸມຢູ່ຝັ່ງຂອງອີກຝ່າຍໜຶ່ງ;
3. ດຳເນີນການແລກປ່ຽນຂໍ້ມູນຂ່າວສານທີ່ຈຳເປັນ ກ່ຽວກັບການບໍລິຫານບໍລິມາດນ້ຳ ແລະ ສະກັດກັ້ນໄພນ້ຳຖ້ວມ.

ໝວດທີ IV
ການຄຸ້ມຄອງການຜະລິດ ແລະ ການກໍ່ສ້າງຢູ່ເຂດຊາຍແດນ

ມາດຕາ 16 ການຄຸ້ມຄອງການຜະລິດຢູ່ບໍລິເວນຊາຍແດນ

1. ການດຳເນີນການຜະລິດທາງດ້ານອຸດສາຫະກຳ, ກະສິກຳ, ປ່າໄມ້, ແຮ່ທາດ ແລະ ອື່ນໆ ຢູ່ບໍລິເວນທີ່ຂຶ້ນກັບຂອບເຂດຊາຍແດນ. ການດຳເນີນການ ຕ້ອງບໍ່ສ້າງຜົນກະທົບຕໍ່ຜົນປະໂຫຍດຂອງອີກຝ່າຍໜຶ່ງ, ພ້ອມກັນນັ້ນ ໃຫ້ນຳໃຊ້ບັນດາມາດຕະການປ້ອງກັນສະພາບແວດລ້ອມລະບົບນິເວດວິທະຍາຢູ່ບໍລິເວນຊາຍແດນ.
2. ອົງການກ່ຽວຂ້ອງຂອງສອງຝ່າຍ ຕ້ອງດຳເນີນການຕິດຕາມກວດກາການເຄື່ອນໄຫວການຜະລິດຢູ່ບໍລິເວນທີ່ຂຶ້ນກັບຂອບເຂດຊາຍແດນ ແລະ ແຈ້ງໃຫ້ກັນຊາບ ໂດຍຜ່ານທາງການທູດ ກ່ຽວກັບວັນເວລາ ແລະ ສະຖານທີ່ອັນລະອຽດທີ່ຈະມີການເຄື່ອນໄຫວຂອງຕົນທີ່ອາດສົ່ງຜົນກະທົບເຖິງຜົນປະໂຫຍດຂອງອີກຝ່າຍໜຶ່ງ.
3. ກໍລະນີມີຄວາມຈຳເປັນທີ່ຈະສຳຫຼວດທໍລະນີສາດ ແລະ ແຮ່ທາດໃນຂອບເຂດທີ່ຫ່າງຈາກເສັ້ນຊາຍແດນ 500 (ຫ້າຮ້ອຍ) ແມັດ ເຂົ້າໄປຫາເບື້ອງປະເທດຕົນ, ຝ່າຍທີ່ດຳເນີນການຕ້ອງແຈ້ງ ແລະ ປຶກສາຫາລືກັບອີກຝ່າຍໜຶ່ງລ່ວງໜ້າກ່ອນບົນພື້ນຖານເຄົາລົບອຳນາດອະທິປະໄຕ, ຜົນປະໂຫຍດຊຶ່ງກັນ ແລະ ກັນ ໂດຍສອດຄ່ອງກັບເງື່ອນໄຂ ແລະ ສະພາບຕົວຈິງ.
4. ຖ້າວ່າກໍລະນີຝ່າຍໃດຝ່າຍໜຶ່ງ ມີຄວາມຈຳເປັນຕ້ອງນຳໃຊ້ລະເບີດໃນຂອບເຂດ 2.000 (ສອງພັນ) ແມັດ ເລີ່ມແຕ່ເສັ້ນຊາຍແດນເຂົ້າໄປຫາເບື້ອງຂອງປະເທດຕົນ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບລ່ວງໜ້າກ່ອນ ໂດຍຜ່ານທາງການທູດຢ່າງໜ້ອຍ 48 (ສີ່ສິບແປດ) ຊົ່ວໂມງ, ພ້ອມກັນນັ້ນໃຫ້ນຳໃຊ້ມາດຕະການສະກັດກັ້ນຜົນເສັຍຫາຍອາດເກີດຂຶ້ນຕໍ່ຊີວິດ, ຊັບສິນຂອງພົນລະເມືອງ ແລະ ຜົນປະໂຫຍດຂອງອີກປະເທດໜຶ່ງ.

ມາດຕາ 17 ການຄຸ້ມຄອງການລ້ຽງສັດຢູ່ບໍລິເວນຊາຍແດນ

1. ອົງການປົກຄອງຂັ້ນບ້ານສຳລັບຝ່າຍລາວ, ຂັ້ນຕາແສງສຳລັບຝ່າຍຫວຽດນາມ ແລະ ກົມກອງຮັບຜິດຊອບປ້ອງກັນຊາຍແດນຂອງທັງສອງຝ່າຍ ຕ້ອງນຳໃຊ້ບັນດາມາດຕະການຕິດຕາມກວດກາ, ຄຸ້ມຄອງການປ່ອຍສັດລ້ຽງຢູ່ເຂດຊາຍແດນ, ຫຼີກລ້ຽງບໍ່ໃຫ້ສັດລ້ຽງຂອງຕົນເຂົ້າໄປໃນດິນແດນຂອງອີກປະເທດໜຶ່ງ.
2. ເມື່ອພົບເຫັນສັດລ້ຽງ ເຂົ້າໄປໃນດິນແດນຂອງອີກປະເທດໜຶ່ງ, ອົງການປົກຄອງທ້ອງຖິ່ນຂັ້ນບ້ານ, ຕາແສງ ແລະ ກົມກອງຮັບຜິດຊອບປ້ອງກັນຊາຍແດນຂອງສອງຝ່າຍ ຕ້ອງແຈ້ງໃຫ້ກັນຊາບຢ່າງທັນການ ແລະ ນຳໃຊ້ມາດຕະການຊອກຫາ, ເບິ່ງແຍງຮັກສາ. ພ້ອມກັນນັ້ນກໍ່ມອບຄືນໃຫ້ອີກຝ່າຍໜຶ່ງໂດຍໄວ ຫ້າມນຳໃຊ້, ບໍ່ໃຫ້ປິດບັງ, ຂ້າ, ຂາຍ ຫຼື ດ້ວຍບັນດາຮູບການຍຶດມາເປັນກຳມະສິດອື່ນໆ ສຳລັບສັດລ້ຽງ.

ບົດບັນທຶກການມອບ-ຮັບສັດລ້ຽງຂ້າມຊາຍແດນ (ຕາມແບບຟອມມີຢູ່ໃນເອກະສານຊ້ອນທ້າຍ 5).

ມາດຕາ 18 ການປ້ອງກັນພະຍາດລະບາດ, ບັນຫາສຸຂະພາບຊຸມຊົນ, ໄພພິບັດ, ອັກຄີໄພຢູ່ເຂດຊາຍແດນ

1. ໃນກໍລະນີເກີດມີພະຍາດລະບາດທີ່ສາມາດຕິດຕໍ່ຄົນ, ສັດ, ສັດຕູພືດ ແລະ ສັດທີ່ເປັນອັນຕະລາຍອື່ນໆ ຫຼື ບັນຫາສຸຂະພາບຊຸມຊົນຢູ່ເຂດຊາຍແດນຂອງຝ່າຍໃດໜຶ່ງ, ອົງການປົກຄອງທ້ອງຖິ່ນຂັ້ນແຂວງທີ່ມີຊາຍແດນຮ່ວມກັນ ແລະ ອົງການທີ່ກ່ຽວຂ້ອງຂອງຝ່າຍພົບເຫັນນັ້ນ ຕ້ອງແຈ້ງໃຫ້ອົງການປົກຄອງຂັ້ນແຂວງຊາຍແດນຮ່ວມກັນ ແລະ ອົງການທີ່ກ່ຽວຂ້ອງອີກຝ່າຍໜຶ່ງຊາບໂດຍດ່ວນ, ພ້ອມກັນນັ້ນ ກໍຕ້ອງດຳເນີນມາດຕະການທີ່ຈຳເປັນ ເພື່ອສະກັດກັ້ນພະຍາດ ຫຼື ບັນຫາສຸຂະພາບຊຸມຊົນດັ່ງກ່າວ. ອົງການປົກຄອງທ້ອງຖິ່ນຂັ້ນແຂວງທີ່ມີຊາຍແດນຮ່ວມກັນ ແລະ ອົງການກ່ຽວຂ້ອງຂອງຝ່າຍ ທີ່ໄດ້ຮັບແຈ້ງການມີໜ້າທີ່ປະສານສົມທົບ ແລະ ໃຫ້ການສະໜັບສະໜູນຢ່າງຕັ້ງໜ້າ ແລະ ທັນການ ເພື່ອສະກັດກັ້ນພະຍາດລະບາດ, ພະຍາດຕິດແປດ ຫຼື ສັດຕູພືດທີ່ເປັນອັນຕະລາຍ ຫຼື ບັນຫາສຸຂະພາບຊຸມຊົນ ທີ່ກ່າວມາຂ້າງເທິງ.
2. ອົງການປົກຄອງທ້ອງຖິ່ນຂັ້ນແຂວງທີ່ມີຊາຍແດນຮ່ວມກັນ ແລະ ອົງການທີ່ກ່ຽວຂ້ອງຂອງທັງສອງຝ່າຍຕ້ອງເພີ່ມທະວີການຮ່ວມມືສະກັດກັ້ນ, ຕ້ານພະຍາດລະບາດ, ພະຍາດຕິດແປດ ຫຼື ບັນຫາສຸຂະພາບຊຸມຊົນ ທີ່ລະບຸຢູ່ໃນຂໍ້ 1 ຂອງມາດຕານີ້ ເພື່ອບໍ່ໃຫ້ແຜ່ລາມຂ້າມຜ່ານຊາຍແດນ.
3. ກໍລະນີຈຳເປັນອົງການປົກຄອງທ້ອງຖິ່ນຂັ້ນແຂວງທີ່ມີຊາຍແດນຮ່ວມກັນ ແລະ ອົງການທີ່ກ່ຽວຂ້ອງຂອງສອງຝ່າຍ ສາມາດດຳເນີນການແລກປ່ຽນ ກ່ຽວກັບບັນດາມາດຕະການ ເພື່ອປ້ອງກັນ ແລະ ສະກັດກັ້ນໄຟປ່າ ແລະ ສະກັດກັ້ນພະຍາດລະບາດ, ພະຍາດຕິດແປດ ຫຼື ບັນຫາສຸຂະພາບຊຸມຊົນທີ່ລະບຸໃນຂໍ້ 1 ຂອງມາດຕານີ້ ເພື່ອບໍ່ໃຫ້ແຜ່ລາມຂ້າມຜ່ານຊາຍແດນ.
4. ກໍລະນີເກີດມີໄພທຳມະຊາດ (ໄພນ້ຳຖ້ວມ, ດິນຖະຫຼົ່ມ, ໄຟປ່າ ແລະ ອື່ນໆ) ຢູ່ເຂດຊາຍແດນ, ຝ່າຍທີ່ຖືກໄພພິບັດຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບດ່ວນ ແລະ ນຳໃຊ້ມາດຕະການສະກັດກັ້ນໄພພິບັດທີ່ຈະແຜ່ລາມເຂົ້າໄປໃນດິນແດນຂອງອີກຝ່າຍໜຶ່ງ. ເມື່ອໄດ້ຮັບແຈ້ງການຂໍຄວາມຊ່ວຍເຫຼືອຈາກຝ່າຍຖືກໄພພິບັດ, ຝ່າຍທີ່ຮັບແຈ້ງການຕ້ອງໃຫ້ການຊ່ວຍເຫຼືອກູ້ໄພພິບັດຂ້າມຊາຍແດນຢ່າງທັນການ.
5. ໃນກໍລະນີເກີດມີຄົນຕິດພະຍາດ ຫຼື ເກີດອຸປະຕິເຫດຮ້າຍແຮງໃນເຂດຊາຍແດນ, ພົນລະເມືອງຂອງປະເທດໜຶ່ງຢູ່ເຂດຊາຍແດນອາດຕິດຕໍ່ໂດຍກົງກັບສຸກສາລາຂອງອີກປະເທດໜຶ່ງ ເພື່ອຂໍຄວາມຊ່ວຍເຫຼືອສຸກເສີນ. ພ້ອມກັນນັ້ນ ຕ້ອງລາຍງານຕໍ່ອົງການປົກຄອງ, ອົງການກ່ຽວຂ້ອງຂອງຝ່າຍຕົນຊາບດ່ວນ ເພື່ອປະຕິບັດດ້ານລະບຽບການອັນຈຳເປັນກັບອົງການປົກຄອງ ແລະ ອົງການກ່ຽວຂ້ອງຂອງອີກຝ່າຍໜຶ່ງ.

ມາດຕາ 19 ການຄຸ້ມຄອງການເຄື່ອນໄຫວທາງອາກາດ

1. ກໍລະນີຝ່າຍໃດຝ່າຍໜຶ່ງ ດຳເນີນການຖ່າຍພາບທາງອາກາດ ແລະ ນຳໃຊ້ເຄື່ອງບິນອື່ນໆຖ່າຍພາບດ້ວຍເປົ້າໝາຍອັດແທກ, ຊອກຄົ້ນໃນຂອບເຂດ 10 (ສິບ) ກິໂລແມັດ ເລີ່ມແຕ່ເສັ້ນຊາຍແດນເຂົ້າມາທາງປະເທດຕົນ, ປະເທດດຳເນີນການຕ້ອງແຈ້ງໃຫ້ອີກປະເທດໜຶ່ງຊາບລ່ວງໜ້າຢ່າງໜ້ອຍ 30 (ສາມສິບ) ວັນ ໂດຍຜ່ານທາງການທູດ (ຕາມແບບຟອມມີຢູ່ໃນເອກະສານຊ້ອນທ້າຍ 6).
2. ຖ້າມີຄວາມຈຳເປັນ ທີ່ຕ້ອງບິນເຂົ້າໄປນ່ານຟ້າຂອງອີກຝ່າຍໜຶ່ງໃນຂອບເຂດ 10 (ສິບ) ກິໂລແມັດ, ຝ່າຍດຳເນີນການຕ້ອງຂໍອະນຸຍາດນຳອີກຝ່າຍໜຶ່ງຊາບໂດຍຜ່ານທາງການທູດ ລ່ວງໜ້າຢ່າງໜ້ອຍ 45 (ສີ່ສິບຫ້າ) ວັນ (ຕາມແບບຟອມຢູ່ໃນເອກະສານຊ້ອນທ້າຍ 7), ຝ່າຍທີ່ໄດ້ຮັບແຈ້ງຕ້ອງໃຫ້ຄຳຕອບ ໂດຍຜ່ານທາງການທູດຢ່າງຊ້າ 10 (ສິບ) ວັນ ກ່ອນການບິນຕາມແຜນການທີ່ສະເໜີ.

3. ຂໍ້ກຳນົດຂ້າງເທິງ ບໍ່ນຳໃຊ້ເຂົ້າໃນການເຄື່ອນໄຫວທາງອາກາດ ທີ່ສອງຝ່າຍໄດ້ມີຂໍ້ຕົກລົງກັນ ຫຼື ການເຄື່ອນໄຫວຊອກຫາ, ກູ້ໄພຮ່ວມກັນ ຕາມການສະເໜີຂອງອີກຝ່າຍໜຶ່ງ.

ມາດຕາ 20 ການກໍ່ສ້າງກິດຈະການຢູ່ບໍລິເວນຊາຍແດນ

1. ການກໍ່ສ້າງກິດຈະການຢູ່ບໍລິເວນຊາຍແດນ ຕ້ອງຮັບປະກັນໃຫ້ຫ່າງຈາກເສັ້ນຊາຍແດນຢ່າງໜ້ອຍ 100 (ໜຶ່ງຮ້ອຍ) ແມັດ ເລີ່ມແຕ່ເສັ້ນຊາຍແດນເຂົ້າໄປຫາແຕ່ລະປະເທດ.
2. ກໍລະນີທີ່ມີຄວາມຈຳເປັນ ຕ້ອງກໍ່ສ້າງກິດຈະການໃນຂອບເຂດ 100 (ໜຶ່ງຮ້ອຍ) ແມັດ ຫ່າງຈາກເສັ້ນຊາຍແດນ ອົງການປົກຄອງທ້ອງຖິ່ນຂັ້ນແຂວງທີ່ມີຊາຍແດນຮ່ວມກັນ ຫຼື ອົງການກ່ຽວຂ້ອງຂອງສອງຝ່າຍ ຕ້ອງປຶກສາຫາລືເປັນເອກະພາບກັນບົນພື້ນຖານເຄົາລົບອະທິປະໄຕ, ຜົນແຜ່ນດິນອັນຄົບຖ້ວນ ແລະ ຜົນປະໂຫຍດຂອງກັນແລະ ກັນ ໂດຍສອດຄ່ອງກັບເງື່ອນໄຂ ແລະ ພື້ນທີ່ຕົວຈິງ ແລ້ວລາຍງານເປັນລາຍລັກອັກສອນ ກ່ຽວກັບສະຖານທີ່, ແຜນຜັງ, ເວລາປະຕິບັດການກໍ່ສ້າງກິດຈະການ ແລ້ວລາຍງານໃຫ້ອົງການຊາຍແດນສູນກາງຂອງຕົນ ເພື່ອນຳສະເໜີຂັ້ນເທິງທີ່ມີສິດອຳນາດຂອງແຕ່ລະຝ່າຍພິຈາລະນາ ແລະ ແຈ້ງຜົນຂອງການພິຈາລະນາໃຫ້ກັນຊາບ ໂດຍຜ່ານທາງການທູດໂດຍໄວ.

ມາດຕາ 21 ການກໍ່ສ້າງ, ການປັບປຸງ ແລະ ການຄຸ້ມຄອງກິດຈະການຕັດຜ່ານເສັ້ນຊາຍແດນ

1. ກ່ອນດຳເນີນການກໍ່ສ້າງປັບປຸງບັນດາກິດຈະການທີ່ຕັດຜ່ານເສັ້ນຊາຍແດນ ສອງຝ່າຍຕ້ອງຕົກລົງເປັນລາຍລັກອັກສອນ ກ່ຽວກັບຈຸດທີ່ຕັ້ງ, ການອອກແບບ, ໂຄງປະກອບ, ກຳນົດເວລາ ແລະ ງົບປະມານການກໍ່ສ້າງກິດຈະການ.
2. ຂອບເຂດການຄຸ້ມຄອງຂົວທີ່ຕັດຜ່ານເສັ້ນຊາຍແດນຢູ່ເຂດນ້ຳຊາຍແດນໃຫ້ຖືເອົາເສັ້ນແບ່ງເຄິ່ງກາງຂອງຂົວ ແລະ ແຕ່ລະປະເທດຄຸ້ມຄອງ ເລີ່ມແຕ່ຈຸດນັ້ນໄປເບື້ອງປະເທດຕົນ.
3. ຂອບເຂດການຄຸ້ມຄອງຂອງບັນດາກິດຈະການ ທີ່ຕັດຜ່ານເສັ້ນຊາຍແດນ ທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງມາດຕານີ້ ແມ່ນໜ້າຕັດຕັ້ງສາກຕາມເສັ້ນຊາຍແດນຜ່ານກິດຈະການນັ້ນ, ຍົກເວັ້ນກໍລະນີທີ່ສອງຝ່າຍໄດ້ຕົກລົງກັນຕ່າງຫາກ.
4. ການສ້ອມແປງບຳລຸງຮັກສາບັນດາກິດຈະການຕັດເສັ້ນຊາຍແດນ ໃນຂອບເຂດຄຸ້ມຄອງຂອງຝ່າຍໜຶ່ງ ຕ້ອງໄດ້ແຈ້ງລ່ວງໜ້າກ່ອນໃຫ້ອີກຝ່າຍໜຶ່ງ ໂດຍຜ່ານທາງການທູດ ກ່ຽວກັບວັນເວລາ, ເນື້ອໃນການສ້ອມແປງ, ການບຳລຸງຮັກສາ. ຝ່າຍທີ່ດຳເນີນການສ້ອມແປງບຳລຸງຮັກສາ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບ ພາຍຫຼັງສຳເລັດການສ້ອມແປງບຳລຸງຮັກສາ ກ່ຽວກັບວຽກງານດັ່ງກ່າວ, ງົບປະມານການສ້ອມແປງບຳລຸງຮັກສາກິດຈະການຂຶ້ນກັບປະເທດໃດແມ່ນປະເທດນັ້ນຮັບຜິດຊອບ.

ມາດຕາ 22 ການຮ່ວມມືເພື່ອການພັດທະນາດ້ານເສດຖະກິດ, ວັດທະນາທຳ-ສັງຄົມ ແລະ ທ່ອງທ່ຽວຢູ່ຕາມບໍລິເວນຊາຍແດນ

1. ສອງຝ່າຍຊຸກຍູ້ສົ່ງເສີມໃຫ້ມີການຮ່ວມມືເພື່ອການພັດທະນາດ້ານເສດຖະກິດ, ວັດທະນາທຳ-ສັງຄົມ ແລະ ທ່ອງທ່ຽວຢູ່ຕາມບໍລິເວນຊາຍແດນຢ່າງຕັ້ງໜ້າຕາມກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ ແລະ ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງທີ່ສອງປະເທດເປັນພາຄີ.
2. ເພີ່ມທະວີການຮ່ວມມື, ນຳໃຊ້ບັນດາມາດຕະການອັນຈຳເປັນ ເພື່ອຕິດຕາມກວດກາ, ສະກັດກັ້ນ ແລະ ແກ້ໄຂຢ່າງເດັດຂາດຕໍ່ການສໍ້ໂກງ, ການຄ້າຂາຍເຖື່ອນ, ການຄ້າຂາຍສັດປ່າ ແລະ ພືດທີ່ເກືອດຫ້າມ, ຫ້າມນຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ວັດຖຸທີ່ເກືອດຫ້າມ.

ໝວດທີ V
ການເຂົ້າ-ອອກຜ່ານແດນ ແລະ ພັກເຊົາ ຢູ່ບໍລິເວນຊາຍແດນ

ມາດຕາ 23 ການເຂົ້າ-ອອກເມືອງ ສຳລັບພົນລະເມືອງ

1. ຜູ້ເຂົ້າ-ອອກເມືອງ ຕ້ອງມີເອກະສານໃດໜຶ່ງດັ່ງນີ້:
   ກ. ໜັງສືຜ່ານແດນ ຫຼື ເອກະສານເດີນທາງທີ່ໃຊ້ແທນໜັງສືຜ່ານແດນ ທີ່ຍັງມີຜົນບັງຄັບໃຊ້ (ສຳລັບຫວຽດນາມ ຍັງມີເອກະສານເດີນທາງສາກົນ);
   ຂ. ປຶ້ມຜ່ານແດນ;
   ຄ. ໃບຜ່ານແດນ (ແບບຟອມໃບຜ່ານແດນມີຢູ່ໃນເອກະສານຊ້ອນທ້າຍ 8);
   ງ. ເອກະສານອື່ນໆທີ່ສອງຝ່າຍຕົກລົງກັນ.
2. ສອງຝ່າຍແຈ້ງໃຫ້ກັນຊາບ ກ່ຽວກັບຮູບແບບໃບເດີນທາງເຂົ້າ-ອອກເມືອງປະເພດຕ່າງໆ ຫຼື ການປ່ຽນແປງຮູບແບບເອກະສານເຂົ້າ-ອອກເມືອງ ທີ່ລະບຸຢູ່ໃນຂໍ້ 1 ຂອງມາດຕານີ້ ແລະ ອົງການທີ່ມີສິດອຳນາດອອກເອກະສານເຂົ້າ-ອອກເມືອງຜ່ານດ່ານຊາຍແດນ ໂດຍຜ່ານທາງການທູດ.
3. ລະບຽບການເຂົ້າ-ອອກເມືອງ ສຳລັບພົນລະເມືອງໃຫ້ປະຕິບັດຕາມຂໍ້ກຳນົດດັ່ງນີ້:
   ກ. ພົນລະເມືອງຂອງສອງປະເທດທີ່ຖືໜັງສືຜ່ານແດນ ຫຼື ເອກະສານໃຊ້ແທນໜັງສືຜ່ານແດນທີ່ຍັງມີຜົນບັງຄັບໃຊ້ສາມາດເຂົ້າ-ອອກເມືອງຜ່ານດ່ານສາກົນ, ດ່ານທ້ອງຖິ່ນ ທີ່ກຳນົດໄວ້ໃນມາດຕາ 31 ຂອງສົນຍາສະບັບນີ້;
   ຂ. ພົນລະເມືອງຂອງບັນດາແຂວງຊາຍແດນ ລາວ-ຫວຽດນາມ ຫຼື ພົນລະເມືອງທີ່ພວມເຮັດວຽກຢູ່ບັນດາອົງການຈັດຕັ້ງຢູ່ແຂວງຊາຍແດນ ລາວ-ຫວຽດນາມ ທີ່ຖືປຶ້ມຜ່ານແດນ, ໃບຜ່ານແດນ ສາມາດເຂົ້າ-ອອກເມືອງຜ່ານບັນດາດ່ານຊາຍແດນ ລາວ-ຫວຽດນາມ;
   ຄ. ປະຊາຊົນຊາຍແດນທີ່ຖືເອກະສານທີ່ສອງຝ່າຍໄດ້ຕົກລົງກັນສາມາດເຂົ້າ-ອອກເມືອງຜ່ານດ່ານຊາຍແດນ ລາວ-ຫວຽດນາມ ບ່ອນທີ່ໃກ້ສຸດຢູ່ບໍລິເວນຊາຍແດນຂອງອີກຝ່າຍໜຶ່ງ;
   ງ. ກໍລະນີພິເສດ ການເຂົ້າ-ອອກເມືອງ ຕາມບໍລິເວນຊາຍແດນ ລາວ-ຫວຽດນາມ ໃຫ້ປະຕິບັດຕາມການຕົກລົງຂອງຂະແໜງການທີ່ກ່ຽວຂ້ອງຂອງສອງປະເທດ;
   ຈ. ພົນລະເມືອງປະເທດທີສາມ ເຂົ້າ-ອອກເມືອງຜ່ານບັນດາດ່ານສາກົນ ຕ້ອງມີໜັງສືຜ່ານແດນ ຫຼື ເອກະສານໃຊ້ແທນໜັງສືຜ່ານແດນ ທີ່ຍັງມີຜົນບັງຄັບໃຊ້ (ສຳລັບຫວຽດນາມ ຍັງມີເອກະສານເດີນທາງສາກົນ) ແລະ ມີວີຊາທີ່ຖືກຕ້ອງຂອງອົງການທີ່ມີສິດອຳນາດຂອງສອງຝ່າຍອອກໃຫ້, ຍົກເວັ້ນພົນລະເມືອງຂອງບັນດາປະເທດທີ່ໄດ້ເຊັນສັນຍາຍົກເວັ້ນວີຊານຳກັນ;
   ສ. ຜູ້ທີ່ເຂົ້າ-ອອກເມືອງ ຕ້ອງປະຕິບັດຕາມກົດໝາຍພາຍໃນທີ່ກ່ຽວຂ້ອງຂອງແຕ່ລະປະເທດ.

ມາດຕາ 24 ການເຂົ້າ-ອອກເມືອງຜ່ານແດນສຳລັບຍານພາຫະນະ

1. ຍານພາຫະນະຂອງສອງປະເທດທີ່ເຂົ້າ-ອອກຜ່ານດ່ານຊາຍແດນ ລາວ-ຫວຽດນາມ ຕ້ອງມີເອກະສານຄົບຖ້ວນ ແລະ ປະຕິບັດຂັ້ນຕອນຕາມລະບຽບການທີ່ໄດ້ກຳນົດໄວ້ໃນກົດໝາຍຂອງແຕ່ລະປະເທດ ກ່ຽວກັບການເຂົ້າ-ອອກຜ່ານແດນ ສຳລັບຍານພາຫະນະ, ບັນດາສົນຍາ ກ່ຽວກັບການຄົມມະນາຄົມ ແລະ ຂົນສົ່ງທາງບົກ ລະຫວ່າງສອງຝ່າຍ ແລະ ຫຼາຍຝ່າຍ ແລະ ບັນດາສົນທິສັນຍາສາກົນອື່ນໆທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ.
2. ຍານພາຫະນະຂອງປະເທດທີສາມ ເມື່ອເຂົ້າ-ອອກຜ່ານດ່ານສາກົນ ຕ້ອງມີເອກະສານຄົບຖ້ວນ ແລະ ປະຕິບັດຂັ້ນຕອນຕາມລະບຽບການທີ່ໄດ້ກຳນົດໄວ້ໃນກົດໝາຍຂອງແຕ່ລະປະເທດ ລາວ ແລະ ຫວຽດນາມ ກ່ຽວກັບການ

ເຂົ້າ-ອອກຜ່ານແດນ ສຳລັບຍານພາຫະນະ, ບັນດາສັນຍາ ກ່ຽວກັບການຄົມມະນາຄົມ ແລະ ຂົນສົ່ງທາງບົກ ລະຫວ່າງ ສອງຝ່າຍ ແລະ ຫຼາຍຝ່າຍ ແລະ ບັນດາສົນທິສັນຍາສາກົນອື່ນໆທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ.

3. ນອກຈາກບັນດາເອກະສານທີ່ກຳນົດໃນຂໍ້ 1 ຂອງມາດຕາ 23, ຜູ້ຂັບຂີ່ຍານພາຫະນະຕ້ອງມີໃບອະນຸຍາດຂັບຂີ່ ຕາມກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ ແລະ ບັນດາສັນຍາ ກ່ຽວກັບການຄົມມະນາຄົມ ແລະ ຂົນສົ່ງທາງບົກ ລະຫວ່າງ ສອງຝ່າຍ ແລະ ຫຼາຍຝ່າຍ ແລະ ບັນດາສົນທິສັນຍາສາກົນອື່ນໆທີ່ກ່ຽວຂ້ອງ ທີ່ສອງ ປະເທດເປັນພາຄີ.

ມາດຕາ 25 ການນຳເຂົ້າ-ສົ່ງອອກສິນຄ້າ ແລະ ວັດຖຸພັນ

ການນຳເຂົ້າ ແລະ ສົ່ງອອກສິນຄ້າ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ ແລະ ສັນຍາການຄ້າສອງຝ່າຍ ແລະ ຫຼາຍຝ່າຍ ແລະ ບັນດາສົນທິສັນຍາສາກົນ ທີ່ສອງປະເທດເປັນພາຄີ.

ສຳລັບການນຳເຂົ້າ-ສົ່ງອອກວັດຖຸພັນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ.

ມາດຕາ 26 ສິດ ແລະ ພັນທະຂອງຜູ້ເຂົ້າ-ອອກເມືອງຜ່ານແດນ

1. ພົນລະເມືອງຂອງສອງປະເທດ ຫຼື ພົນລະເມືອງຂອງປະເທດທີສາມ ເຂົ້າ-ອອກເມືອງຜ່ານດ່ານຊາຍແດນສອງ ປະເທດຕ້ອງປະຕິບັດຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ຢູ່ໃນຂໍ້ 1 ແລະ ຂໍ້ 3 ມາດຕາ 23 ຂອງສັນຍາສະບັບນີ້, ບັນດາ ຂໍ້ກຳນົດກົດໝາຍຂອງແຕ່ລະປະເທດ ແລະ ສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ.
2. ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ເຂົ້າ-ອອກເມືອງ ທີ່ລະບຸໃນຂໍ້ 1 ຂອງມາດຕານີ້ ເມື່ອຢູ່ດິນແດນຂອງ ປະເທດທີ່ຕົນເຂົ້າມາຈະໄດ້ຮັບການເຄົາລົບນັບຖື ແລະ ປົກປ້ອງຕາມກົດໝາຍຂອງປະເທດນັ້ນຕາມປະເພນີ ແລະ ກົດໝາຍສາກົນ.
3. ກໍລະນີໜັງສືຜ່ານແດນ, ປຶ້ມຜ່ານແດນ, ໃບຜ່ານແດນ ຫຼື ເອກະສານເດີນທາງອື່ນໆ ຖືກເສັຍຫາຍຢູ່ດິນແດນທີ່ ຕົນເຂົ້າມາ, ຜູ້ທີ່ເຮັດເອກະສານເສັຍຫາຍ ຕ້ອງລາຍງານໃຫ້ອົງການທີ່ມີສິດອຳນາດຂອງປະເທດທີ່ຕົນເຂົ້າມາ. ອົງ ການທີ່ມີສິດອຳນາດຂອງປະເທດນັ້ນ ມີໜ້າທີ່ດຳເນີນລະບຽບການເອກະສານທາງການ ເພື່ອຢັ້ງຢືນການເສັຍຫາຍ ໜັງສືຜ່ານແດນ, ປຶ້ມຜ່ານແດນ, ໃບຜ່ານແດນ ຫຼື ເອກະສານເດີນທາງອື່ນໆ ແລະ ອຳນວຍຄວາມສະດວກໃຫ້ ຜູ້ກ່ຽວເດີນທາງອອກຈາກປະເທດໂດຍໄວ.

ມາດຕາ 27 ການເຂົ້າ-ອອກ ແລະ ການພັກເຊົາຊົ່ວຄາວ ຢູ່ບໍລິເວນຊາຍແດນ

1. ຄົນເຂົ້າ-ອອກເມືອງຜ່ານດ່ານມາພັກເຊົາຊົ່ວຄາວ ປະຈຳຢູ່ຕາມເຂດຊາຍແດນຂອງປະເທດໃດ ຕ້ອງເຄົາລົບນັບຖື ແລະ ປະຕິບັດບັນດາກົດໝາຍຂອງປະເທດນັ້ນ, ຂໍ້ກຳນົດຂອງສັນຍາສະບັບນີ້ ແລະ ບັນດາສົນທິສັນຍາສາກົນທີ່ ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ.
2. ຄົນເຂົ້າ-ອອກເມືອງບໍລິເວນຊາຍແດນຂອງແຕ່ລະປະເທດ ຕ້ອງມີເອກະສານເຂົ້າ-ອອກເມືອງທີ່ມີຜົນບັງຄັບໃຊ້; ຖ້າພັກເຊົາຄ້າງຄືນ ຕ້ອງແຈ້ງການພັກເຊົາຊົ່ວຄາວນຳຕຳຫຼວດຂັ້ນຮາກຖານບ່ອນທີ່ຕົນພັກເຊົາຊົ່ວຄາວ ຫຼື ກົມ ກອງຮັບຜິດຊອບປ້ອງກັນຊາຍແດນບ່ອນໃກ້ສຸດ; ກໍລະນີພັກເຊົາຄ້າງຄືນຢູ່ລຽບຕາມຂອບເຂດຊາຍແດນ ຕ້ອງແຈ້ງ ໃຫ້ກົມກອງຮັບຜິດຊອບປ້ອງກັນຊາຍແດນບ່ອນນັ້ນຊາບ.
3. ປະຊາຊົນຊາຍແດນຂອງປະເທດໜຶ່ງ (ກໍລະນີບໍ່ນຳໃຊ້ໜັງສືຜ່ານແດນ, ປຶ້ມຜ່ານແດນ ແລະ ໃບຜ່ານແດນ) ຖ້າ ຢາກພັກເຊົາຢູ່ບໍລິເວນຊາຍແດນຂອງອີກປະເທດໜຶ່ງເກີນ 7 (ເຈັດ) ວັນ ຕ້ອງຂໍອະນຸຍາດຈາກເຈົ້າໜ້າທີ່ຕຳຫຼວດ ທີ່ມີສິດອຳນາດບ່ອນທີ່ໃກ້ສຸດ (ສຳລັບລາວ), ຂັ້ນຕາແສງ (ສຳລັບຫວຽດນາມ ຫຼື ຈາກກອງຮັບຜິດຊອບປ້ອງກັນ

ຊາຍແດນທີ່ຢູ່ໃກ້ສຸດບ່ອນທີ່ຕົນພັກເຊົາໃນປະເທດທີ່ຕົນເຂົ້າມາພັກເຊົາ) ໃນກໍລະນີມີຄວາມຈຳເປັນຢາກຕໍ່ອາຍຸໃນການພັກເຊົາຊົ່ວຄາວ ອະນຸຍາດຕໍ່ໃຫ້ 2 (ສອງ) ຄັ້ງ ແຕ່ລະຄັ້ງບໍ່ໃຫ້ເກີນ 7 (ເຈັດ) ວັນ.

4. ການພັກເຊົາຊົ່ວຄາວຂອງພະນັກງານຮັບໃຊ້ການຂົນສົ່ງທາງບົກ, ທາງນ້ຳ, ທາງລົດໄຟ ແລະ ອື່ນໆຂອງສອງປະເທດ ທີ່ໄປ-ມາຜ່ານຊາຍແດນ ລະຫວ່າງ ສອງປະເທດ ໃຫ້ປະຕິບັດຕາມຂໍ້ຕົກລົງທີ່ກ່ຽວຂ້ອງ ລະຫວ່າງ ສອງຝ່າຍ.

ໝວດທີ VI

ການປົກປັກຮັກສາ, ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມຢູ່ເຂດຊາຍແດນ

ມາດຕາ 28 ການຈຳກັດ ຫຼື ຢຸດຕິຊົ່ວຄາວການໄປ-ມາຜ່ານຊາຍແດນ

1. ເພື່ອຮັບປະກັນຜົນປະໂຫຍດ, ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມຢູ່ເຂດຊາຍແດນ, ບັນຫາສຸຂະພາບຊຸມຊົນ, ຕ້ານພະຍາດຕິດຕໍ່ຄົນ, ສັດ, ພືດ ແລະ ໄພພິບັດທຳມະຊາດ, ການປ້ອງກັນສະພາບແວດລ້ອມ ແລະ ກໍລະນີຫຼີກລ້ຽງບໍ່ໄດ້ອື່ນໆ ແຕ່ລະຝ່າຍອາດຈຳກັດ ຫຼື ຢຸດຕິຊົ່ວຄາວການໄປ-ມາຜ່ານຊາຍແດນ ສຳລັບຄົນ, ສິນຄ້າ, ວັດຖຸພັນ ແລະ ຍານພາຫະນະຂົນສົ່ງ.
2. ການຈຳກັດ ຫຼື ຢຸດຕິຊົ່ວຄາວການໄປ-ມາຜ່ານຊາຍແດນ ໃຫ້ປະຕິບັດຕາມຂໍ້ກຳນົດຢູ່ມາດຕາ 38 ແລະ 39 ຂອງສົນທິສັນຍາສະບັບນີ້.

ມາດຕາ 29 ການຮ່ວມມືປົກປັກຮັກສາປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ຕາມເຂດຊາຍແດນ

1. ສອງຝ່າຍເພີ່ມທະວີການຮ່ວມມືປະຕິບັດກົດໝາຍ ແລະ ລະບຽບການ ເພື່ອປົກປັກຮັກສາຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຢູ່ເຂດຊາຍແດນ, ພ້ອມກັນປ້ອງກັນ, ຕ້ານ ແລະ ສະກັດກັ້ນການເຄື່ອນໄຫວທີ່ຜິດກົດໝາຍຂ້າມແດນ ຄື: ການເຄື່ອນໄຫວທີ່ລະເມີດຕໍ່ຄວາມໝັ້ນຄົງຂອງຊາດ, ການກໍ່ການຮ້າຍ, ການປຸ້ນຊັບ, ການລັກພາຕົວ, ການຜະລິດ, ຄອບຄອງ, ຂົນສົ່ງ, ນຳໃຊ້, ຊື້-ຂາຍທີ່ຜິດກົດໝາຍ ຫຼື ການຄຸ້ມຄອງອາວຸດເສິກ, ພາຫະນະການທະຫານ, ທາດລະເບີດ, ວັດຖຸໄວໄຟ, ທາດເບື່ອ, ທາດລັງສີທີ່ບໍ່ໄດ້ຮັບອະນຸຍາດ; ການຄອບຄອງ, ຂົນສົ່ງ, ຊື້-ຂາຍຢາເສບຕິດ; ການຜະລິດ, ຄອບຄອງ, ຂົນສົ່ງ, ຊື້-ຂາຍສິນຄ້າຫວງຫ້າມ; ການຂົນສົ່ງສິນຄ້າ, ການນຳເອົາເງິນຂ້າມແດນຜິດກົດໝາຍ; ການຜະລິດ, ຊື້-ຂາຍສິນຄ້າປອມແປງ; ການຜະລິດ, ຄອບຄອງ, ຂົນສົ່ງ, ຈາລະຈອນເງິນປອມ, ການຊື້-ຂາຍ, ຂົນສົ່ງວັດຖຸພັນທີ່ມີຄວາມສ່ຽງ ທີ່ສາມາດແຜ່ລະບາດພະຍາດທີ່ເປັນອັນຕະລາຍຕໍ່ຄົນ, ສັດ, ພືດ, ການຄ້າມະນຸດ; ການເຂົ້າ-ອອກເມືອງຜິດກົດໝາຍ, ການພັກເຊົາ ແລະ ອອກແຮງງານຜິດກົດໝາຍ, ການທຳລາຍປ່າ, ເຮັດໃຫ້ສິ່ງແວດລ້ອມເປັນພິດ ແລະ ອື່ນໆ.
2. ເພື່ອປະຕິບັດຕາມຂໍ້ກຳນົດທີ່ລະບຸໄວ້ໃນຂໍ້ 1 ຂອງມາດຕານີ້, ຂະແໜງການທີ່ກ່ຽວຂ້ອງຂອງສອງຝ່າຍສາມາດລົງນາມບັນດາຂໍ້ຕົກລົງທີ່ກ່ຽວຂ້ອງ ແລະ ສ້າງລະບຽບການ ແລະ ກົນໄກການຮ່ວມມື ລວມທັງແລກປ່ຽນຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ເພື່ອປະສານສົມທົບ, ຢັບຢັ້ງ, ຕ້ານ ແລະ ສະກັດກັ້ນບັນຫາດັ່ງກ່າວ.
3. ສອງຝ່າຍມີພັນທະຮັບປະກັນຄວາມປອດໄພຕໍ່ຊີວິດ ແລະ ຊັບສິນຂອງພົນລະເມືອງຂອງປະເທດໜຶ່ງທີ່ຂ້າມ-ຜ່ານບໍລິເວນຊາຍແດນຖືກຕ້ອງຕາມກົດໝາຍຂອງປະເທດຕົນ ແລະ ໃຫ້ການສະໜັບສະໜຸນ, ຊ່ວຍເຫຼືອຢ່າງທັນການເມື່ອມີຄວາມຈຳເປັນ, ກໍລະນີເກີດອຸປະຕິເຫດ ຫຼື ມີຄວາມສ່ຽງຕ້ອງແຈ້ງ ຫຼື ລາຍງານກ່ຽວກັບສາເຫດໃຫ້ອີງການປົກຄອງອີກປະເທດໜຶ່ງຊາບໂດຍດ່ວນ ເພື່ອປະສານສົມທົບກັນແກ້ໄຂ.

4. ແຕ່ລະຝ່າຍຕ້ອງນຳໃຊ້ມາດຕະການເດັດຂາດຕໍ່ຜູ້ລະເມີດສັນຍາສະບັບນີ້ ຕາມຫຼັກການດັ່ງນີ້:

ກ. ຜູ້ທີ່ລະເມີດລະບຽບການເຂົ້າ-ອອກເມືອງ, ຂ້າມແດນຈະຖືກແກ້ໄຂຕາມຂໍ້ກຳນົດກົດໝາຍຂອງປະເທດ ທີ່ລະເມີດ.

ພາຍຫຼັງການປະຕິບັດບັນດາຂັ້ນຕອນການດຳເນີນຄະດີຂອງປະເທດທີ່ຈັບກຸມສຳເລັດສຳລັບຜູ້ທີ່ລະບຸໄວ້ໃນຂໍ້ນີ້, ຖ້າຜູ້ລະເມີດເປັນພົນລະເມືອງຂອງອີກປະເທດໜຶ່ງ ຫຼື ຂອງປະເທດທີສາມ ທີ່ມາຈາກປະເທດນັ້ນ, ຝ່າຍແກ້ໄຂຄວນມອບສົ່ງຜູ້ລະເມີດໃຫ້ຝ່າຍນັ້ນທັນທີ (ຕິດແນບເອກະສານຂອງຄະດີ);

ຂ. ຜູ້ທີ່ລະເມີດກົດໝາຍອາຍາ ແລະ ຖືກຈັບກຸມຢູ່ເຂດຊາຍແດນ, ປະເທດທີ່ຈັບກຸມມີສິດຮ້ອງຟ້ອງ ແລະ ດຳເນີນຄະດີຕາມກົດໝາຍຂອງປະເທດຕົນ ຫຼື ມອບສົ່ງພົນລະເມືອງໃຫ້ປະເທດທີ່ຖືກຮ້ອງຟ້ອງດຳເນີນຄະດີ.

ພາຍຫຼັງປະຕິບັດຂັ້ນຕອນທາງດ້ານກົດໝາຍຕໍ່ຜູ້ລະເມີດສຳເລັດແລ້ວ, ປະເທດຈັບກຸມມີຄວາມຮັບຜິດຊອບມອບສົ່ງຜູ້ກ່ຽວ ແລະ ເຄື່ອງໃຊ້ສ່ວນຕົວ (ຖ້າມີ) ໃຫ້ປະເທດທີ່ຜູ້ກ່ຽວເປັນພົນລະເມືອງ ຫຼື ປະເທດທີ່ຜູ້ກ່ຽວໄດ້ຮັບອະນຸຍາດອາໄສຢູ່, ຍົກເວັ້ນກໍລະນີບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງທີ່ສອງປະເທດເປັນພາຄີ ໄດ້ກຳນົດໄວ້ຢ່າງອື່ນ;

ຄ. ໃນກໍລະນີຂໍ້ກຳນົດທີ່ກ່າວມາຂ້າງເທິງນີ້ ຫາກຂັດກັບຂໍ້ກຳນົດຂອງສົນທິສັນຍາ ວ່າດ້ວຍການຮ່ວມມືທາງດ້ານຍຸຕິທຳ ກ່ຽວກັບບັນຫາທາງແພ່ງ ແລະ ອາຍາ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ສະບັບລົງວັນທີ 6 ກໍລະກົດ 1998 ແມ່ນໃຫ້ນຳໃຊ້ຂໍ້ກຳນົດຂອງສົນທິສັນຍາ ວ່າດ້ວຍການຮ່ວມມືທາງດ້ານຍຸຕິທຳສະບັບນີ້.

5. ໃນກໍລະນີຫ້າມເຂົ້າເມືອງ ຫຼື ເນລະເທດພົນລະເມືອງຂອງປະເທດນັ້ນຕາມກົດໝາຍຂອງປະເທດຕົນ, ອົງການຄຸ້ມຄອງລັດທາງດ້ານວິຊາການທີ່ປະຈຳຢູ່ດ່ານ ຫຼື ຂະແໜງການກ່ຽວຂ້ອງຂອງປະເທດທີ່ຫ້າມເຂົ້າເມືອງ ຫຼື ເນລະເທດ ຕ້ອງແຈ້ງເປັນລາຍລັກອັກສອນຢ່າງທັນການໃຫ້ອົງການທຽບເທົ່າ ຫຼື ຂະແໜງການກ່ຽວຂ້ອງຂອງປະເທດນັ້ນຊາບ ກ່ຽວກັບສາເຫດທີ່ຫ້າມເຂົ້າເມືອງ ຫຼື ເນລະເທດ. ອົງການທຽບເທົ່າ ຫຼື ຂະແໜງການກ່ຽວຂ້ອງຂອງປະເທດນັ້ນ ມີພັນທະສົມທົບຢ່າງຕັ້ງໜ້າ, ໂດຍສະເພາະແມ່ນການຢັ້ງຢືນ ແລະ ຮັບພົນລະເມືອງທີ່ຖືກເນລະເທດ.

ການມອບ-ຮັບພົນລະເມືອງ ທີ່ໄດ້ລະເມີດຕາມທີ່ກ່າວມາຂ້າງເທິງນັ້ນ ຕ້ອງໄດ້ເຮັດບົດບັນທຶກ, ໃນບົດບັນທຶກ ຕ້ອງລະບຸແຈ້ງກ່ຽວກັບການລະເມີດຂອງຜູ້ກ່ຽວ, ບົດບັນທຶກແມ່ນເຮັດເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ ຊຶ່ງມີລາຍເຊັນຂອງຜູ້ມີສິດອຳນາດຂອງອົງການທີ່ລະບຸໃນຂໍ້ 5 ຂອງມາດຕານີ້, ສຳລັບຂອງທາງຂອງການກະທຳລະເມີດ ຫຼື ກະທຳຜິດແມ່ນໃຫ້ແກ້ໄຂຕາມກົດໝາຍຂອງປະເທດທີ່ຈັບກຸມ.

ມາດຕາ 30 ການຍົກຍ້າຍຕັ້ງພູມລຳເນົາຂອງພົນລະເມືອງຢູ່ເຂດຊາຍແດນ

1. ກໍລະນີທີ່ພົນລະເມືອງຢູ່ເຂດຊາຍແດນປະເທດໜຶ່ງ ຢາກຍົກຍ້າຍໄປຢູ່ເຂດຊາຍແດນອີກປະເທດໜຶ່ງນັ້ນ ຕ້ອງຂໍອະນຸຍາດຈາກອົງການປົກຄອງຂັ້ນແຂວງຂອງຕົນ. ຖ້າເຫັນວ່າຄວາມມຸ້ງຫວັງຂອງເຂົາເຈົ້າຫາກສົມເຫດສົມຜົນ, ອົງການປົກຄອງຂັ້ນແຂວງຂອງຜູ້ກ່ຽວ ຕ້ອງປຶກສາຫາລືກັບອົງການປົກຄອງຂັ້ນແຂວງອີກຝ່າຍໜຶ່ງ, ແລ້ວລາຍງານຕໍ່ອົງການທີ່ມີສິດກ່ຽວຂ້ອງ ເພື່ອນຳສະເໜີຕໍ່ລັດຖະບານຂອງຕົນພິຈາລະນາ, ພາຍຫຼັງທີ່ໄດ້ຮັບອະນຸມັດຈາກລັດຖະບານທັງສອງປະເທດແລ້ວ ຈຶ່ງສາມາດຍົກຍ້າຍໄດ້.
2. ອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນປະເທດທີ່ຮັບ ມີໜ້າທີ່ແຈ້ງໃຫ້ອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນຂອງອີກປະເທດໜຶ່ງ ບັນຊີຜູ້ໄດ້ຮັບອະນຸຍາດໃຫ້ເຂົ້າມາຕັ້ງພູມລຳເນົາຕາມກຳນົດຂອງຂໍ້ 7 ມາດຕາ 52 ຂອງສັນຍາສະບັບນີ້.
3. ກໍລະນີການຍົກຍ້າຍຕັ້ງພູມລຳເນົາ ຖ້າບໍ່ປະຕິບັດຕາມຂໍ້ກຳນົດໃນຂໍ້ 1 ມາດຕານີ້ ຖືວ່າເປັນການເຂົ້າ-ອອກເມືອງ ແລະ ຕັ້ງພູມລຳເນົາທີ່ຜິດກົດໝາຍ. ເມື່ອຝ່າຍໃດຝ່າຍໜຶ່ງ ຫາກພົບເຫັນພົນລະເມືອງຂອງອີກຝ່າຍໜຶ່ງຍົກຍ້າຍ

ຂ້າມຊາຍແດນໄປຕັ້ງພູມລຳເນົາຕາມລຳພັງໃຈຢູ່ເຂດຊາຍແດນອີກເບື້ອງໜຶ່ງ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບໂດຍດ່ວນ ເພື່ອຮ່ວມກັນແກ້ໄຂບົນພື້ນຖານເຄົາລົບສິດອຳນາດອະທິປະໄຕ, ກົດໝາຍຂອງແຕ່ລະຝ່າຍ ແລະ ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ.

ໝວດທີ VII
ດ່ານ ແລະ ການຄຸ້ມຄອງດ່ານຊາຍແດນ

ມາດຕາ 31 ປະເພດດ່ານຊາຍແດນ ແລະ ການເຄື່ອນໄຫວຂ້າມຜ່ານດ່ານຊາຍແດນ

1. ດ່ານຊາຍແດນ ລາວ-ຫວຽດນາມ ລວມມີ 3 ປະເພດ ຄື: ດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ໄດ້ກຳນົດດັ່ງນີ້:
   ກ. ດ່ານສາກົນ ອະນຸຍາດໃຫ້ພົນລະເມືອງ, ຍານພາຫະນະຂອງລາວ, ຫວຽດນາມ ແລະ ປະເທດທີສາມເຂົ້າ-ອອກເມືອງ; ສິນຄ້າ ແລະ ວັດຖຸພັນຂອງລາວ, ຫວຽດນາມ ແລະ ປະເທດທີສາມ ນຳເຂົ້າ ແລະ ສົ່ງອອກ;
   ຂ. ດ່ານທ້ອງຖິ່ນ ອະນຸຍາດໃຫ້ພົນລະເມືອງ, ຍານພາຫະນະ, ສິນຄ້າ ແລະ ວັດຖຸພັນຂອງລາວ ແລະ ຫວຽດນາມ ຜ່ານເຂົ້າ-ອອກ; ນຳເຂົ້າ ແລະ ສົ່ງອອກ;
   ຄ. ດ່ານປະເພນີ ອະນຸຍາດໃຫ້ພົນລະເມືອງ, ຍານພາຫະນະຂອງແຂວງຊາຍແດນ ລາວ ແລະ ຫວຽດນາມ ຜ່ານເຂົ້າ-ອອກ; ສິນຄ້າ ແລະ ວັດຖຸພັນຂອງແຂວງຊາຍແດນ ລາວ ແລະ ຫວຽດນາມ ນຳເຂົ້າ ແລະ ສົ່ງອອກ.
2. ການເຄື່ອນໄຫວ, ຢຸ່ບໍລິເວນດ່ານຂອງປະເທດໃດ ຕ້ອງປະຕິບັດຕາມຂໍ້ກຳນົດກົດໝາຍຂອງປະເທດນັ້ນ ແລະ ຕາມຂໍ້ກຳນົດຂອງບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ.

ມາດຕາ 32 ບັນດາຄູ່ດ່ານຊາຍແດນທີ່ໄດ້ເປີດ

ສອງຝ່າຍກຳນົດບັນດາຄູ່ດ່ານຊາຍແດນທີ່ໄດ້ເປີດຢູ່ບໍລິເວນຊາຍແດນ ລາວ-ຫວຽດນາມ

1. ດ່ານສາກົນ

ລ/ດ	ຊື່ດ່ານລາວ (ຊື່ແຂວງ)	ຊື່ດ່ານຫວຽດນາມ (ຊື່ແຂວງ)
1	ປາງຫີກ (ຜົ້ງສາລີ)	ໄຕຈາງ (ດຽນບຽນ)
2	ນ້ຳໂສຍ (ຫົວພັນ)	ນາແມວ (ແທງຮວາ)
3	ນ້ຳກັ່ນ (ຊຽງຂວາງ)	ນ້ຳກັ່ນ (ເຫງະອານ)
4	ນ້ຳພາວ (ບໍລິຄຳໄຊ)	ເກົ່າແຈວ (ຮ່າຕິ໋ງ)
5	ນາເພົ້າ (ຄຳມ່ວນ)	ຈ່າລໍ (ກວ໋າງບິ໋ງ)
6	ແດນສະຫວັນ (ສະຫວັນນະເຂດ)	ລາວບາວ (ກວ໋າງຈິ)
7	ລະໄລ (ສາລະວັນ)	ລະໄລ (ກວ໋າງຈິ)
8	ພູເກືອ (ອັດຕະປື)	ເບີອີ (ກອນຕຸມ)

2. ດ່ານທ້ອງຖິ່ນ

ລ/ດ	ຊື່ດ່ານລາວ (ຊື່ແຂວງ)	ຊື່ດ່ານຫວຽດນາມ (ຊື່ແຂວງ)
1	ນາຊອມ (ຫຼວງພະບາງ)	ຫ້ວຍປອກ (ດຽນບຽນ)
2	ບ້ານດ່ານ (ຫົວພັນ)	ຈຽງເຂືອງ (ເຊິນລາ)

3	ປ່າຫ່າງ (ຫົວພັນ)	ລອງເຊີບ (ເຊີນລາ)
4	ສົມຫວັງ (ຫົວພັນ)	ແຕ່ນຕັນ (ແຫ່ງຮອາ)
5	ໂກ່ຕ່າຍ (ສາລະວັນ)	ຮ້ຽເວີນ (ເຫື່ອທຽນເຫວ້)
6	ຕະວາງ (ເຊກອງ)	ອະເດີດ (ເຫື່ອທຽນເຫວ້)
7	ດາກຕະອອັກ (ເຊກອງ)	ນາມຢາງ (ກວາງນາມ)

3. ດ່ານປະເພນີ

ລ/ດ	ຊື່ດ່ານລາວ (ຊື່ແຂວງ)	ຊື່ດ່ານຫວຽດນາມ (ຊື່ແຂວງ)
1	ຫ້ວຍລາ (ຜົ້ງສາລີ)	ສີປາຟິນ (ດຽນບຽນ)
2	ເມືອງເປົ (ຫົວພັນ)	ນ້ຳແລ້ງ (ເຊີນລາ)
3	ຊົບດຸ້ງ (ຫົວພັນ)	ນາກາຍ (ເຊີນລາ)
4	ທ່າເລົ້າ (ຫົວພັນ)	ແຄ້ວ (ແຫ່ງຮອາ)
5	ນ້ຳໃຕ້ (ຫົວພັນ)	ທີ່ງຖຸ (ເຫງະອານ)
6	ທອງມີໄຊ (ບໍລິຄຳໄຊ)	ຕາມເຫົ່ບ (ເຫງະອານ)
7	ທ່ຽງພິລາ (ບໍລິຄຳໄຊ)	ກາວເອວ (ເຫງະອານ)
8	ນ້ຳອອນ (ບໍລິຄຳໄຊ)	ແຫ່ງຖຸ້ຍ (ເຫງະອານ)
9	ນ້ຳສັກ (ບໍລິຄຳໄຊ)	ເຊີນຮົ່ງ (ຮ່າຕິ່ງ)
10	ມາລາດົກ (ຄຳມ່ວນ)	ກີ່ມກວາງ (ຮ່າຕິ່ງ)
11	ໝອງມ້າ (ຄຳມ່ວນ)	ກາຮ່ອງ (ກວາງບິ່ງ)
12	ລາໂກ (ສະຫວັນນະເຂດ)	ຕາຮຸ່ງ (ກວາງຈິ)
13	ບ້ານໃໝ່ (ສະຫວັນນະເຂດ)	ບ້ານແຈ່ງ (ກວາງຈິ)
14	ແດນວິໄລ (ສະຫວັນນະເຂດ)	ແຫ່ງ (ກວາງຈິ)
15	ອາຊ໊ອກ (ສາລະວັນ)	ກ໊ອກ (ກວາງຈິ)
16	ກະລຶມ (ເຊກອງ)	ໄຕຢາງ (ກວາງນາມ)
17	ດາກປຣາ (ເຊກອງ)	ດາກໂປ (ກອນຕຸມ)
18	ວ້ຽຕ໊ດ (ເຊກອງ)	ດາກລອງ (ກອນຕຸມ)

ມາດຕາ 33 ຈຸດຜ່ານແດນຊົ່ວຄາວ

ກໍລະນີມີຄວາມຈຳເປັນ ສອງຝ່າຍຈະເປີດຈຸດຜ່ານແດນຊົ່ວຄາວ, ໂດຍແມ່ນອົງການປົກຄອງທ້ອງຖິ່ນ ຫຼື ອົງການທີ່ກ່ຽວຂ້ອງສອງຝ່າຍເປັນຜູ້ປຶກສາຫາລືຕົກລົງເປັນເອກະພາບກັນ ແລ້ວນຳສະເໜີຕໍ່ລັດຖະບານສອງປະເທດ ພິຈາລະນາ. ໃນເວລາເຄື່ອນໄຫວ, ການເຂົ້າ-ອອກເມືອງຜ່ານຈຸດຜ່ານແດນຊົ່ວຄາວຂອງຄົນ, ຍານພາຫະນະ, ສິນຄ້າ, ວັດຖຸພັນໃຫ້ປະຕິບັດຕາມກົດໝາຍຂອງແຕ່ລະປະເທດ ແລະ ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດ ເປັນພາຄີ.

ມາດຕາ 34 ຄວາມຮັບຜິດຊອບຂອງອົງການບໍລິຫານລັດທາງດ້ານວິຊາການຢູ່ດ່ານຊາຍແດນ

1. ອົງການບໍລິຫານລັດທາງດ້ານວິຊາການຢູ່ດ່ານຂອງແຕ່ລະຝ່າຍປະຕິບັດຕາມພາລະບົດບາດ, ໜ້າທີ່ ແລະ ສິດຂອບເຂດຕາມກົດໝາຍ ແລະ ລະບຽບການຂອງປະເທດຕົນ, ມີຄວາມຮັບຜິດຊອບໃນການປະສານສົມທົບກັບອົງການບໍລິຫານລັດທາງດ້ານວິຊາການຂອງອີກຝ່າຍໜຶ່ງ ເພື່ອປະຕິບັດພາລະບົດບາດ, ໜ້າທີ່ ແລະ ສິດຂອບເຂດຕາມຂໍ້ກຳນົດຂອງສັນຍາສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງແຕ່ລະປະເທດ ແລະ ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ.
2. ກຳລັງຕຳຫຼວດ (ສຳລັບລາວ), ກຳລັງທະຫານຊາຍແດນ (ສຳລັບຫວຽດນາມ) ປະຕິບັດໜ້າທີ່ດັ່ງນີ້:
   ກ. ເປັນເຈົ້າການປະສານສົມທົບກັບບັນດາອົງການບໍລິຫານລັດທາງດ້ານວິຊາການຢູ່ດ່ານຂອງປະເທດຕົນແນະນຳ ແລະ ປະຕິບັດລະບຽບການປ້ອງກັນຊາຍແດນ ແລະ ການກວດກາຄວບຄຸມການເຄື່ອນໄຫວເຂົ້າ-ອອກເມືອງ ສຳລັບຄົນ, ຍານພາຫະນະ, ວຽກງານຄຸ້ມຄອງການປ້ອງກັນອຳນາດອະທິປະໄຕ, ຄວາມສະຫງົບຂອງຊາຍແດນປະເທດ, ຢັບຢັ້ງ, ຕ້ານການກໍ່ອາດຊະຍາກຳ, ປົກປັກຮັກສາຄວາມສະຫງົບທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
   ຂ. ສົມທົບກັບບັນດາອົງການບໍລິຫານລັດທາງດ້ານວິຊາການຢູ່ດ່ານຂອງປະເທດຕົນ, ກວດກາ, ຕິດຕາມກວດກາຍານພາຫະນະ ແລະ ການເຄື່ອນໄຫວນຳເຂົ້າ-ສົ່ງອອກສິນຄ້າ, ວັດຖຸພັນຜ່ານດ່ານຂອງຕົນ, ຢັບຢັ້ງ, ຕ້ານການຄ້າມະນຸດ, ການຄ້າຂາຍເຖື່ອນ ແລະ ການສໍ້ໂກງທາງການຄ້າ;
   ຄ. ປະຕິບັດສິດໜ້າທີ່ອື່ນໆຕາມກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ.
3. ອົງການພາສີປະຈຳຢູ່ດ່ານຂອງແຕ່ລະປະເທດປະຕິບັດບັນດາໜ້າທີ່ດັ່ງນີ້:
   ກ. ເປັນເຈົ້າການ, ປະສານສົມທົບກັບບັນດາອົງການບໍລິຫານລັດທາງດ້ານວິຊາການຢູ່ດ່ານຂອງປະເທດຕົນປະຕິບັດລະບຽບການກວດກາ, ຕິດຕາມການເຄື່ອນໄຫວນຳເຂົ້າ-ສົ່ງອອກສິນຄ້າ, ວັດຖຸພັນ; ປະຕິບັດລະບຽບການເຂົ້າ-ອອກໃຫ້ແກ່ຍານພາຫະນະຢູ່ດ່ານຊາຍແດນ; ປະຕິບັດການຢັບຢັ້ງ, ຕ້ານການຄ້າຂາຍເຖື່ອນ, ການສໍ້ໂກງການຄ້າ ແລະ ການຂົນສົ່ງສິນຄ້າ, ວັດຖຸພັນທີ່ຜິດກົດໝາຍຜ່ານແດນ;
   ຂ. ສົມທົບກັບອົງການພາສີປະຈຳດ່ານຂອງປະເທດນັ້ນ ເພື່ອແກ້ໄຂບັນຫາຕ່າງໆທີ່ກ່ຽວຂ້ອງເຖິງການນຳເຂົ້າ, ການສົ່ງອອກສິນຄ້າ, ວັດຖຸພັນ ແລະ ຍານພາຫະນະຜ່ານຄູ່ດ່ານ ລະຫວ່າງ ສອງປະເທດ.
4. ອົງການກັກກັນພືດ ແລະ ສັດ, ສາທາລະນະສຸກ (ກັນພະຍາດ, ກວດກາອາຫານ ແລະ ຢາ) ຂອງແຕ່ລະປະເທດ ປະຕິບັດໜ້າທີ່ດັ່ງນີ້:
   ກ. ເປັນເຈົ້າການ, ປະສານສົມທົບກັບບັນດາອົງການບໍລິຫານລັດທາງດ້ານວິຊາການຂອງຂະແໜງການອື່ນໆຢູ່ດ່ານປະເທດຕົນ ເພື່ອແກ້ໄຂບັນຫາທີ່ກ່ຽວຂ້ອງເຖິງການເຄື່ອນໄຫວທາງດ້ານກັກກັນພືດ ແລະ ສັດຢູ່ດ່ານຊາຍແດນປະເທດຕົນ;
   ຂ. ເປັນເຈົ້າການ, ປະສານສົມທົບກັບອົງການກັກກັນພືດ ແລະ ສັດຂອງອີກປະເທດໜຶ່ງ ເພື່ອແກ້ໄຂບັນຫາທີ່ກ່ຽວຂ້ອງເຖິງການເຄື່ອນໄຫວທາງດ້ານກັກກັນພືດ ແລະ ສັດຢູ່ຄູ່ດ່ານຊາຍແດນ ລະຫວ່າງ ສອງປະເທດ.

ມາດຕາ 35 ຂັ້ນຕອນກວດກາ, ຄວບຄຸມຢູ່ດ່ານຊາຍແດນ

ສອງຝ່າຍເປັນເອກະພາບກັນ ຈັດວາງບັນດາອົງການບໍລິຫານລັດທາງດ້ານວິຊາການຢູ່ບໍລິເວນດ່ານ ແລະ ມີການເຄື່ອນໄຫວຕາມຂັ້ນຕອນດັ່ງນີ້:

1. ກໍລະນີປົກກະຕິ, ຂັ້ນຕອນການເຄື່ອນໄຫວໄດ້ຈັດວາງດັ່ງນີ້:
   ກ. ຂາອອກ: ພາສີ, ກັກກັນພືດ, ກັກກັນສັດ ແລະ ຄວາມປອດໄພດ້ານອາຫານ ແລະ ຢາ, ຕຳຫຼວດກວດຄົນເຂົ້າ-ອອກເມືອງ (ສຳລັບລາວ), ທະຫານຊາຍແດນ (ສຳລັບຫວຽດນາມ).

ຂ. ຂາເຂົ້າ: ຕຳຫຼວດກວດຄົນເຂົ້າ-ອອກເມືອງ (ສຳລັບລາວ), ທະຫານຊາຍແດນ (ສຳລັບຫວຽດນາມ), ກັກກັນພືດ, ກັກກັນສັດ ແລະ ຄວາມປອດໄພດ້ານອາຫານ ແລະ ຢາ, ພາສີ.

2. ກໍລະນີເກີດມີໄພທຳມະຊາດ, ພະຍາດ, ບັນຫາສຸຂະພາບຊຸມຊົນລະບາດ, ຂັ້ນຕອນການເຄື່ອນໄຫວໄດ້ຈັດວາງດັ່ງນີ້:
   ກ. ຂາອອກ: ກັກກັນພືດ, ກັກກັນສັດ ແລະ ຄວາມປອດໄພດ້ານອາຫານ ແລະ ຢາ, ພາສີ, ຕຳຫຼວດກວດຄົນເຂົ້າ-ອອກເມືອງ (ສຳລັບລາວ), ທະຫານຊາຍແດນ (ສຳລັບຫວຽດນາມ);
   ຂ. ຂາເຂົ້າ: ກັກກັນພືດ, ກັກກັນສັດ ແລະ ຄວາມປອດໄພດ້ານອາຫານ ແລະ ຢາ, ຕຳຫຼວດກວດຄົນເຂົ້າ-ອອກເມືອງ (ສຳລັບລາວ), ທະຫານຊາຍແດນ (ສຳລັບຫວຽດນາມ), ພາສີ.

3. ກໍລະນີຈຳເປັນສອງຝ່າຍອາດຈະພິຈາລະນານຳໃຊ້ຂັ້ນຕອນ, ລະບຽບການຕ່າງຫາກ ເພື່ອສ້າງຄວາມສະດວກໃຫ້ແກ່ການເຂົ້າ-ອອກຂອງຄົນ ແລະ ຍານພາຫະນະຜ່ານດ່ານໃຫ້ເໝາະສົມກັບຂໍ້ກຳນົດຂອງບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ.

ມາດຕາ 36 ການກວດກາ, ການຄຸ້ມຄອງ ແລະ ການຕິດຕາມຢູ່ດ່ານປະເພນີ

1. ດ່ານປະເພນີ, ບ່ອນທີ່ມີອົງການບໍລິຫານລັດທາງດ້ານວິຊາການຄົບຖ້ວນ ແລະ ຕອບສະໜອງໄດ້ຄວາມຕ້ອງການທາງດ້ານພື້ນຖານໂຄງລ່າງ, ເຕັກນິກການກວດກາ, ການຄຸ້ມຄອງ, ການຕິດຕາມການເຄື່ອນໄຫວຂາເຂົ້າ-ຂາອອກ ຜ່ານແດນແມ່ນໃຫ້ປະຕິບັດຄືຢູ່ດ່ານສາກົນ ແລະ ດ່ານທ້ອງຖິ່ນ.
2. ດ່ານປະເພນີ, ບ່ອນທີ່ຍັງບໍ່ທັນມີອົງການບໍລິຫານລັດທາງດ້ານວິຊາການຄົບຖ້ວນ ແລະ ຍັງບໍ່ທັນຕອບສະໜອງໄດ້ຄວາມຕ້ອງການ ດ້ານພື້ນຖານໂຄງລ່າງ, ເຕັກນິກລະບຽບການກວດກາ, ການຄຸ້ມຄອງ, ການຕິດຕາມການເຄື່ອນໄຫວຂາເຂົ້າ-ຂາອອກ ຜ່ານແດນແມ່ນໃຫ້ດຳເນີນຢູ່ຈຸດຄຸ້ມຄອງຂອງຕຳຫຼວດກວດຄົນເຂົ້າ-ອອກເມືອງ (ຝ່າຍລາວ) ແລະ ຈຸດຄຸ້ມຄອງຂອງທະຫານຊາຍແດນ (ຝ່າຍຫວຽດນາມ).
3. ດ່ານປະເພນີ, ບ່ອນທີ່ຍັງບໍ່ທັນມີອົງການພາສີ ແມ່ນໃຫ້ກຳລັງຕຳຫຼວດກວດຄົນເຂົ້າ-ອອກເມືອງ (ຝ່າຍລາວ) ແລະ ທະຫານຊາຍແດນ (ຝ່າຍຫວຽດນາມ) ປະຕິບັດລະບຽບການກວດກາ, ການຄວບຄຸມສຳລັບສິນຄ້າຊື້-ຂາຍ, ການແລກປ່ຽນຂອງປະຊາຊົນຊາຍແດນຕາມກົດໝາຍ ວ່າດ້ວຍພາສີຂອງແຕ່ລະປະເທດ ແລະ ຂໍ້ກຳນົດອື່ນໆຂອງບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ.
4. ສຳລັບສິນຄ້າ, ວັດຖຸພັນ, ຍານພາຫະນະ ທີ່ບໍ່ແມ່ນຂອງປະຊາຊົນແຂວງຊາຍແດນ ມີຄວາມຈຳເປັນນຳເຂົ້າ-ສົ່ງອອກຜ່ານດ່ານປະເພນີ ໃຫ້ອົງການປົກຄອງທ້ອງຖິ່ນ ຫຼື ອົງການທີ່ກ່ຽວຂ້ອງສອງຝ່າຍປຶກສາຫາລືຕົກລົງ ແລ້ວນຳສະເໜີຕໍ່ຂັ້ນທີ່ມີສິດອຳນາດຂອງທັງສອງປະເທດພິຈາລະນາ.
5. ສິນຄ້າ, ວັດຖຸພັນ, ຍານພາຫະນະທີ່ນຳເຂົ້າ ຫຼື ສົ່ງອອກຜ່ານດ່ານປະເພນີ ຕ້ອງມີເອກະສານຄົບຖ້ວນ, ປະຕິບັດບັນດາຫຼັກການ, ກົດໝາຍ ວ່າດ້ວຍພາສີ, ບັນດາຂໍ້ກຳນົດອື່ນໆທີ່ກ່ຽວຂ້ອງຂອງກົດໝາຍແຕ່ລະປະເທດ ແລະ ສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ.

ມາດຕາ 37 ເວລາເຮັດວຽກຢູ່ດ່ານ

1. ເວລາເຮັດວຽກຢູ່ດ່ານ ໃຫ້ປະຕິບັດຕາມການຕົກລົງສອງຝ່າຍ ແລະ ບັນດາຂໍ້ກຳນົດຂອງສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ. ເວລາເຮັດວຽກຢູ່ດ່ານທາງລົດໄຟແມ່ນປະຕິບັດຕາມການຕົກລົງຂອງສອງຝ່າຍ (ກໍລະນີເປີດດ່ານລົດໄຟ).
2. ລັດຖະບານສອງປະເທດເປັນຜູ້ຕົກລົງການປ່ຽນແປງເວລາເຮັດວຽກຂອງດ່ານສາກົນ, ດ່ານທ້ອງຖິ່ນ ໂດຍແຈ້ງໃຫ້ກັນຊາບຜ່ານທາງການທູດ.

3. ການນຳຂັ້ນແຂວງຊາຍແດນຂອງສອງຝ່າຍ ເປັນເອກະພາບກັນຕົກລົງການປ່ຽນແປງເວລາເຮັດວຽກຂອງດ່ານປະເພນີ ພາຍຫຼັງສຳເລັດຂັ້ນຕອນຕາມລະບຽບກົດໝາຍຂອງແຕ່ລະປະເທດ ແລະ ຕ້ອງລາຍງານຕໍ່ອົງການຊາຍແດນຂັ້ນສູນກາງສອງປະເທດຊາບ ເພື່ອແຈ້ງໃຫ້ກັນຊາບ ໂດຍຜ່ານທາງການທູດ.
4. ກໍລະນີເປີດດ່ານນອກໂມງເຮັດວຽກທາງລັດຖະການ ຍ້ອນເຫດຜົນອັນຮີບດ່ວນ ທີ່ພົວພັນເຖິງວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບ, ໄພພິບັດ, ອັກຄີໄພ, ກອບກູ້ເອົາຜູ້ຖືກອຸປະຕິເຫດ, ໄລ່ລ່າພວກອາດຊະຍາກອນ ຫຼື ຍ້ອນເຫດຜົນຈຳເປັນທີ່ຫຼີກລ້ຽງບໍ່ໄດ້, ການນຳຂັ້ນແຂວງຊາຍແດນ (ຝ່າຍລາວ) ແລະ ຫົວໜ້າອົງການທະຫານຊາຍແດນຂັ້ນແຂວງຊາຍແດນ (ຝ່າຍຫວຽດນາມ) ຕ້ອງຕົກລົງເປັນເອກະພາບກັນ, ພ້ອມກັນນັ້ນ ໃຫ້ລາຍງານຕໍ່ຂັ້ນທີ່ມີສິດອຳນາດຂອງສອງຝ່າຍ.

ມາດຕາ 38 ຫຼັກການຈຳກັດ ຫຼື ຢຸດຕິຊົ່ວຄາວການເຄື່ອນໄຫວຂ້າມຜ່ານຊາຍແດນຢູ່ດ່ານຊາຍແດນ

1. ການຈຳກັດ ຫຼື ຢຸດຕິຊົ່ວຄາວການເຄື່ອນໄຫວຂ້າມຜ່ານແດນຢູ່ດ່ານຊາຍແດນ ຕ້ອງສອດຄ່ອງກັບບັນດາຂໍ້ກຳນົດຂອງສົນຍາສະບັບນີ້ ແລະ ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ. ຝ່າຍໃດປະຕິບັດວຽກດັ່ງກ່າວ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບດ່ວນໂດຍຜ່ານທາງການທູດກ່ອນ 5 (ຫ້າ) ວັນ ຫຼື ໃນກໍລະນີສຸກເສີນຢ່າງໜ້ອຍພາຍໃນ 24 (ຊາວສີ່) ຊົ່ວໂມງ.
2. ຍົກເວັ້ນຂໍ້ກຳນົດໃນມາດຕານີ້ ບໍ່ໃຫ້ປະເທດໃດໜຶ່ງໃຊ້ສິດປິດດ່ານພຽງຝ່າຍດຽວ, ຖ້າການປິດດ່ານພຽງຝ່າຍດຽວຂອງປະເທດໜຶ່ງ ສ້າງຄວາມເສັຍຫາຍໃຫ້ອີກຝ່າຍໜຶ່ງ, ສອງປະເທດຈະແກ້ໄຂບັນຫາທີ່ກ່ຽວຂ້ອງ ໂດຍການເຈລະຈາທາງການທູດ.
3. ຜູ້ມີສິດອຳນາດທີ່ໄດ້ກຳນົດໄວ້ຕາມຂໍ້ 1, 2, 3 ມາດຕາ 39 ຕ້ອງຮັບຜິດຊອບຕໍ່ກົດໝາຍ ກ່ຽວກັບທຸກການຕັດສິນຂອງຕົນ. ເມື່ອສະພາບການກັບຄືນສູ່ປົກກະຕິຕ້ອງແຈ້ງໃຫ້ອົງການທີ່ກ່ຽວຂ້ອງຂອງປະເທດຕົນ ແລະ ອີກປະເທດໜຶ່ງຊາບ.

ມາດຕາ 39 ສິດອຳນາດໃນການຈຳກັດ ແລະ ຢຸດຕິຊົ່ວຄາວການເຄື່ອນໄຫວຂ້າມຜ່ານດ່ານຊາຍແດນ

1. ລັດຖະບານ (ສຳລັບຝ່າຍລາວ) ແລະ ນາຍົກລັດຖະມົນຕີ (ສຳລັບຝ່າຍຫວຽດນາມ) ຕົກລົງການຈຳກັດ ຫຼື ຢຸດຕິຊົ່ວຄາວການເຄື່ອນໄຫວຂ້າມແດນຢູ່ດ່ານສາກົນ ແລະ ດ່ານທ້ອງຖິ່ນ, ຝ່າຍຕົກລົງປະຕິບັດວຽກງານນີ້ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບລ່ວງໜ້າກ່ອນ ໂດຍຜ່ານທາງການທູດ; ການເປີດດ່ານສາກົນ ແລະ ດ່ານທ້ອງຖິ່ນຄືນໃໝ່ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບ ໂດຍຜ່ານທາງການທູດ ແລະ ຕ້ອງໄດ້ຮັບການຢັ້ງຢືນຈາກອີກຝ່າຍໜຶ່ງ.
2. ການນຳອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນຕົກລົງການຈຳກັດ ຫຼື ຢຸດຕິຊົ່ວຄາວການເຄື່ອນໄຫວການຂ້າມຜ່ານແດນໃນໄລຍະເວລາບໍ່ເກີນ 24 (ຊາວສີ່) ຊົ່ວໂມງ ສຳລັບດ່ານທ້ອງຖິ່ນ. ອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນຂອງຝ່າຍປະຕິບັດວຽກດັ່ງກ່າວ ຕ້ອງແຈ້ງໃຫ້ອົງການປົກຄອງທ້ອງຖິ່ນຂັ້ນແຂວງຂອງອີກຝ່າຍໜຶ່ງຊາບໂດຍດ່ວນ, ພ້ອມກັນນັ້ນ, ຕ້ອງແຈ້ງໃຫ້ລັດຖະບານ (ສຳລັບຝ່າຍລາວ) ແລະ ນາຍົກລັດຖະມົນຕີ (ສຳລັບຝ່າຍຫວຽດນາມ) ແລະ ອົງການຊາຍແດນຂັ້ນສູນກາງຂອງຕົນໂດຍດ່ວນ ເພື່ອແຈ້ງຕໍ່ໄປອີກຝ່າຍໜຶ່ງຊາບ ໂດຍຜ່ານທາງການທູດ.
3. ການນຳຂັ້ນແຂວງ (ຝ່າຍລາວ), ການນຳອົງການທະຫານຊາຍແດນຂັ້ນແຂວງ (ຝ່າຍຫວຽດນາມ) ຕົກລົງການຈຳກັດ ຫຼື ຢຸດຕິຊົ່ວຄາວການເຄື່ອນໄຫວຂ້າມແດນໃນໄລຍະເວລາບໍ່ເກີນ 6 (ຫົກ) ຊົ່ວໂມງ ສຳລັບດ່ານທ້ອງຖິ່ນ; ບໍ່ເກີນ 12 (ສິບສອງ) ຊົ່ວໂມງ ສຳລັບດ່ານປະເພນີ, ເວລາເປີດດ່ານຊາຍແດນນອກເວລາໃນແຕ່ລະວັນສຳລັບກໍລະນີອັນຮີບດ່ວນທີ່ກ່ຽວຂ້ອງເຖິງການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ໄພທຳມະຊາດ, ອັກຄີໄພ, ຊ່ວຍເຫຼືອຜູ້ຖືກເຄາະຮ້າຍໃນກໍລະນີສຸກເສີນ, ການໄລ່ລ່າຈັບອາດຊະຍາກອນ ແລະ ດ້ວຍເຫດຜົນອັດຕະວິໄສອື່ນໆ ຕ້ອງລາຍ

ງານອົງການປົກຄອງຂັ້ນແຂວງຊາຍແດນ ແລະ ອົງການທະຫານຊາຍແດນຂັ້ນເທິງທີ່ກ່ຽວຂ້ອງຂອງປະເທດຕົນ ເພື່ອແຈ້ງຕໍ່ອົງການປົກຄອງຂັ້ນແຂວງຂອງອີກປະເທດໜຶ່ງ ແລະ ລາຍງານຕໍ່ອົງການຊາຍແດນຂັ້ນສູນກາງຂອງປະເທດຕົນໂດຍດ່ວນ ເພື່ອແຈ້ງໃຫ້ອີກປະເທດໜຶ່ງຊາບ ໂດຍຜ່ານທາງການທູດ.

4. ຫົວໜ້າດ່ານ (ສຳລັບລາວ) ແລະ ຫົວໜ້າຄ້າຍທະຫານຊາຍແດນ (ສຳລັບຫວຽດນາມ) ຕົກລົງການຈຳກັດ ຫຼື ຢຸດຕິຊົ່ວຄາວບັນດາການເຄື່ອນໄຫວ ຜ່ານຊາຍແດນຢູ່ດ່ານປະເພນີບໍ່ເກີນ 6 (ຫົກ) ຊົ່ວໂມງ ແລະ ຕ້ອງໄດ້ລາຍງານໃຫ້ອົງການປົກຄອງທ້ອງຖິ່ນຂັ້ນເມືອງ ແລະ ອົງການທະຫານຊາຍແດນຂັ້ນແຂວງຊາຍແດນປະເທດຂອງຕົນ ພ້ອມດຽວກັນ ຕ້ອງແຈ້ງໃຫ້ຫົວໜ້າຄ້າຍທະຫານຊາຍແດນຂອງປະເທດໜຶ່ງຊາບຢ່າງທັນການ.
5. ກ່ອນທີ່ຈະໝົດເວລາຈຳກັດ ຫຼື ຢຸດຕິຊົ່ວຄາວການເຂົ້າ-ອອກຜ່ານດ່ານຊາຍແດນ, ຖ້າເຫັນວ່າຕ້ອງການສືບຕໍ່ການຈຳກັດ ຫຼື ຢຸດຕິຊົ່ວຄາວໃຫ້ປະຕິບັດຕາມດັ່ງລຸ່ມນີ້:
   ກ. ການນຳຂັ້ນແຂວງຊາຍແດນຕົກລົງການເລື່ອນເວລາການຈຳກັດ ຫຼື ຢຸດຕິຊົ່ວຄາວບັນດາການເຄື່ອນໄຫວເຂົ້າ-ອອກຜ່ານດ່ານທ້ອງຖິ່ນ, ເວລາທີ່ຈະເລື່ອນນັ້ນບໍ່ໃຫ້ເກີນ 24 (ຊາວສີ່) ຊົ່ວໂມງ;
   ຂ. ການນຳຂັ້ນແຂວງ (ຝ່າຍລາວ), ຫົວໜ້າກຳລັງທະຫານຊາຍແດນຂັ້ນແຂວງ (ຝ່າຍຫວຽດນາມ) ຕົກລົງການເລື່ອນເວລາການຈຳກັດ ຫຼື ຢຸດຕິຊົ່ວຄາວການເຄື່ອນໄຫວເຂົ້າ-ອອກຜ່ານດ່ານທ້ອງຖິ່ນ, ເວລາທີ່ຈະເລື່ອນນັ້ນບໍ່ໃຫ້ເກີນ 6 (ຫົກ) ຊົ່ວໂມງ ແລະ ຢູ່ດ່ານປະເພນີ ບໍ່ໃຫ້ເກີນ 12 (ສິບສອງ) ຊົ່ວໂມງ;
   ຄ. ການນຳຂັ້ນແຂວງ (ຝ່າຍລາວ), ຫົວໜ້າຄ້າຍທະຫາຍຊາຍແດນ (ຝ່າຍຫວຽດນາມ) ຕົກລົງການເລື່ອນເວລາການຈຳກັດ ຫຼື ຢຸດຕິຊົ່ວຄາວ ການເຄື່ອນໄຫວເຂົ້າ-ອອກຜ່ານດ່ານປະເພນີບໍ່ໃຫ້ເກີນ 6 (ຫົກ) ຊົ່ວໂມງ.
6. ຜູ້ທີ່ມີສິດອຳນາດທີ່ໄດ້ກຳນົດໃນຂໍ້ 1, 2, 3, 4 ແລະ 5 ຢູ່ໃນມາດຕານີ້ ຕ້ອງມີຄວາມຮັບຜິດຊອບໃນການຕົກລົງຕໍ່ໜ້າກົດໝາຍປະເທດຂອງຕົນ ກ່ຽວກັບການຈຳກັດ, ການຢຸດຕິຊົ່ວຄາວ ຫຼື ການເລື່ອນເວລາການເຄື່ອນໄຫວເຂົ້າ-ອອກຜ່ານດ່ານຊາຍແດນ, ພ້ອມກັນນັ້ນ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບເປັນລາຍລັກອັກສອນຕາມກຳນົດເວລາ ທີ່ລະບຸໄວ້ຢູ່ຂໍ້ 1 ມາດຕາ 38 ຂອງສັນຍາສະບັບນີ້ ແລະ ປະກາດຜ່ານທາງສື່ມວນຊົນ; ເນື້ອໃນເອກະສານກ່ຽວກັບບັນຫາດັ່ງກ່າວນັ້ນ ຕ້ອງລະບຸຢ່າງຈະແຈ້ງເຫດຜົນ, ເວລາເລີ່ມຕົ້ນ, ເວລາສິ້ນສຸດການຈຳກັດ, ການຢຸດຕິຊົ່ວຄາວ ແລະ ການເລື່ອນເວລາການເຄື່ອນໄຫວເຂົ້າ-ອອກຜ່ານດ່ານຊາຍແດນ. ເມື່ອສະພາບການໄດ້ກັບຄືນສູ່ປົກກະຕິຕ້ອງແຈ້ງຜ່ານສື່ມວນຊົນໃຫ້ອົງການປົກຄອງທ້ອງຖິ່ນ, ອົງການທີ່ກ່ຽວຂ້ອງຂອງອີກຝ່າຍໜຶ່ງ ເພື່ອຮັບຊາບ.

ມາດຕາ 40 ໜ້າທີ່ການ, ສິດອຳນາດການເປີດ ແລະ ຍົກລະດັບດ່ານ

1. ໜ້າທີ່ການເປີດ ແລະ ຍົກລະດັບດ່ານຊາຍແດນ.
   ກ. ມີຄວາມເປັນເອກະພາບເປັນລາຍລັກອັກສອນຂອງອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນ ແລະ ມີຄວາມເຫັນດີຂອງລັດຖະບານ ຫຼື ການຕົກລົງຂອງອົງການທີ່ມີສິດອຳນາດຂອງສອງປະເທດ ກ່ຽວກັບການເປີດ ແລະ ຍົກລະດັບດ່ານຊາຍແດນຕາມຂໍ້ກຳນົດຂອງສັນຍາສະບັບນີ້;
   ຂ. ຮັບປະກັນສະພາບຄວາມເປັນຈິງ ແລະ ປະສິດທິຜົນ ເພື່ອຕອບສະໜອງຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ ຂອງສອງແຂວງທີ່ມີຊາຍແດນຮ່ວມກັນເວົ້າສະເພາະ ແລະ ຂອງສອງປະເທດເວົ້າລວມ;
   ຄ. ຮັບປະກັນອຳນາດອະທິປະໄຕ ແລະ ຜົນແຜ່ນດິນອັນຄົບຖ້ວນ ແລະ ປ້ອງກັນຊາດປ້ອງກັນຄວາມສະຫງົບຂອງແຕ່ລະປະເທດ.
2. ອົງການທີ່ມີສິດອຳນາດໃນການເປີດ ແລະ ຍົກລະດັບດ່ານຊາຍແດນ.
   ກ. ລັດຖະບານສອງປະເທດ ຕົກລົງການເປີດດ່ານສາກົນ, ດ່ານທ້ອງຖິ່ນ; ການຍົກລະດັບດ່ານທ້ອງຖິ່ນເປັນດ່ານສາກົນ, ດ່ານປະເພນີເປັນດ່ານທ້ອງຖິ່ນຕາມກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ ຫຼື ບັນດາ

ສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ. ຂັ້ນຕອນ, ລະບຽບການເປີດດ່ານສາກົນ, ດ່ານທ້ອງ ຖິ່ນ, ຍົກລະດັບດ່ານທ້ອງຖິ່ນເປັນດ່ານສາກົນ, ດ່ານປະເພນີເປັນດ່ານທ້ອງຖິ່ນໃຫ້ປະຕິບັດຕາມຂໍ້ກຳນົດໃນຂໍ້ 1, ມາດຕາ 41 ຂອງສັນຍາສະບັບນີ້;

ຂ. ອົງການປົກຄອງທ້ອງຖິ່ນຂັ້ນແຂວງທີ່ມີຊາຍແດນຮ່ວມກັນຕົກລົງການເປີດດ່ານປະເພນີ. ຂັ້ນຕອນ ແລະ ລະບຽບການເປີດດ່ານປະເພນີ ປະຕິບັດຕາມຂໍ້ກຳນົດຢູ່ຂໍ້ 2 ມາດຕາ 41 ຂອງສັນຍາສະບັບນີ້.

ມາດຕາ 41 ຂັ້ນຕອນ, ລະບຽບການເປີດ ແລະ ການຍົກລະດັບດ່ານຊາຍແດນ

1. ການເປີດດ່ານສາກົນ, ດ່ານທ້ອງຖິ່ນ, ການຍົກລະດັບດ່ານທ້ອງຖິ່ນເປັນດ່ານສາກົນ, ດ່ານປະເພນີເປັນດ່ານທ້ອງຖິ່ນໃຫ້ປະຕິບັດຕາມຂັ້ນຕອນ ແລະ ລະບຽບການດັ່ງນີ້:
   ກ. ບາດກ້າວທີ 1: ອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນຂອງສອງຝ່າຍດຳເນີນການເຈລະຈາ ແລະ ເປັນເອກະພາບກັນເປັນລາຍລັກອັກສອນ ກ່ຽວກັບສະຖານທີ່, ຂອບເຂດ, ແຜນຜັງ, ແຜນການ, ເວລາດຳເນີນການເປີດ ຫຼື ຍົກລະດັບດ່ານ;
   ຂ. ບາດກ້າວທີ 2: ໃນໄລຍະເວລາ 30 (ສາມສິບ) ວັນ, ນັບແຕ່ມື້ລົງນາມປິດບັນທຶກ, ອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນສອງປະເທດ ຕ້ອງມີຈົດໝາຍທາງການ (ຕິດແນບປິດບັນທຶກ ແລະ ເອກະສານອື່ນໆ ຕາມຂໍ້ກຳນົດກົດໝາຍຂອງແຕ່ລະປະເທດ) ລາຍງານຕໍ່ອົງການຊາຍແດນສູນກາງຂອງແຕ່ລະຝ່າຍ;
   ຄ. ບາດກ້າວທີ 3: ໃນກຳນົດ 90 (ເກົ້າສິບ) ວັນ, ນັບແຕ່ມື້ໄດ້ຮັບລາຍງານຂອງອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນ, ອົງການຊາຍແດນສູນກາງຂອງແຕ່ລະຝ່າຍປະຕິບັດລະບຽບການໃຫ້ສຳເລັດ, ເອກະສານຕາມຂໍ້ກຳນົດກົດໝາຍຂອງປະເທດຕົນ ລາຍງານຕໍ່ລັດຖະບານຂອງປະເທດຕົນ ເພື່ອຕົກລົງກ່ຽວກັບການເປີດ ຫຼື ຍົກລະດັບດ່ານ;
   ງ. ບາດກ້າວທີ 4: ປະຕິບັດຄຳຕົກລົງຂອງລັດຖະບານແຕ່ລະປະເທດ, ກະຊວງການຕ່າງປະເທດຂອງແຕ່ລະປະເທດແຈ້ງໃຫ້ກັນຊາບ ແລະ ແຈ້ງໃຫ້ອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນທີ່ກ່ຽວຂ້ອງຂອງຕົນ ກ່ຽວກັບຂໍ້ຕົກລົງຂອງລັດຖະບານແຕ່ລະປະເທດທີ່ເຫັນດີໃຫ້ເປີດ ຫຼື ຍົກລະດັບດ່ານ;
   ຈ. ບາດກ້າວທີ 5: ເມື່ອໄດ້ຮັບແຈ້ງການກ່ຽວກັບຄຳເຫັນດີໃຫ້ເປີດ ຫຼື ຍົກລະດັບດ່ານຂອງກະຊວງການຕ່າງປະເທດຂອງປະເທດຕົນ, ອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນທີ່ກ່ຽວຂ້ອງຂອງສອງປະເທດ ຈະປຶກສາຫາລືເປັນເອກະພາບກັນໃນການຈັດພິທີເປີດ ຫຼື ຍົກລະດັບດ່ານ ແລະ ລາຍງານວຽກງານດັ່ງກ່າວນີ້ ຕໍ່ອົງການຊາຍແດນຂັ້ນສູນກາງ ແລະ ອົງການທີ່ມີສິດອຳນາດອື່ນໆຂອງສອງຝ່າຍ.
2. ການເປີດດ່ານປະເພນີ ໃຫ້ປະຕິບັດຕາມຂັ້ນຕອນ ແລະ ລະບຽບການ ດັ່ງນີ້:
   ກ. ບາດກ້າວທີ 1: ອົງການປົກຄອງທ້ອງຖິ່ນຂັ້ນແຂວງສອງປະເທດ ດຳເນີນການປຶກສາຫາລື ແລະ ເປັນເອກະພາບກັນເປັນລາຍລັກອັກສອນ ກ່ຽວກັບສະຖານທີ່, ຂອບເຂດ, ແຜນຜັງ, ແຜນການ, ເວລາປະຕິບັດການເປີດດ່ານປະເພນີ;
   ຂ. ບາດກ້າວທີ 2: ໃນໄລຍະເວລາ 90 (ເກົ້າສິບ) ວັນ, ນັບແຕ່ວັນລົງນາມປິດບັນທຶກ, ອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນຂອງແຕ່ລະປະເທດປະຕິບັດຂັ້ນຕອນ, ຕາມກົດໝາຍ ແລະ ລະບຽບການຂອງຕົນ ກ່ຽວກັບການເປີດດ່ານປະເພນີ ແລະ ເມື່ອສຳເລັດຕ້ອງແຈ້ງໃຫ້ກັນຊາບ;
   ຄ. ບາດກ້າວທີ 3: ອົງການປົກຄອງທ້ອງຖິ່ນຂັ້ນແຂວງ ທີ່ກ່ຽວຂ້ອງຂອງສອງປະເທດປຶກສາຫາລື, ເປັນເອກະພາບກັນໃນການຈັດພິທີເປີດດ່ານປະເພນີ ແລະ ລາຍງານວຽກງານດັ່ງກ່າວນີ້ ຕໍ່ອົງການຊາຍແດນຂັ້ນສູນກາງ ແລະ ອົງການທີ່ມີສິດອຳນາດອື່ນໆຂອງຕົນ.

ມາດຕາ 42 ກົນໄກເຮັດວຽກ ແລະ ການປະສານສົມທົບ ລະຫວ່າງ ບັນດາອົງການບໍລິຫານລັດທາງດ້ານວິຊາການຢູ່ດ່ານຊາຍແດນ

1. ໃນເວລາເຮັດວຽກຂອງບັນດາດ່ານຊາຍແດນ, ອົງການບໍລິຫານລັດທາງດ້ານວິຊາການຢູ່ດ່ານຊາຍແດນສອງປະເທດໃຫ້ອີງຕາມຂໍ້ກຳນົດກົດໝາຍຂອງແຕ່ລະປະເທດ ແລະ ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ; ເພື່ອປະຕິບັດໜ້າທີ່, ຂອບເຂດສິດຂອງຕົນ. ຖ້າຈຳເປັນອົງການບໍລິຫານລັດທາງດ້ານວິຊາການຢູ່ກັບດ່ານຊາຍແດນຂອງສອງປະເທດອາດເຊັນຂໍ້ຕົກລົງຕ່າງຫາກ ເພື່ອຫຼຸດຜ່ອນລະບຽບການກວດກາ ແລະ ຄຸ້ມຄອງ.
2. ອົງການບໍລິຫານລັດທາງດ້ານວິຊາການຢູ່ດ່ານຊາຍແດນສອງປະເທດ ອາດສ້າງຕັ້ງກົນໄກຮ່ວມມື, ແລກປ່ຽນຂໍ້ມູນຂ່າວສານນຳກັນ, ດຳເນີນການເຈລະຈາ, ພິບປະ ແລະ ແລກປ່ຽນດ້ານວິຊາສະເພາະ ກ່ຽວກັບບັນຫາທີ່ກ່ຽວຂ້ອງກັບດ່ານຊາຍແດນ.
3. ອົງການບໍລິຫານລັດທາງດ້ານວິຊາການຢູ່ດ່ານຊາຍແດນຂອງສອງປະເທດ ແມ່ນໃຫ້ອີງໃສ່ບັນດາຂໍ້ຕົກລົງທີ່ກ່ຽວຂ້ອງຂອງອົງການກ່ຽວຂ້ອງປະເທດຕົນ, ແຈ້ງໃຫ້ກັນຊາບຂໍ້ມູນຂ່າວສານກ່ຽວກັບປະເພດ, ຈຳນວນ ແລະ ມູນຄ່າວັດຖຸພັນ, ຈຳນວນເງິນສິດຂອງບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າ-ອອກເມືອງ ແລະ ບັນດາຂໍ້ກຳນົດອື່ນໆທີ່ກ່ຽວກັບການກວດກາຢູ່ດ່ານຊາຍແດນຂອງປະເທດຕົນ.
4. ບັນຫາທີ່ອົງການບໍລິຫານລັດທາງດ້ານວິຊາການຢູ່ດ່ານຊາຍແດນສອງປະເທດທີ່ບໍ່ສາມາດແກ້ໄຂໄດ້ໃນຂອບເຂດສິດຂອງຕົນຕ້ອງລາຍງານໃຫ້ຂັ້ນເທິງພິຈາລະນາ ແລະ ແກ້ໄຂ ໂດຍຜ່ານທາງການທູດ.

ໝວດທີ VIII
ການແກ້ໄຂເຫດການທີ່ເກີດຂຶ້ນຕາມຊາຍແດນ

ມາດຕາ 43 ການຮ່ວມມືແກ້ໄຂເຫດການທີ່ເກີດຂຶ້ນຕາມຊາຍແດນ

ອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນ ຫຼື ບັນດາອົງການທີ່ກ່ຽວຂ້ອງ ແລະ ກຳລັງຮັບຜິດຊອບປ້ອງກັນຊາຍແດນຂອງສອງປະເທດ ຮ່ວມມືກັນສະກັດກັ້ນ ແລະ ປະສານສົມທົບກັນກວດກາ ເພື່ອແກ້ໄຂເຫດການທີ່ເກີດຂຶ້ນຕາມຊາຍແດນ ດັ່ງນີ້:

1. ການກະທຳທີ່ລະເມີດຂໍ້ກຳນົດໃນມາດຕາ 5 ຫຼື ການເຄື່ອນໄຫວທີ່ຜິດກົດໝາຍ ທີ່ລະບຸໃນຂໍ້ 1 ມາດຕາ 29 ຂອງສົນຍາສະບັບນີ້;
2. ການກໍ່ສ້າງກິດຈະການຢູ່ລຳນ້ຳ, ຫ້ວຍ ແລະ ກິດຈະການອື່ນໆຢູ່ເຂດຊາຍແດນທີ່ຂັດກັບບັນດາຂໍ້ກຳນົດຢູ່ຂໍ້ 3 ມາດຕາ 9, ມາດຕາ 13 ແລະ ມາດຕາ 20 ຂອງສົນຍາສະບັບນີ້;
3. ກໍ່ໃຫ້ເກີດລະເບີດທີ່ລະເມີດຂໍ້ກຳນົດໃນຂໍ້ 4 ມາດຕາ 16 ຂອງສົນຍາສະບັບນີ້;
4. ການກະທຳຢູ່ຟາກຊາຍແດນເບື້ອງນີ້ ຫຼື ຟາກຊາຍແດນເບື້ອງນັ້ນອັນໄດ້ກໍ່ໃຫ້ເກີດມີການບາດເຈັບ ຫຼື ເສັຍຊີວິດ ຫຼື ການກະທຳທີ່ເປັນອັນຕະລາຍອື່ນໆ ຕໍ່ຜູ້ທີ່ຢູ່ເຂດຊາຍແດນຂອງປະເທດນັ້ນ;
5. ປຸ້ນຈີ້ເອົາຊັບສິນ, ຫຼອກລວງຍຶດຊັບ, ລັກຊັບ, ທຳລາຍ ຫຼື ເຈດຕະນາເຮັດໃຫ້ຊັບຂອງຜູ້ອື່ນເສັຍຫາຍເປ່ເພ ແລະ ອື່ນໆຢູ່ດິນແດນຂອງປະເທດນັ້ນ;
6. ບັນຫາສຸຂະພາບຊຸມຊົນ, ພະຍາດຕິດຕໍ່ຄົນ, ສັດ, ໂລກລະບາດ, ແມ່ກາຝາກສັດ, ພະຍຸລະບາດ, ສັດຕູພືດ, ຫຍ້າທີ່ສົ່ງຜົນກະທົບຕໍ່ພືດ ແລະ ພືດທີ່ມີຄວາມສ່ຽງອື່ນໆ ແຜ່ລາມຂ້າມຊາຍແດນ;

7. ການຈັດຕັ້ງ, ການຍຸແຍ່ຈອບອອຍ ຫຼື ບັງຄັບພົນລະເມືອງປະເທດໜຶ່ງ ຂ້າມແດນໄປຫຼິ້ນການພະນັນຢູ່ອີກປະເທດໜຶ່ງ;
8. ອັກຄີໄພ, ອຸທົກກະໄພ ຫຼື ໄພພິບັດອື່ນໆຂ້າມຊາຍແດນ;
9. ການຄ້າມະນຸດ, ພິເສດແມ່ນແມ່ຍິງ ແລະ ເດັກນ້ອຍຂ້າມຊາຍແດນ;
10. ລ່ວງລະເມີດຂ້າມແດນທຳການຜະລິດ, ລ່າສັດ, ລ້ຽງສັດຜິດກົດໝາຍ;
11. ຝັງສົບ, ເຄື່ອນຍ້າຍສົບ, ຂົນສົ່ງຊາກສົບ, ອັດຖິ, ສັດ ແລະ ພືດຜິດກົດໝາຍຂ້າມແດນ;
12. ຄອບຄອງ, ຂົນສົ່ງ, ຊື້-ຂາຍທີ່ຜິດກົດໝາຍ, ຢາເສບຕິດ, ສານຕັ້ງຕົ້ນ ຫຼື ຍານພາຫະນະ, ອຸປະກອນການຜະລິດຢາເສບຕິດທີ່ຜິດກົດໝາຍ;
13. ຈັດຕັ້ງ, ຊັກຊວນ ແລະ ບັງຄັບຄ້າປະເວນີຂ້າມແດນ;
14. ຈັບ, ກັກຂັງ, ໜ່ວງໜ່ຽວ, ທຸບຕີ, ທໍລະມານ, ບັງຄັບໃຫ້ປາກຄຳ ຫຼື ການກະທຳອື່ນໆ ທີ່ເປັນສາເຫດໂດຍກົງສ້າງຄວາມເສັຍຫາຍໃຫ້ພົນລະເມືອງຂອງອີກປະເທດໜຶ່ງ;
15. ບັນຫາເຫດການອື່ນໆ.

ມາດຕາ 44 ການແກ້ໄຂຄົນເຂົ້າ-ອອກເມືອງຜິດກົດໝາຍ

1. ອົງການປົກຄອງທ້ອງຖິ່ນຂັ້ນແຂວງທີ່ມີຊາຍແດນຮ່ວມກັນ, ບັນດາອົງການທີ່ກ່ຽວຂ້ອງ, ກຳລັງຮັບຜິດຊອບ ແລະ ກົມກອງຮັບຜິດຊອບປ້ອງກັນຊາຍແດນຂອງສອງປະເທດ ມີໜ້າທີ່ດັ່ງນີ້:
   ກ. ສົມທົບກັນຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍບັນດາມາດຕະການອັນຈຳເປັນ ເພື່ອປ້ອງກັນ ແລະ ສະກັດກັ້ນການກະທຳຂອງຜູ້ເຂົ້າ-ອອກເມືອງຜິດກົດໝາຍ ແລະ ການເຄື່ອນໄຫວລະເມີດກົດໝາຍຢູ່ເຂດຊາຍແດນ.
   ຂ. ເມື່ອພົບເຫັນປະກົດການເຄື່ອນໄຫວທີ່ລະເມີດກົດໝາຍຂອງຜູ້ເຂົ້າ-ອອກເມືອງ ສອງຝ່າຍຈະແຈ້ງໃຫ້ກັນຊາບຢ່າງທັນການເພື່ອສົມທົບກັນດຳເນີນມາດຕະການສະກັດກັ້ນ, ແກ້ໄຂຜູ້ເຂົ້າ-ອອກເມືອງຜິດກົດໝາຍໃຫ້ປະຕິບັດຕາມຂໍ້ກຳນົດທີ່ລະບຸໄວ້ຢູ່ຂໍ້ 4 (ກ, ຄ) ແລະ ຂໍ້ 5 ມາດຕາ 29 ຂອງສັນຍາສະບັບນີ້;
   ຄ. ເຄົາລົບກຽດສັກສີ ແລະ ບັນດາສິດທິພື້ນຖານຂອງຜູ້ເຂົ້າ-ອອກເມືອງຜິດກົດໝາຍ; ບໍ່ໃຫ້ມີການປະພຶດທີ່ຮຸນແຮງ, ທຳຮ້າຍ ຫຼື ໄຮ້ມະນຸດສະທຳຕໍ່ເຂົາເຈົ້າ;
   ງ. ຫ້າມນຳໃຊ້ອາວຸດຕໍ່ຜູ້ເຂົ້າ-ອອກເມືອງຜິດກົດໝາຍ ຖ້າຫາກບໍ່ມີການຂົ່ມຂູ່ໂດຍກົງຕໍ່ຄວາມປອດໄພຕໍ່ຊີວິດ ແລະ ຮ່າງກາຍຂອງເຈົ້າໜ້າທີ່ຄຸ້ມຄອງປ້ອງກັນຊາຍແດນ ຫຼື ຄົນອື່ນຢ່າງເດັດຂາດ;
   ໃນກໍລະນີຊີວິດ, ຮ່າງກາຍຂອງເຈົ້າໜ້າທີ່ ຫຼື ຄົນອື່ນທີ່ຖືກຂົ່ມຂູ່ຢ່າງຮ້າຍແຮງ ຍ້ອນການກະທຳຂອງຜູ້ເຂົ້າ-ອອກເມືອງຜິດກົດໝາຍ, ເຈົ້າໜ້າທີ່ມີສິດນຳໃຊ້ອາວຸດ ເພື່ອສະກັດກັ້ນການນຳໃຊ້ອາວຸດຕໍ່ເປົ້າໝາຍຂ້າງເທິງ ຊຶ່ງຖືວ່າເປັນມາດຕະການສຸດທ້າຍທີ່ບໍ່ມີວິທີອື່ນໃດ ເພື່ອສະກັດກັ້ນການກະທຳທີ່ອັນຕະລາຍຂອງຜູ້ກ່ຽວ ແລະ ຕ້ອງປະຕິບັດຕາມກົດໝາຍຂອງແຕ່ລະປະເທດໃນການນຳໃຊ້ອາວຸດ;
   ຈ. ໃຫ້ປະຖົມພະຍາບານຢ່າງທັນການຕໍ່ຜູ້ເຂົ້າ-ອອກເມືອງຜິດກົດໝາຍທີ່ຖືກບາດເຈັບໃນການສະກັດກັ້ນ, ໄລ່ຈັບ.
2. ຂັ້ນຕອນ ແລະ ລະບຽບການແກ້ໄຂ ສຳລັບຜູ້ເຂົ້າ-ອອກເມືອງຜິດກົດໝາຍ:

   ເມື່ອພົບເຫັນ ແລະ ກັກຕົວຊົ່ວຄາວຜູ້ເຂົ້າ-ອອກເມືອງຜິດກົດໝາຍ, ອົງການປົກຄອງທ້ອງຖິ່ນຂັ້ນແຂວງທີ່ມີຊາຍແດນຮ່ວມກັນ, ກຳລັງຮັບຜິດຊອບ ແລະ ກົມກອງຮັບຜິດຊອບປ້ອງກັນຊາຍແດນຂອງສອງຝ່າຍຕ້ອງປະຕິບັດຕາມຂັ້ນຕອນ ແລະ ລະບຽບການດັ່ງລຸ່ມນີ້:

ກ. ສົມທົບກັນກວດກາ, ຢັ້ງຢືນຂໍ້ມູນອັນລະອຽດຂອງຜູ້ເຂົ້າ-ອອກເມືອງຜິດກົດໝາຍ ແລະ ຈຸດປະສົງຂອງການເຂົ້າ-ອອກເມືອງຜິດກົດໝາຍໂດຍໄວ;

ຂ. ພາຍຫຼັງການກັກຕົວຊົ່ວຄາວ ກໍຄືກ່ອນການມອບສົ່ງ, ຝ່າຍທີ່ກັກຕົວຊົ່ວຄາວ ຕ້ອງແຈ້ງໃຫ້ປະເທດຜູ້ເຂົ້າ-ອອກເມືອງຜິດກົດໝາຍ ຫຼື ປະເທດທີ່ອະນຸຍາດໃຫ້ຜູ້ກ່ຽວອາໄສຢູ່ຊາບຢ່າງທັນການ ໂດຍຜ່ານທາງການທູດ ຕາມຫຼັກການສາກົນ ຫຼື ຕາມຂໍ້ຕົກລົງທີ່ກ່ຽວຂ້ອງ ລະຫວ່າງ ປະເທດກັກຕົວຊົ່ວຄາວ ແລະ ປະເທດທີ່ກ່ຽວຂ້ອງ;

ຄ. ໃຫ້ກວດກາຢັ້ງຢືນ ແລະ ປະຕິບັດລະບຽບການມອບສົ່ງຜູ້ເຂົ້າ-ອອກເມືອງຜິດກົດໝາຍໂດຍໄວ ຕາມຂໍ້ກຳນົດຂອງກົດໝາຍແຕ່ລະປະເທດ ແລະ ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ;

ສອງຝ່າຍມີໜ້າທີ່ແຈ້ງໃຫ້ກັນຊາບ ໂດຍຜ່ານທາງການທູດ ກ່ຽວກັບສະພາບທີ່ພົວພັນເຖິງຜູ້ເຂົ້າ-ອອກເມືອງຜິດກົດໝາຍ.

ງ. ເມື່ອມອບສົ່ງຜູ້ທີ່ເຂົ້າ-ອອກເມືອງຜິດກົດໝາຍ, ຝ່າຍມອບສົ່ງຕ້ອງສະໜອງເອກະສານ, ຊັບສິນທີ່ເຂົາເຈົ້າຖືຕິດຕົວໄປນຳ ແລະ ຍານພາຫະນະຂົນສົ່ງທີ່ຜູ້ກ່ຽວນຳໃຊ້ເຂົ້າ-ອອກເມືອງຜິດກົດໝາຍຖ້າມີ; ສ້າງບົດບັນທຶກການມອບສົ່ງຜູ້ເຂົ້າ-ອອກເມືອງຜິດກົດໝາຍ (ແບບຟອມມີຢູ່ໃນເອກະສານຊ້ອນທ້າຍ ๑);

ຈ. ກໍລະນີການເຂົ້າ-ອອກເມືອງຜິດກົດໝາຍ, ຖ້າຜູ້ເຂົ້າ-ອອກເມືອງຜິດກົດໝາຍຍັງມີການກະທຳທີ່ລະເມີດກົດໝາຍອື່ນໆ ຢູ່ໃນດິນແດນຂອງປະເທດທີ່ກັກຕົວຊົ່ວຄາວຈະຖືກແກ້ໄຂຕາມຂັ້ນຕອນ, ລະບຽບການຂອງປະເທດທີ່ກັກຕົວຊົ່ວຄາວ. ອົງການທີ່ມີສິດອຳນາດຂອງປະເທດທີ່ກັກຕົວຊົ່ວຄາວ ມີໜ້າທີ່ແຈ້ງຕໍ່ອົງການມີສິດອຳນາດທີ່ຜູ້ກ່ຽວເປັນພົນລະເມືອງ ຫຼື ປະເທດທີ່ຜູ້ກ່ຽວໄດ້ຮັບອະນຸຍາດອາໄສຢູ່ ກ່ຽວກັບການລະເມີດກົດໝາຍ, ຜົນຂອງການສອບສວນ ແລະ ບັນດາມາດຕະການແກ້ໄຂ;

ກໍລະນີຖ້າຜູ້ເຂົ້າ-ອອກເມືອງຜິດກົດໝາຍມີການກະທຳທີ່ກໍ່ເຫດຮ້າຍແຮງ ການແກ້ໄຂຕ້ອງປະຕິບັດຕາມກົດໝາຍຂອງແຕ່ລະປະເທດ ແລະ ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ.

ບົດບັນທຶກການໃຫ້ປາກຄຳຮັບຮູ້ການກະທຳ ການກໍ່ເຫດຂອງຜູ້ເຂົ້າ-ອອກເມືອງຜິດກົດໝາຍບໍ່ສາມາດນຳໃຊ້ເປັນຫຼັກຖານໃສ່ໂທດພຽງແຕ່ຢ່າງດຽວໄດ້.

ມາດຕາ 45 ການແກ້ໄຂຊາກສົບຄົນ, ສັດ, ສັດປີກຢູ່ບໍລິເວນຊາຍແດນ

1. ເມື່ອພົບເຫັນຊາກສົບຄົນທີ່ບໍ່ທັນສາມາດສັນນະສູດໄດ້, ອົງການປົກຄອງທ້ອງຖິ່ນຂັ້ນແຂວງທີ່ມີຊາຍແດນຮ່ວມກັນ ຫຼື ກຳລັງຮັບຜິດຊອບປ້ອງກັນຊາຍແດນຂອງສອງປະເທດ ຕ້ອງແຈ້ງໃຫ້ກັນຊາບໂດຍໄວ ເພື່ອພ້ອມກັນພິສູດຊາກສົບນັ້ນແມ່ນຄົນຂອງປະເທດໃດ; ເມື່ອຈຳເປັນຕ້ອງໄດ້ພ້ອມກັນສັນນະສູດ, ເຈລະຈາການແກ້ໄຂບັນຫາການມອບ-ຮັບ ຫຼື ວິທີການແກ້ໄຂທີ່ເໝາະສົມ. ຖ້າພາຍ 48 (ສີ່ສິບແປດ) ຊົ່ວໂມງ ຝ່າຍທີ່ຖືກແຈ້ງໃຫ້ຊາບບໍ່ແຕ່ງຕັ້ງຜູ້ຕາງໜ້າມາບ່ອນເກີດເຫດ ຫຼື ບໍ່ມີຈົດໝາຍທາງການຮຽກຮ້ອງຕ່າງໆ, ຝ່າຍພົບເຫັນຈະດຳເນີນການຝັງ ແລະ ເຮັດບົດບັນທຶກ (ຕາມແບບຟອມມີຢູ່ໃນເອກະສານຊ້ອນທ້າຍ 10).
2. ເມື່ອພົບເຫັນຊາກສັດ, ສັດປີກຢູ່ບໍລິເວນຊາຍແດນ, ອົງການປົກຄອງທ້ອງຖິ່ນທີ່ມີຊາຍແດນຮ່ວມກັນ, ອົງການທີ່ກ່ຽວຂ້ອງ ຫຼື ກົມກອງຮັບຜິດຊອບປ້ອງກັນຊາຍແດນຂອງສອງປະເທດ ຕ້ອງແຈ້ງໃຫ້ກັນຊາບດ່ວນ ເພື່ອສົມທົບກັນແກ້ໄຂ.
3. ຊາກສົບຄົນ, ສັດ, ສັດປີກ ທີ່ລະບຸຢູ່ມາດຕານີ້ ຕ້ອງໄດ້ກັກກັນ ແລະ ນຳໃຊ້ມາດຕະການແກ້ໄຂທີ່ຈຳເປັນ ເພື່ອຮັບປະກັນດ້ານການອະນາໄມ ແລະ ສະກັດກັ້ນພະຍາດລະບາດ.

ມາດຕາ 46 ການແກ້ໄຂຍານພາຫະນະການບິນ ແລະ ອຸປະກອນການບິນຂ້າມແດນຜິດກົດໝາຍ

1. ພາຍຫຼັງທີ່ຝ່າຍໃດໜຶ່ງຢືນຢັນວ່າມີຍານພາຫະນະການບິນ ແລະ ອຸປະກອນການບິນ ບິນຈາກ່ານຟ້າປະເທດໜຶ່ງ ຂ້າມແດນຜິດກົດໝາຍເຂົ້າມາ່ານຟ້າຂອງປະເທດຕົນ, ຝ່າຍທີ່ຢືນຢັນນັ້ນ ຕ້ອງແຈ້ງຂໍ້ມູນອັນຈຳເປັນກ່ຽວກັບ ເລກລະຫັດ, ເວລາຜ່ານຊາຍແດນ, ຈຸດ (ລະບຸແຈ້ງພິກັດພູມສາດ), ລະດັບສູງ ແລະ ທິດທາງການບິນ (ເສັ້ນທາງ ບິນ) ຂອງຍານພາຫະນະການບິນ ຫຼື ອຸປະກອນການບິນດັ່ງກ່າວໃຫ້ອີກຝ່າຍໜຶ່ງຊາບໃນທັນທີ.

ພາຍຫຼັງທີ່ໄດ້ຮັບຂໍ້ມູນອັນຈຳເປັນຂ້າງເທິງ ຝ່າຍທີ່ມີຍານພາຫະນະການບິນ ຫຼື ອຸປະກອນການບິນຂ້າມແດນ ຜິດກົດໝາຍ ຕ້ອງດຳເນີນການກວດກາທັນທີ. ພ້ອມກັນນັ້ນ, ຕ້ອງແຈ້ງສາເຫດການບິນຂ້າມແດນຜິດກົດໝາຍ ໃຫ້ອີກຝ່າຍໜຶ່ງຊາບ. ກໍລະນີພາຍຫຼັງການກວດກາແລ້ວ ແຕ່ບໍ່ມີຂໍ້ມູນໃດທີ່ກ່ຽວຂ້ອງ ຝ່າຍທີ່ມີຍານພາຫະນະ ການບິນ ຫຼື ອຸປະກອນການບິນຂ້າມແດນຜິດກົດໝາຍ ຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຊາບ, ພ້ອມກັນນັ້ນກໍ່ນຳໃຊ້ມາດ ຕະການອັນຈຳເປັນເພື່ອຊອກຫາ.

ສອງຝ່າຍອາດຮ່ວມກັນສອບສວນຫາສາເຫດຍານພາຫະນະການບິນ ຫຼື ອຸປະກອນການບິນຂ້າມແດນຜິດ ກົດໝາຍ.

2. ຂັ້ນຕອນ, ລະບຽບການແລກປ່ຽນຂໍ້ມູນ ກ່ຽວກັບຍານພາຫະນະການບິນ ຫຼື ອຸປະກອນການບິນຂ້າມແດນຜິດ ກົດໝາຍໃຫ້ແກ້ໄຂຕາມຂໍ້ຕົກລົງທີ່ກ່ຽວຂ້ອງ ລະຫວ່າງ ສອງຝ່າຍ ຫຼື ລະຫວ່າງ ອົງການກ່ຽວຂ້ອງຂອງສອງປະ ເທດ.

ມາດຕາ 47 ການແກ້ໄຂບັນຫາທີ່ກ່ຽວຂ້ອງອື່ນໆ

ໃນຂະບວນການແກ້ໄຂບັນຫາເຫດການຊາຍແດນ ອົງການປົກຄອງທ້ອງຖິ່ນຂັ້ນແຂວງທີ່ມີຊາຍແດນຮ່ວມ ກັນ, ອົງການກ່ຽວຂ້ອງ, ກຳລັງຮັບຜິດຊອບ ແລະ ກົມກອງຮັບຜິດຊອບປ້ອງກັນຊາຍແດນຂອງສອງປະເທດ ມີໜ້າ ທີ່ສົມທົບກັນສອບສວນ, ຢັ້ງຢືນແກ້ໄຂບັນຫາທີ່ເກີດຂຶ້ນຢ່າງວ່ອງໄວຕາມຂໍ້ກຳນົດຂອງສັນຍາສະບັບນີ້ ແລະ ບັນດາ ສົນທິ ສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ, ພ້ອມກັນນັ້ນ ຊອກຄົ້ນ ແລະ ມອບສິ່ງຊັບສິນທີ່ ກ່ຽວຂ້ອງ (ຖ້າມີ). ການມອບສິ່ງຊັບສິນທີ່ກ່ຽວຂ້ອງນັ້ນຕ້ອງສ້າງເປັນບົດບັນທຶກ (ຕາມແບບຟອມມີຢູ່ໃນ ເອກະສານຊ້ອນທ້າຍ 11).

ໝວດທີ IX
ກົນໄກຈັດຕັ້ງປະຕິບັດສັນຍາ

ເພື່ອຈັດຕັ້ງປະຕິບັດສັນຍາສະບັບນີ້, ສອງຝ່າຍເປັນເອກະພາບກັນສ້າງຕັ້ງກົນໄກສາມຂັ້ນ, ລວມມີຂັ້ນກອງ ປ້ອງກັນຊາຍແດນ, ຂັ້ນແຂວງຊາຍແດນ ແລະ ອົງການຊາຍແດນຂັ້ນສູນກາງ ລະອຽດດັ່ງນີ້:

I. ກົມກອງຮັບຜິດຊອບປ້ອງກັນຊາຍແດນ

ມາດຕາ 48 ສິດ ແລະ ໜ້າທີ່ຂອງບັນດາກົມກອງຮັບຜິດຊອບປ້ອງກັນຊາຍແດນຂອງສອງປະເທດ

1. ຈັດຕັ້ງການຄຸ້ມຄອງຕອນຊາຍແດນ ແລະ ປົກປັກຮັກສາບັນດາຫຼັກໝາຍຊາຍແດນປະເທດ ທີ່ກົມກອງຂອງຕົນ ຮັບຜິດຊອບ.
2. ແຈ້ງໃຫ້ອີກຝ່າຍໜຶ່ງຊາບຢ່າງທັນການເພື່ອກວດກາ ແລະ ຮ່ວມກັນເຮັດບົດບັນທຶກ ເພື່ອລາຍງານຂັ້ນເທິງຂອງ ແຕ່ລະປະເທດ ເມື່ອພົບເຫັນບັນດາປະກົດການປ່ຽນແປງ ກ່ຽວກັບເສັ້ນຊາຍແດນຢູ່ພູມີປະເທດຕົວຈິງ, ພົບເຫັນ

ຫຼັກໝາຍຊາຍແດນປະເທດທີ່ຖືກທຳລາຍ, ເປ່ເພ, ຖືກເຄື່ອນຍ້າຍ ແລະ ປະກົດການທີ່ຜິດປົກກະຕິອື່ນໆ. ສະກັດກັ້ນການເຄື່ອນໄຫວທຳລາຍ, ເຄື່ອນຍ້າຍຫຼັກໝາຍຊາຍແດນປະເທດຢ່າງທັນການ.

3. ດຳເນີນການລາດຕະເວນຊາຍແດນ, ຫຼັກໝາຍຊາຍແດນປະເທດຮ່ວມກັນເປັນປະຈຳ, ຢ່າງໜ້ອຍ 1 (ໜຶ່ງ) ຄັ້ງ/ເດືອນ; ເວລາ ແລະ ຂອບເຂດລາດຕະເວນຮ່ວມກັນ ແມ່ນກົມກອງປ້ອງກັນຊາຍແດນທີ່ກ່ຽວຂ້ອງຂອງສອງປະເທດຕົກລົງກັນ.
4. ເຂົ້າຮ່ວມຄະນະກວດກາປະສົມ ແລະ ປະຕິບັດໜ້າທີ່ໆຂັ້ນເທິງ ແລະ ຫົວໜ້າຄະນະກວດກາປະສົມມອບໝາຍໃຫ້ໃນເມື່ອສອງຝ່າຍຈັດຕັ້ງການກວດກາຊາຍແດນ, ຫຼັກໝາຍຊາຍແດນຮ່ວມກັນ; ເວລາ ແລະ ຂອບເຂດການກວດກາຮ່ວມແມ່ນປະຕິບັດຕາມແຜນການຂອງອົງການຊາຍແດນຂັ້ນສູນກາງສອງຝ່າຍວາງອອກ.
5. ດຳເນີນການສ້ອມແປງ, ບຳລຸງຮັກສາ, ຟື້ນຟູຫຼັກໝາຍຊາຍແດນປະເທດ ໃນຂອບເຂດທີ່ກົມກອງຮັບຜິດຊອບຕາມແຜນການຂອງອົງການຊາຍແດນຂັ້ນສູນກາງຂອງຝ່າຍຕົນ.
6. ປະຕິບັດໜ້າທີ່ກວດກາ, ຄວບຄຸມການເຂົ້າ-ອອກເມືອງ, ສະກັດກັ້ນ ແລະ ຕ້ານການລະເມີດລະບຽບການຄຸ້ມຄອງຊາຍແດນທີ່ໄດ້ລະບຸໄວ້ໃນສັນຍາສະບັບນີ້.
7. ປະຕິບັດໜ້າທີ່ອື່ນໆ ຕາມຂໍ້ກຳນົດຂອງສັນຍາສະບັບນີ້.

ມາດຕາ 49 ກົນໄກການເຮັດວຽກງານຮ່ວມ ລະຫວ່າງ ກອງຮັບຜິດຊອບປ້ອງກັນຊາຍແດນຂອງສອງປະເທດ

1. ດຳເນີນກອງປະຊຸມເປັນປະຈຳທຸກໆ 3 (ສາມ) ເດືອນ/ຄັ້ງ ແລະ ກອງປະຊຸມວິສາມັນຖ້າຫາກມີຄວາມຈຳເປັນເພື່ອແກ້ໄຂວຽກງານທີ່ກຳນົດໃນມາດຕາ 48 ຂອງສັນຍາສະບັບນີ້.
2. ກອງປະຊຸມສາມັນຈະໄດ້ຜັດປ່ຽນກັນເປັນເຈົ້າພາບ, ຢູ່ດິນແດນຂອງປະເທດໃດ ປະເທດນັ້ນຕ້ອງຮັບຜິດຊອບການກິນຢູ່ພັກເຊົາ, ການເຄື່ອນໄຫວ ແລະ ຄວາມປອດໄພ. ເນື້ອໃນ ແລະ ຈຳນວນຜູ້ເຂົ້າຮ່ວມຕ້ອງເປັນເອກະພາບກັນກ່ອນທີ່ຈະເຂົ້າຮ່ວມກອງປະຊຸມ.
3. ຂໍ້ສະເໜີຈັດກອງປະຊຸມວິສາມັນ ຂອງຫົວໜ້າກົມກອງປ້ອງກັນຊາຍແດນຂອງປະເທດສະເໜີ ຕ້ອງໄດ້ສົ່ງໃຫ້ຄູ່ຕຳແໜ່ງຂອງອີກປະເທດໜຶ່ງ ລ່ວງໜ້າກ່ອນ 24 (ຊາວສີ່) ຊົ່ວໂມງ ແລະ ຕ້ອງໄດ້ຮັບຄຳຢືນຢັນຈາກຄູ່ຕຳແໜ່ງກ່ອນການຈັດກອງປະຊຸມດັ່ງກ່າວ.
4. ຖ້າຫົວໜ້າຂອງກົມກອງປ້ອງກັນຊາຍແດນຂອງຝ່າຍໜຶ່ງ ຕິດຂັດບໍ່ສາມາດມາຮ່ວມກອງປະຊຸມໄດ້ອາດແຕ່ງຕັ້ງຜູ້ຮອງຂອງຕົນ ຫຼື ຜູ້ຕາງໜ້າທີ່ມີສິດອຳນາດປ່ຽນແທນ ແຕ່ຕ້ອງແຈ້ງໃຫ້ຄູ່ຕຳແໜ່ງອີກຝ່າຍໜຶ່ງຊາບກ່ອນລ່ວງໜ້າ.
5. ທຸກກອງປະຊຸມຂອງຫົວໜ້າກົມກອງປ້ອງກັນຊາຍແດນສອງປະເທດ ຕ້ອງມີບົດບັນທຶກຮ່ວມລະບຸແຈ້ງວັນເວລາ, ພາກສ່ວນເຂົ້າຮ່ວມ, ສະຖານທີ່, ເນື້ອໃນບັນຫາທີ່ສອງຝ່າຍເປັນເອກະພາບແກ້ໄຂ, ບັນຫາທີ່ຍັງບໍ່ທັນໄດ້ແກ້ໄຂ. ບົດບັນທຶກເຮັດເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ມີລາຍເຊັນຫົວໜ້າຂອງກົມກອງປ້ອງກັນຊາຍແດນຂອງສອງປະເທດ ຫຼື ຜູ້ຖືກມອບສິດ.

ມາດຕາ 50 ສິດ ແລະ ໜ້າທີ່ຂອງຫົວໜ້າກອງປ້ອງກັນຊາຍແດນ

1. ຫົວໜ້າກອງຮັບຜິດຊອບປ້ອງກັນຊາຍແດນຂອງສອງຝ່າຍ ຕ້ອງຮ່ວມມືກັນຢ່າງແໜ້ນແຟ້ນ ໃນການປະຕິບັດໜ້າທີ່ ແລະ ແກ້ໄຂບັນຫາຕາມຂອບເຂດສິດ ແລະ ໜ້າທີ່ຮັບຜິດຊອບຂອງຕົນ. ຖ້າຫາກເກີນຂອບເຂດສິດ ແລະ ໜ້າທີ່ຮັບຜິດຊອບຂອງຕົນໃຫ້ລາຍງານຂັ້ນເທິງ ແລະ ອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນ.
2. ຮັບ ຫຼື ສົ່ງຜູ້ລະເມີດລະບຽບການຄຸ້ມຄອງຊາຍແດນໃຫ້ຄູ່ຕຳແໜ່ງຂອງຕົນຕາມຂໍ້ກຳນົດກົດໝາຍຂອງແຕ່ລະປະເທດ ແລະ ຂໍ້ກຳນົດຂອງສັນຍາສະບັບນີ້.

3. ສົມທົບການເຄື່ອນໄຫວຮ່ວມກັບຄູ່ຕຳແໜ່ງຂອງປະເທດນັ້ນ ພ້ອມກັນຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຢູ່ເຂດຊາຍແດນ.
4. ອອກໃບອະນຸຍາດຂ້າມຜ່ານແດນໃຫ້ແກ່ພົນລະເມືອງຢູ່ເຂດຊາຍແດນປະເທດຕົນ ເມື່ອເຂົາເຈົ້າມີການຮ້ອງຂໍເຂົ້າໄປເຂດຊາຍແດນຂອງປະເທດນັ້ນ ຕາມຂໍ້ກຳນົດຂອງສັນຍາສະບັບນີ້.
5. ປະຕິບັດໜ້າທີ່ອື່ນໆ ຕາມຂໍ້ກຳນົດຂອງສັນຍາສະບັບນີ້.

II. ແຂວງຊາຍແດນ

ມາດຕາ 51 ການຮ່ວມມື ລະຫວ່າງ ບັນດາແຂວງຊາຍແດນ

1. ສອງຝ່າຍຊຸກຍູ້ການສ້າງກົນໄກຮ່ວມມື ລະຫວ່າງ ບັນດາແຂວງຊາຍແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບບັນດາແຂວງຊາຍແດນຂອງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ຕາມບັນດາຄູ່ແຂວງຊາຍແດນດັ່ງລຸ່ມນີ້:

ລຳດັບ	ແຂວງຂອງລາວ	ແຂວງຂອງຫວຽດນາມ
1	ຜົ້ງສາລີ	ດຽນບຽນ
2	ຫຼວງພະບາງ	ດຽນບຽນ
3	ຫຼວງພະບາງ	ເຊີນລາ
4	ຫົວພັນ	ເຊີນລາ
5	ຫົວພັນ	ແທງຮ່ວາ
6	ຫົວພັນ	ເທງະອານ
7	ຊຽງຂວາງ	ເທງະອານ
8	ບໍລິຄຳໄຊ	ເທງະອານ
9	ບໍລິຄຳໄຊ	ຮ່າຕິ້ງ
10	ຄຳມ່ວນ	ຮ່າຕິ້ງ
11	ຄຳມ່ວນ	ກວາງບິ້ງ
12	ສະຫວັນນະເຂດ	ກວາງບິ້ງ
13	ສະຫວັນນະເຂດ	ກວາງຈິ
14	ສາລະວັນ	ກວາງຈິ
15	ສາລະວັນ	ເຫື່ອທຽນເຫວ້
16	ເຊກອງ	ເຫື່ອທຽນເຫວ້
17	ເຊກອງ	ກວາງນາມ
18	ເຊກອງ	ກອນຕຸມ
19	ອັດຕະປື	ກອນຕຸມ

2. ຮູບແບບກົນໄກການຮ່ວມມືອັນຕົ້ນຕໍ ລະຫວ່າງ ອົງການປົກຄອງທ້ອງຖິ່ນຂອງສອງປະເທດ ຈະໄດ້ປະຕິບັດຕາມຮູບແບບເຈລະຈາ. ເນື້ອໃນ, ພາກສ່ວນເຂົ້າຮ່ວມ, ວັນເວລາ ແລະ ສະຖານທີ່ ໄດ້ແລກປ່ຽນ ແລະ ເປັນເອກະພາບໂດຍຜ່ານພະແນກການຕ່າງປະເທດຂອງແຂວງ. ຜົນຂອງການເຈລະຈາແມ່ນເອກະສານທີ່ຜູ້ຕາງໜ້າຂອງອົງການ

ປົກຄອງທ້ອງຖິ່ນຂອງສອງປະເທດເປັນຜູ້ລົງນາມ, ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

3. ການຮ່ວມມື ລະຫວ່າງ ອົງການປົກຄອງຂັ້ນເມືອງຊາຍແດນຂອງສອງປະເທດ ໄດ້ປະຕິບັດຕາມການຊີ້ນຳຂອງອົງການປົກຄອງທ້ອງຖິ່ນຂັ້ນແຂວງ ຫຼື ອົງການປົກຄອງທ້ອງຖິ່ນຂັ້ນແຂວງມອບສິດໃຫ້.
4. ບັນຊີບັນດາຫົວໜ່ວຍການປົກຄອງຂັ້ນເມືອງທີ່ມີເຂດແດນສ່ວນໜຶ່ງຕິດກັບເສັ້ນຊາຍແດນປະເທດ ລາວ-ຫວຽດ ນາມ ທີ່ລະບຸໃນເອກະສານຊ້ອນທ້າຍ 12 ຕິດແນບສັນຍາສະບັບນີ້. ເມື່ອປະເທດໜຶ່ງດັດປັບເຂດແດນບໍລິເວນຊາຍແດນ, ປະເທດນັ້ນມີໜ້າທີ່ແຈ້ງຢ່າງທັນການໃຫ້ອີກປະເທດໜຶ່ງຮັບຊາບ ກ່ຽວກັບການດັດປັບດັ່ງກ່າວນັ້ນ.

ມາດຕາ 52 ສິດ ແລະ ໜ້າທີ່ຂອງອົງການປົກຄອງຂັ້ນແຂວງຊາຍແດນ

ໃນຂອບເຂດການປົກຄອງຂອງຕົນ, ອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນມີໜ້າທີ່ດັ່ງນີ້:

1. ຊີ້ນຳ ແລະ ຈັດຕັ້ງການປະຕິບັດສັນຍາສະບັບນີ້, ການແກ້ໄຂບັນດາເຫດການຊາຍແດນ, ການກວດກາເສັ້ນຊາຍແດນ ແລະ ຫຼັກໝາຍຊາຍແດນປະເທດ, ຕາມແຜນການທີ່ອົງການຊາຍແດນຂັ້ນສູນກາງສອງຝ່າຍຕົກລົງກັນ;
2. ຕິດຕາມຊຸກຍູ້, ກວດກາ, ສະພາບວຽກງານຊາຍແດນ ແລະ ລາຍງານຕໍ່ອົງການຊາຍແດນຂັ້ນສູນກາງຂອງຕົນເປັນປະຈຳ ກ່ຽວກັບສະພາບການຈັດຕັ້ງປະຕິບັດລະບຽບການຄຸ້ມຄອງຊາຍແດນ, ສະພາບການແກ້ໄຂບັນດາເຫດການທີ່ເກີດຂຶ້ນຢູ່ຊາຍແດນ ແລະ ຂໍ້ຄົງຄ້າງ ຫຼື ເກີນສິດ ແລະ ໜ້າທີ່ຂອງຕົນ. ສຳລັບບັນຫາທີ່ຄົງຄ້າງ ຫຼື ເກີນສິດອຳນາດນັ້ນ ໃນໄລຍະເວລາລໍຖ້າຄຳເຫັນຈາກຂັ້ນເທິງ ໃຫ້ອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນແຕ່ລະປະເທດຮັກສາສາຍພົວພັນເປັນປົກກະຕິ ແລະ ບໍ່ເຮັດໃຫ້ສະພາບການມີການສັບສົນຕື່ມອີກ;
3. ຈັດຕັ້ງກອງປະຊຸມສາມັນປະຈຳປີ ຫຼື ຫາກຈຳເປັນ (ຕາມການສະເໜີຂອງອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນຂອງປະເທດນັ້ນ). ອົງການປົກຄອງຂັ້ນແຂວງຊາຍແດນທີ່ກ່ຽວຂ້ອງຂອງສອງປະເທດຈະຕົກລົງກັນກ່ຽວກັບເນື້ອໃນ, ພາກສ່ວນເຂົ້າຮ່ວມ, ວັນເວລາ ແລະ ສະຖານທີ່ຈັດກອງປະຊຸມ. ກອງປະຊຸມຈັດຕັ້ງຢູ່ດິນແດນຂອງປະເທດໃດ, ອົງການປົກຄອງປະເທດນັ້ນ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ;

   ໃນກອງປະຊຸມດັ່ງກ່າວນັ້ນ, ຖ້າເຫັນວ່າມີຄວາມຈຳເປັນອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນຂອງອີກປະເທດໜຶ່ງອາດເຊື້ອເຊີນຜູ້ຕາງໜ້າບັນດາອົງການທີ່ກ່ຽວຂ້ອງ ແລະ ວິຊາການຈຳນວນໜຶ່ງເຂົ້າຮ່ວມນຳ, ແຕ່ຕ້ອງແຈ້ງໃຫ້ອົງການປົກຄອງທ້ອງຖິ່ນຂັ້ນແຂວງຊາຍແດນຂອງອີກປະເທດໜຶ່ງຮັບຊາບກ່ອນ.

   ເນື້ອໃນຂອງກອງປະຊຸມຕ້ອງໄດ້ເອົາເຂົ້າໃນບົດບັນທຶກຮ່ວມກັນ. ເນື້ອໃນບົດບັນທຶກ ລວມມີ: ວັນເວລາ, ສະຖານທີ່, ພາກສ່ວນເຂົ້າຮ່ວມ ແລະ ບັນຫາທີ່ໄດ້ເປັນເອກະພາບກັນແກ້ໄຂ, ບັນຫາທີ່ຍັງແກ້ໄຂບໍ່ທັນໄດ້. ບົດບັນທຶກເຮັດເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ມີລາຍເຊັນຂອງຜູ້ຕາງໜ້າຂອງສອງແຂວງ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.
4. ຈັດຕັ້ງການເຜີຍແຜ່ເນື້ອໃນສັນຍາສະບັບນີ້ ຢ່າງກວ້າງຂວາງ ແລະ ເປັນປະຈຳໃຫ້ແກ່ພະນັກງານ, ນັກຮົບ ແລະ ປະຊາຊົນພາຍໃນແຂວງ, ເປັນຕົ້ນແມ່ນຢູ່ບໍລິເວນຊາຍແດນ;
5. ສ້າງເງື່ອນໄຂອັນສະດວກໃນການຊຸກຍູ້ການຮ່ວມມື ລະຫວ່າງ ບັນດາອົງການທີ່ກ່ຽວຂ້ອງຂັ້ນແຂວງຊາຍແດນ, ລວມມີ: ກຳລັງຮັບຜິດຊອບປ້ອງກັນຊາຍແດນ, ພາສີ, ກັກກັນພືດ ແລະ ສັດ, ຄົມມະນາຄົມຂົນສົ່ງ, ການຄ້າກໍ່ຄືບັນດາຂະແໜງການອື່ນໆທີ່ຄຸ້ມຄອງຊາຍແດນ;
6. ແຕ່ລະແຂວງຊາຍແດນແຕ່ງຕັ້ງການນຳຂັ້ນແຂວງຜູ້ໜຶ່ງເພື່ອຮັບຜິດຊອບວຽກງານປະສານສົມທົບ, ແກ້ໄຂບັນດາເຫດການຊາຍແດນຕາມສິດ, ໜ້າທີ່ ແລະ ຂໍ້ກຳນົດ ຂອງສັນຍາສະບັບນີ້ ແລະ ກົດໝາຍຂອງແຕ່ລະປະເທດ;
7. ໃນແຕ່ລະປີແຈ້ງໃຫ້ກັນຊາບບັນຊີກຳລະນີຕ່າງໆ ທີ່ໄດ້ກຳນົດຢູ່ໃນມາດຕາ 30 ຂອງສັນຍາສະບັບນີ້;
8. ປະຕິບັດໜ້າທີ່ອື່ນໆຕາມຂໍ້ກຳນົດຂອງສັນຍາສະບັບນີ້.

III. ອົງການຊາຍແດນຂັ້ນສູນກາງ

ມາດຕາ 53 ສິດ ແລະ ໜ້າທີ່ຂອງອົງການຊາຍແດນຂັ້ນສູນກາງທັງສອງຝ່າຍ

1. ພົວພັນກັນໂດຍກົງ ເພື່ອເປັນເສນາທິການໃຫ້ແກ່ສອງຝ່າຍ ໃນການຊີ້ນຳປະຕິບັດສັນຍາສະບັບນີ້.
2. ເປັນເຈົ້າການ, ປະສານສົມທົບກັບບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງໃນການຮ່ວມມືຈັດຕັ້ງຜັນຂະຫຍາຍບັນດາຂໍ້ກຳນົດຂອງສັນຍາສະບັບນີ້ ແລະ ບັນດາສົນທິສັນຍາສາກົນທີ່ກ່ຽວຂ້ອງ ທີ່ສອງປະເທດເປັນພາຄີ.
3. ຊີ້ນຳ, ຊຸກຍູ້, ຕິດຕາມກວດກາການຈັດຕັ້ງຜັນຂະຫຍາຍສັນຍາ, ປົກປັກຮັກສາເສັ້ນຊາຍແດນ, ຫຼັກໝາຍຊາຍແດນປະເທດ; ພິຈາລະນາການສ້ອມແປງ, ຕົກລົງການບູລະນະ, ກໍ່ສ້າງຄືນໃໝ່ຢູ່ຈຸດທີ່ຕັ້ງເກົ່າ ແລະ ກໍ່ສ້າງຫຼັກໝາຍຊາຍແດນປະເທດຢູ່ຈຸດທີ່ຕັ້ງໃໝ່.
4. ສົມທົບກັນກວດກາຮັບຮອງ ແລະ ຕິດຕາມການກໍ່ສ້າງໂຄງການ, ກິດຈະການຢູ່ເຂດນ້ຳຊາຍແດນ ແລະ ບັນດາກິດຈະການຕັດຜ່ານເສັ້ນຊາຍແດນ.
5. ດຳເນີນການປັບປຸງ ຫຼື ເພີ່ມເຕີມບັນດາເອກະສານຊ້ອນທ້າຍຕິດແນບສັນຍາສະບັບນີ້ ເມື່ອມີຄວາມຈຳເປັນ.
6. ແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນໃນການຕີຄວາມໝາຍ ແລະ ນຳໃຊ້ບັນດາມາດຕາຂອງສັນຍາສະບັບນີ້.
7. ຄົ້ນຄວ້າແກ້ໄຂ ຫຼື ສະເໜີຕໍ່ຂັ້ນເທິງທີ່ມີສິດອຳນາດ ກ່ຽວກັບວິທີການແກ້ໄຂບັນດາເຫດການຊາຍແດນທີ່ອຳນາດການປົກຄອງທ້ອງຖິ່ນຂັ້ນແຂວງທີ່ມີຊາຍແດນຮ່ວມກັນຍັງແກ້ໄຂບໍ່ທັນໄດ້.
8. ປຶກສາຫາລື, ແກ້ໄຂ ຫຼື ສະເໜີຕໍ່ຂັ້ນເທິງທີ່ມີສິດອຳນາດ ກ່ຽວກັບວິທີການແກ້ໄຂບັນຫາສຳຄັນທີ່ເກີດຂຶ້ນໃນການປະຕິບັດສັນຍາສະບັບນີ້.
9. ຊຸກຍູ້ສ້າງກົນໄກການຮ່ວມມື ລະຫວ່າງ ບັນດາກະຊວງ, ອົງການທີ່ກ່ຽວຂ້ອງຂັ້ນສູນກາງທີ່ມີບົດບາດຄຸ້ມຄອງລັດຕາມຂະແໜງການ, ຕາມຂົງເຂດກ່ຽວກັບຊາຍແດນ, ເຂດແດນຂອງສອງປະເທດ.
10. ປະຕິບັດໜ້າທີ່ອື່ນໆ ຕາມການຕົກລົງຂອງສອງຝ່າຍ.

ມາດຕາ 54 ກົນໄກການເຮັດວຽກ ລະຫວ່າງ ຄະນະກຳມະການຊາຍແດນ ລາວ-ຫວຽດນາມ ແລະ ຄະນະກຳມະການຊາຍແດນແຫ່ງຊາດຫວຽດນາມ

1. ຄະນະກຳມະການຊາຍແດນ ລາວ-ຫວຽດນາມ, ກະຊວງການຕ່າງປະເທດລາວ ແລະ ຄະນະກຳມະການຊາຍແດນແຫ່ງຊາດ, ກະຊວງການຕ່າງປະເທດຫວຽດນາມ ແມ່ນມີໜ້າທີ່ໂດຍກົງໃນການປະສານສົມທົບ ເພື່ອຊ່ວຍລັດຖະບານສອງປະເທດໃນການຊີ້ນຳ ແລະ ຈັດຕັ້ງປະຕິບັດສັນຍາສະບັບນີ້.
2. ບັນດາອົງການທີ່ໄດ້ລະບຸຢູ່ຂໍ້ 1 ມາດຕານີ້ ດຳເນີນວຽກງານດ້ວຍວິທີຈັດກອງປະຊຸມພົບປະເຈລະຈາ ຫຼື ຜ່ານການແລກປ່ຽນຈົດໝາຍ ຫຼື ດ້ວຍຮູບແບບອື່ນຕາມການຕົກລົງຂອງສອງຝ່າຍ.
3. ບັນດາກອງປະຊຸມຂອງອົງການຊາຍແດນຂັ້ນສູນກາງສອງຝ່າຍ ໄດ້ຈັດຕັ້ງຂຶ້ນໃນທຸກໆປີ (ໜຶ່ງປີຕໍ່ຄັ້ງ) ຕາມກົນໄກຜັດປ່ຽນກັນເປັນເຈົ້າພາບ ຫຼື ກໍລະນີຈຳເປັນມີການສະເໜີຂອງຝ່າຍໃດຝ່າຍໜຶ່ງອາດຈັດກອງປະຊຸມວິສາມັນ. ສ່ວນເນື້ອໃນ, ວັນເວລາ, ສະຖານທີ່ຂອງກອງປະຊຸມແມ່ນຈະໄດ້ແລກປ່ຽນເປັນເອກະພາບກັນ ໂດຍຜ່ານທາງການທູດ, ກອງປະຊຸມຈັດຕັ້ງຢູ່ດິນແດນຂອງປະເທດໃດ, ປະເທດນັ້ນ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ.

   ກໍລະນີຈຳເປັນ, ອົງການຊາຍແດນຂັ້ນສູນກາງ ສອງຝ່າຍອາດເຊີນຜູ້ຕາງໜ້າບັນດາກະຊວງ, ຂະແໜງການ ແລະ ແຂວງຊາຍແດນທີ່ກ່ຽວຂ້ອງເຂົ້າຮ່ວມນຳ.
4. ຜົນກອງປະຊຸມຂອງອົງການຊາຍແດນຂັ້ນສູນກາງ ຕ້ອງຮັບຮອງໃນບົດບັນທຶກ. ເນື້ອໃນຂອງບົດບັນທຶກລວມມີ: ເວລາ, ສະຖານທີ່, ພາກສ່ວນເຂົ້າຮ່ວມ, ເນື້ອໃນ ແລະ ໝາກຜົນຂອງກອງປະຊຸມ. ບົດບັນທຶກຕ້ອງສ້າງ

ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັ່ນເປັນຕົ້ນໄປ ແລະ ໄດ້ຮັບການປະຕິບັດຢ່າງເຂັ້ມງວດຈາກທັງສອງຝ່າຍ.

ໝວດທີ X
ບົດບັນຍັດສຸດທ້າຍ

ມາດຕາ 55 ການແກ້ໄຂຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງຕ່າງໆທີ່ເກີດຂຶ້ນທີ່ພົວພັນເຖິງການຕີຄວາມໝາຍ ແລະ ການນຳໃຊ້ສົນທິສັນຍາສະບັບນີ້ໄດ້ຮັບການແກ້ໄຂ ໂດຍຜ່ານການພົບປະເຈລະຈາ ລະຫວ່າງ ອົງການຊາຍແດນຂັ້ນສູນກາງຂອງສອງປະເທດ; ກໍລະນີບໍ່ສາມາດແກ້ໄຂໄດ້, ອົງການຊາຍແດນຂັ້ນສູນກາງທັງສອງປະເທດ ຈະລາຍງານຕໍ່ລັດຖະບານຂອງແຕ່ລະປະເທດ ພິຈາລະນາ.

ມາດຕາ 56 ການປັບປຸງ ແລະ ເພີ່ມເຕີມສົນທິສັນຍາ

1. ສົນທິສັນຍາສະບັບນີ້ອາດມີການປັບປຸງເພີ່ມເຕີມຕາມການຕົກລົງຂອງສອງຝ່າຍ. ເນື້ອໃນການປັບປຸງ, ເພີ່ມເຕີມນັ້ນ ແມ່ນພາກສ່ວນໜຶ່ງທີ່ບໍ່ສາມາດຕັດແຍກອອກຈາກສົນທິສັນຍາສະບັບນີ້ໄດ້.
2. ຂໍ້ກຳນົດຂອງຂໍ້ 1 ມາດຕານີ້ບໍ່ເປັນຜົນສະທ້ອນເຖິງຂໍ້ 5 ຂອງມາດຕາ 53 ຂອງສົນທິສັນຍາສະບັບນີ້.

ມາດຕາ 57 ຜົນສັກສິດຂອງສົນທິສັນຍາ

1. ສົນທິສັນຍາສະບັບນີ້ ຕ້ອງໄດ້ໃຫ້ສັດຕະຍາບັນ ແລະ ບັນດາເອກະສານຊ້ອນທ້າຍ ແມ່ນພາກສ່ວນໜຶ່ງທີ່ບໍ່ສາມາດຕັດແຍກອອກຈາກສົນທິສັນຍາສະບັບນີ້.
2. ສົນທິສັນຍາສະບັບນີ້ ຈະມີຜົນບັງຄັບໃຊ້ກໍຕໍ່ເມື່ອອະນຸສັນຍາ ວ່າດ້ວຍເສັ້ນຊາຍແດນ ແລະ ຫຼັກໝາຍຊາຍແດນປະເທດ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016 ມີຜົນບັງຄັບໃຊ້ແລ້ວ ແລະ ແຈ້ງເປັນລາຍລັກອັກສອນ ກ່ຽວກັບການສຳເລັດທຸກຂັ້ນຕອນດ້ານກົດໝາຍພາຍໃນປະເທດຕົນໃຫ້ກັນຊາບ ໂດຍຜ່ານທາງການທູດ ແລະ ສົນທິສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ພາຍຫຼັງ 30 (ສາມສິບ) ວັນ ຂອງຈົດໝາຍແຈ້ງສະບັບສຸດທ້າຍ.
3. ສົນທິສັນຍາສະບັບນີ້ ມີຜົນບັງຄັບໃຊ້ພາຍໃນກຳນົດເວລາ 10 (ສິບ) ປີ ແລະ ຈະຕໍ່ອາຍຸໄປໃນຕົວມັນເອງຄັ້ງລະ 10 (ສິບ) ປີ, ຍົກເວັ້ນເມື່ອຝ່າຍໃດໜຶ່ງແຈ້ງໃຫ້ອີກຝ່າຍໜຶ່ງຊາບ ເປັນລາຍລັກອັກສອນເຖິງເຈດຈຳນົງການຢຸດຕິຜົນບັງຄັບໃຊ້ສົນທິສັນຍາ ໂດຍຜ່ານທາງການທູດກ່ອນ 6 (ຫົກ) ເດືອນ ກ່ອນສົນທິສັນຍາຈະສິ້ນສຸດຜົນບັງຄັບໃຊ້. ການຢຸດຕິຜົນສັກສິດຂອງສົນທິສັນຍາສະບັບນີ້ ຈະບໍ່ສົ່ງຜົນສະທ້ອນເຖິງບັນດາການເຄື່ອນໄຫວຮ່ວມມືທີ່ສອງຝ່າຍພວມດຳເນີນໃນຂອບເຂດຂອງສົນທິສັນຍາສະບັບນີ້.
4. ພາຍຫຼັງທີ່ສົນທິສັນຍາສະບັບນີ້ ມີຜົນບັງຄັບໃຊ້ແລ້ວ " ສົນທິສັນຍາ ວ່າດ້ວຍລະບຽບການຊາຍແດນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ " ທີ່ລົງນາມໃນວັນທີ 1 ມີນາ 1990 ແລະ " ອະນຸສັນຍາປັບປຸງເພີ່ມເຕີມສົນທິສັນຍາ ວ່າດ້ວຍລະບຽບການຊາຍແດນ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ " ທີ່ລົງນາມໃນວັນທີ 31 ສິງຫາ 1997, ແມ່ນລ້ວນແຕ່ຖືກລົບລ້າງໄປໃນຕົວ.

ເຮັດທີ່ ນະຄອນຫຼວງຮ່າໂນ້ຍ, ວັນທີ 16 ມີນາ 2016, ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາ ຫວຽດ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

ຕາງໜ້າລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ	ຕາງໜ້າລັດຖະບານ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ
ທອງລຸນ ສີສຸລິດ ຮອງນາຍົກລັດຖະມົນຕີ ລັດຖະມົນຕີວ່າການກະຊວງການຕ່າງປະເທດ	ຟາມ ບິ່ງ ມິງ ຮອງນາຍົກລັດຖະມົນຕີ ລັດຖະມົນຕີວ່າການກະຊວງການຕ່າງປະເທດ

ບັນຊີເອກະສານຊ້ອນທ້າຍ

ຕິດແນບສັນຍາ ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ

ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016

ເອກະສານຊ້ອນທ້າຍ 1: ແບບຟອມບົດບັນທຶກການສ້ອມແປງຫຼັກໝາຍຊາຍແດນປະເທດ ຢູ່ຈຸດທີ່ຕັ້ງເກົ່າ ເລກທີ ...

ເອກະສານຊ້ອນທ້າຍ 2: ແບບຟອມບົດບັນທຶກການບູລະນະ ຫຼື ກໍ່ສ້າງຫຼັກໝາຍຊາຍແດນປະເທດ ຄືນໃໝ່ຢູ່ຈຸດທີ່ຕັ້ງເກົ່າ ເລກທີ ...

ເອກະສານຊ້ອນທ້າຍ 3: ແບບຟອມບົດບັນທຶກການຮັບຮອງຫຼັກໝາຍຊາຍແດນປະເທດ ເລກທີ ... ຖືກເປ່ເພ, ຖືກເຄື່ອນຍ້າຍ ຫຼື ເສຍຫາຍ, ທີ່ບໍ່ສາມາດບູລະນະ ແລະ ກໍ່ສ້າງຄືນໃໝ່ຢູ່ຈຸດທີ່ຕັ້ງເກົ່າ.

ເອກະສານຊ້ອນທ້າຍ 4: ແບບຟອມບົດບັນທຶກການບູລະນະ, ກໍ່ສ້າງຫຼັກໝາຍຊາຍແດນປະເທດຄືນໃໝ່ ເລກທີ ... ຖືກເປ່ເພ, ຖືກເຄື່ອນຍ້າຍ ຫຼື ເສຍຫາຍຢູ່ຈຸດທີ່ຕັ້ງໃໝ່.

ເອກະສານຊ້ອນທ້າຍ 5: ແບບຟອມບົດບັນທຶກການມອບ-ຮັບສັດ ຂ້າມແດນ.

ເອກະສານຊ້ອນທ້າຍ 6: ແບບຟອມຈົດໝາຍທາງການແຈ້ງການ ກ່ຽວກັບອຸປະກອນການບິນຈະດຳເນີນການບິນໃນຂອບເຂດ 10 ກມ ຫ່າງຈາກເສັ້ນຊາຍແດນເຂົ້າມາຫາເບື້ອງຕົ້ນ.

ເອກະສານຊ້ອນທ້າຍ 7: ແບບຟອມຈົດໝາຍທາງການຂໍອະນຸຍາດໃຫ້ອຸປະກອນການບິນ ບິນຜ່ານຂ້າມແດນເຂົ້າໄປເຂດແດນຂອງອີກປະເທດໜຶ່ງ.

ເອກະສານຊ້ອນທ້າຍ 8: ແບບຟອມປຶ້ມຜ່ານແດນ/ໃບຜ່ານແດນການເຂົ້າ-ອອກເມືອງຢູ່ບໍລິເວນຊາຍແດນ.

ເອກະສານຊ້ອນທ້າຍ 9: ແບບຟອມບົດບັນທຶກການມອບ-ຮັບຄົນເຂົ້າ-ອອກເມືອງຜິດກົດໝາຍ.

ເອກະສານຊ້ອນທ້າຍ 10: ແບບຟອມບົດບັນທຶກການມອບ-ຮັບຊາກຊົບຄົນ.

ເອກະສານຊ້ອນທ້າຍ 11: ແບບຟອມບົດບັນທຶກການມອບ-ຮັບຊັບສິນ.

ເອກະສານຊ້ອນທ້າຍ 12: ແບບຟອມບັນຊີບັນດາຫົວໜ່ວຍການປົກຄອງຂັ້ນເມືອງທີ່ມີເຂດແດນສ່ວນໜຶ່ງຕິດກັບເສັ້ນຊາຍແດນປະເທດ ລາວ-ຫວຽດນາມ.

ເອກະສານຊ້ອນທ້າຍ 1

ບົດບັນທຶກ

ການສ້ອມແປງຫຼັກໝາຍຊາຍແດນປະເທດ ຢູ່ຈຸດທີ່ຕັ້ງເກົ່າ ເລກທີ ...

ປະຕິບັດຕາມຂໍ້ກຳນົດຢູ່ ມາດຕາ 7 ຂອງສົນຍາ ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ສະບັບລົງວັນທີ 16 ມີນາ 2016.

ແຕ່ວັນທີ ... ເຖິງວັນທີ ... ເດືອນ ... ປີ ..., ໜ່ວຍກວດກາປະສົມສອງປະເທດ ລາວ ແລະ ຫວຽດນາມ (ບັນຊີລາຍຊື່ຢູ່ເອກະສານຊ້ອນທ້າຍຕິດແນບ) ໄດ້ດຳເນີນການສ້ອມແປງຫຼັກໝາຍຊາຍແດນປະເທດ ເລກທີ ...

ຫຼັກໝາຍຊາຍແດນປະເທດ ເລກທີ ... (ພັນລະນາສະພາບການສ້ອມແປງ).

ບົດບັນທຶກສະບັບນີ້ເຮັດທີ່ ... ວັນທີ ... ເດືອນ ... ປີ ... ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

ຫົວໜ້າໜ່ວຍກວດກາປະສົມຝ່າຍລາວ	ຫົວໜ້າໜ່ວຍກວດກາປະສົມຝ່າຍຫວຽດນາມ
(ເຊັນ ແລະ ຂຽນຊື່ແຈ້ງ)	(ເຊັນ ແລະ ຂຽນຊື່ແຈ້ງ)

ບົດບັນທຶກ

ການບຸລະນະ ຫຼື ກໍ່ສ້າງຫຼັກໝາຍຊາຍແດນປະເທດ ຄືນໃໝ່ຢູ່ຈຸດທີ່ຕັ້ງເກົ່າ ເລກທີ ...

ປະຕິບັດຕາມຂໍ້ກຳນົດທີ່ລະບຸໄວ້ຢູ່ໃນມາດຕາ 7 ຂອງສົນຍາ ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ສະບັບລົງວັນທີ 16 ມີນາ 2016.

ແຕ່ວັນທີ ... ເຖິງວັນທີ ... ເດືອນ ... ປີ ..., ໜ່ວຍກວດກາປະສົມສອງປະທດ ລາວ ແລະ ຫວຽດນາມ (ບັນຊີລາຍຊື່ຢູ່ເອກະສານຊ້ອນທ້າຍຕິດແນບ) ໄດ້ດຳເນີນການບຸລະນະ ຫຼື ກໍ່ສ້າງຫຼັກໝາຍຊາຍແດນປະເທດຄືນໃໝ່ ເລກທີ ...

ຫຼັກໝາຍຊາຍແດນປະເທດ ເລກທີ ... (ຂຽນແຈ້ງສາເຫດການສ້ອມແປງ ຫຼື ກໍ່ສ້າງຫຼັກໝາຍຄືນໃໝ່).

ຫຼັກໝາຍຊາຍແດນປະເທດ ເລກທີ ... ໄດ້ຮັບການບຸລະນະ ຫຼື ກໍ່ສ້າງຄືນໃໝ່ຢູ່ຈຸດທີ່ຕັ້ງເກົ່າຕາມຂໍ້ກຳນົດ ຂອງເອກະສານກຳນົດເສັ້ນຊາຍແດນ, ປັກຫຼັກໝາຍຊາຍແດນ ຫຼື ເອກະສານກວດກາປະສົມ, ສະບັບລົງວັນທີ ... ເດືອນ ... ປີ...

ບົດບັນທຶກສະບັບນີ້ເຮັດທີ່ ... ວັນທີ ... ເດືອນ ... ປີ ... ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

ຫົວໜ້າໜ່ວຍກວດກາປະສົມຝ່າຍລາວ	ຫົວໜ້າໜ່ວຍກວດກາປະສົມຝ່າຍຫວຽດນາມ
(ເຊັນ ແລະ ຂຽນຊື່ແຈ້ງ)	(ເຊັນ ແລະ ຂຽນຊື່ແຈ້ງ)

ບົດບັນທຶກການຮັບຮອງ

ຫຼັກໝາຍຊາຍແດນປະເທດ ເລກທີ ... ທີ່ເປ່ເພ, ຖືກເຄື່ອນຍ້າຍ ຫຼື ເສຍຫາຍທີ່ບໍ່ສາມາດບຸລະນະ ຫຼື ກໍ່ສ້າງຄືນໃໝ່ຢູ່ຈຸດທີ່ຕັ້ງເກົ່າ

ປະຕິບັດຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ຢູ່ໃນ ມາດຕາ 7 ຂອງສົນທິສັນຍາ ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ສະບັບລົງວັນທີ 16 ມີນາ 2016.

ແຕ່ວັນທີ ... ເຖິງວັນທີ ... ເດືອນ ... ປີ ..., ໜ່ວຍກວດກາປະສົມສອງປະເທດ ລາວ ແລະ ຫວຽດນາມ (ບັນຊີລາຍຊື່ຢູ່ເອກະສານຊ້ອນທ້າຍຕິດແນບ) ໄດ້ຢັ້ງຢືນຫຼັກໝາຍຊາຍແດນປະເທດ ເລກທີ ... (ຖືກເປ່ເພ, ຖືກເຄື່ອນຍ້າຍ ຫຼື ເສຍຫາຍ) ແລະ ບໍ່ສາມາດສ້ອມແປງ ຫຼື ກໍ່ສ້າງ ຄືນໃໝ່ຢູ່ຈຸດທີ່ຕັ້ງເກົ່າໄດ້ (ຕາມຂໍ້ກຳນົດຂອງ ເອກະສານ ກ່ຽວກັບການກຳນົດເສັ້ນຊາຍແດນ, ປັກຫຼັກໝາຍ ຫຼື ເອກະສານກວດກາປະສົມ ສະບັບລົງວັນທີ ... ເດືອນ ... ປີ ...)

ສອງຝ່າຍເຫັນດີລາຍງານຕໍ່ອົງການຊາຍແດນສູນກາງຂອງແຕ່ລະປະເທດ ... (ສະພາບ ແລະ ສາເຫດທີ່ບໍ່ສາມາດສ້ອມແປງ ຫຼື ກໍ່ສ້າງຫຼັກໝາຍປະເທດຄືນໃໝ່ໃຫ້ຖືກຕ້ອງຕາມຈຸດທີ່ຕັ້ງເກົ່າ).

ບົດບັນທຶກສະບັບນີ້ເຮັດທີ່ ... ວັນທີ ... ເດືອນ ... ປີ ... ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

ໜ່ວຍກວດກາປະສົມຝ່າຍລາວ	ໜ່ວຍກວດກາປະສົມຝ່າຍຫວຽດນາມ
(ເຊັນ ແລະ ຂຽນຊື່ແຈ້ງ)	(ເຊັນ ແລະ ຂຽນຊື່ແຈ້ງ)

ບົດບັນທຶກ

ການບຸລະນະ ຫຼື ກໍ່ສ້າງຫຼັກໝາຍຊາຍແດນປະເທດ ເລກທີ ... ຖືກເປ່ເພ, ຖືກເຄື່ອນຍ້າຍ ຫຼື ເສຍຫາຍຢູ່ຈຸດທີ່ຕັ້ງໃໝ່

ປະຕິບັດຕາມຂໍ້ກຳນົດທີ່ໄດ້ລຸບະໄວ້ຢູ່ໃນ ມາດຕາ 7 ຂອງສົນຍາ ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016.

ແຕ່ວັນທີ ... ເຖິງວັນທີ ... ເດືອນ ... ປີ ..., ໜ່ວຍກວດກາປະສົມສອງປະເທດ ລາວ ແລະ ຫວຽດນາມ (ບັນຊີລາຍຊື່ຢູ່ເອກະສານຊ້ອນທ້າຍຕິດແນບ) ໄດ້ກໍ່ສ້າງຫຼັກໝາຍຊາຍແດນປະເທດ ເລກທີ ... ທີ່ເປ່ເພ, ຖືກເຄື່ອນຍ້າຍ ຫຼື ເສຍຫາຍຢູ່ຈຸດທີ່ຕັ້ງໃໝ່.

ຕາຕະລາງທະບຽນຫຼັກໝາຍຊາຍແດນປະເທດ ເລກທີ ... ພາຍຫຼັງການກໍ່ສ້າງຫຼັກໝາຍຢູ່ຈຸດທີ່ຕັ້ງໃໝ່ (ເອກະສານຊ້ອນທ້າຍ). ຕາຕະລາງທະບຽນຫຼັກໝາຍຊາຍແດນປະເທດນີ້ ໄດ້ຮຽບຮຽງຖືກຕ້ອງຕາມຂໍ້ກຳນົດຂອງເອກະສານການກວດກາປະສົມ ແລະ ເອກະສານກຳນົດເສັ້ນຊາຍແດນ, ປັກຫຼັກໝາຍຊາຍແດນປະເທດ ສະບັບລົງວັນທີ ... ເດືອນ ... ປີ ...

ບົດບັນທຶກສະບັບນີ້ເຮັດທີ່ ... ວັນທີ ... ເດືອນ ... ປີ ... ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ທັງສອງພາສາມີຄຸນຄ່າເທົ່າທຽມກັນ.

ຫົວໜ້າໜ່ວຍກວດກາປະສົມຝ່າຍລາວ	ຫົວໜ້າໜ່ວຍກວດກາປະສົມຝ່າຍຫວຽດນາມ
(ເຊັນ ແລະ ຂຽນຊື່ແຈ້ງ)	(ເຊັນ ແລະ ຂຽນຊື່ແຈ້ງ)

ເອກະສານຊ້ອນທ້າຍ 5

ບົດບັນທຶກ

ການມອບ-ຮັບສັດ ຂ້າມແດນ

ເລກທີ ...

ວັນທີ ...

ເວລາ ...

ສະຖານທີ່ ...

ປະຕິບັດຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ຢູ່ໃນ ມາດຕາ 17 ຂອງສັນຍາ ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016.

ຝ່າຍມອບ ທ້າວ/ນາງ ... (ຊື່ ແລະ ນາມສະກຸນ, ຊັ້ນຕຳແໜ່ງ, ຊື່ປະເທດ), ຝ່າຍຮັບ ທ້າວ/ນາງ ... (ຊື່ ແລະ ນາມສະກຸນ, ຊັ້ນຕຳແໜ່ງ, ຊື່ປະເທດ).

ໄດ້ດຳເນີນການມອບ-ຮັບສັດ ... (ປະເພດ ..., ຈຳນວນ ແລະ ຈຸດພິເສດອື່ນ) ແຕ່ປະເທດ ... ທີ່ໄດ້ຂ້າມ ແດນ ເວລາ ... ໂມງ, ວັນທີ ... ເດືອນ ... ປີ ... ທີ່ ... (ເວລາ, ສະຖານທີ່, ໃກ້ກັບບໍລິເວນຫຼັກໝາຍຊາຍແດນ ປະທດ).

ໃນການມອບ-ຮັບ (ຂຽນແຈ້ງວຽກງານທີ່ສອງຝ່າຍຄວນເອົາໃຈໃສ່ໃນເວລາມອບ-ຮັບ).

ບົດບັນທຶກສະບັບນີ້, ເຮັດທີ່ ... ວັນທີ ... ເດືອນ ... ປີ ... ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

ຝ່າຍມອບ	ຝ່າຍຮັບ
(ເຊັນ ແລະ ຂຽນຊື່ແຈ້ງ)	(ເຊັນ ແລະ ຂຽນຊື່ແຈ້ງ)

ເອກະສານຊ້ອນທ້າຍ 6

ຈົດໝາຍທາງການ
ແຈ້ງການ ກ່ຽວກັບເຄື່ອງບິນທີ່ພວມບິນຫ່າງຈາກເສັ້ນຊາຍແດນເຂົ້າມາຫາເບື້ອງຕົ້ນ
ໃນຂອບເຂດ 10 ກມ

ເລກທີ ...

ກະຊວງການຕ່າງປະເທດ (ສະຖານທູດ) ປະເທດ ... (ຊື່ປະເທດ) ຂໍສະແດງຄວາມນັບຖືຢ່າງສູງມາຍັງ ສະຖານເອກອັກຄະລັດຖະທູດ (ກະຊວງການຕ່າງປະເທດ) ສາທາລະນະລັດ ... (ຊື່ປະເທດ); ປະຕິບັດຕາມຂໍ້ ກຳນົດທີ່ລະບຸໄວ້ໃນມາດຕາ 19 ຂອງສັນຍາວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມ ນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016. ຂໍຖືເປັນກຽດແຈ້ງໃຫ້ຊາບ ກ່ຽວກັບເຄື່ອງບິນທີ່ພວມບິນຫ່າງ ຈາກເສັ້ນຊາຍແດນປະເທດ ລາວ-ຫວຽດນາມ ມາຫາເບື້ອງຕົ້ນໃນຂອບເຂດ 10 ກມ (ຊື່ອີງການສົ່ງຈົດໝາຍທາງ ການ) ຄືດັ່ງນີ້:

I. ຈຸດປະສົງການບິນ:

II. ບັນດາຂໍ້ມູນການບິນ:

1. ຕາຕະລາງບິນ, ວັນ, ເວລາລະອຽດເລີ່ມຕົ້ນ ແລະ ສິ້ນສຸດ.
2. ຂອບເຂດບິນ, ພິກັດພູມສາດຈຸດເຂົ້າອອກບໍລິເວນ 10 ກມ ແລະ ທິດຂອງການບິນ.
3. ບິນລະດັບສູງ.

III. ບັນດາຂໍ້ມູນການບິນ:

1. ຜູ້ເປັນກຳມະສິດ.
2. ປະເພດ ແລະ ລະຫັດ.
3. ສີ.
4. ມາດຖານຮັບຮູ້.
5. ເລກລະຫັດຢູ່ລໍາຕົວເຄື່ອງບິນ.
6. ລະຫັດຕິດຕໍ່.
7. ອຸປະກອນລາດາມີ ຫຼື ບໍ່ມີ.

IV. ບັນດາຂໍ້ມູນຂອງເຄື່ອງຖ່າຍພາບ

1. ປະເພດ ແລະ ລະຫັດ.
2. ໄລຍະໄກ.

ອີກເທື່ອໜຶ່ງ, ກະຊວງການຕ່າງປະເທດ (ສະຖານທູດ) ... (ຊື່ປະເທດ) ຂໍສະແດງຄວາມນັບຖືຢ່າງສູງມາຍັງ ສະຖານເອກອັກຄະລັດຖະທູດ (ກະຊວງການຕ່າງປະເທດ) ແຫ່ງ ... (ຊື່ປະເທດ) ມານະໂອກາດນີ້ດ້ວຍ.

ກະຊວງການຕ່າງປະເທດ (ສະຖານທູດ) ແຫ່ງ ... (ຊື່ປະເທດ)
ທີ່ ... ວັນທີ ... ເດືອນ ... ປີ...

ຈົດໝາຍທາງການ
ຂໍອະນຸຍາດໃຫ້ເຄື່ອງບິນຂ້າມແດນ

ເລກທີ ...

ກະຊວງການຕ່າງປະເທດ (ສະຖານທູດ) ປະເທດ ... (ຊື່ປະເທດ) ຂໍສະແດງຄວາມນັບຖືຢ່າງສູງມາຍັງ ສະຖານເອກອັກຄະລັດຖະທູດ (ກະຊວງການຕ່າງປະເທດ) ສາທາລະນະລັດ ... (ຊື່ປະເທດ); ປະຕິບັດຕາມຂໍ້ ກຳນົດທີ່ໄດ້ລະບຸໄວ້ໃນມາດຕາ 19 ຂອງສັນຍາ ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະ ລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016. ຂໍຖືເປັນກຽດສະເໜີມາຍັງອົງການທີ່ມີສິດອຳນາດ ຂອງ (ຊື່ປະ ເທດອອກໃບອະນຸຍາດບິນ) ອະນຸຍາດໃຫ້ເຄື່ອງບິນໆຂ້າມແດນ. ຂໍ້ມູນທີ່ພົວພັນເຖິງເຄື່ອງບິນນີ້ມີດັ່ງນີ້:

I. ຈຸດປະສົງການບິນ:

II. ບັນດາຂໍ້ມູນການບິນ:

1. ຕາຕະລາງບິນ, ວັນ, ເວລາລະອຽດເລີ່ມຕົ້ນ ແລະ ສິ້ນສຸດ.
2. ຂອບເຂດບິນ, ພິກັດພຸ້ມສາດຈຸດເຂົ້າ-ອອກບໍລິເວນ 10 ກມ ແລະ ທິດຂອງການບິນ.
3. ບິນລະດັບສູງ.
4. ສະຖານທີ່ຄາດກະຈະບິນຂ້າມແດນໃນເວລາບິນ (ຂຽນແຈ້ງພິກັດ, ຈຸດຊຸມຊົນ ຫຼື ແຜນວາດເສັ້ນທາງບິນ).
5. ລວງເລິກທີ່ບິນເຂົ້າໄປເຂດແດນຂອງປະເທດນັ້ນ.

III. ບັນດາຂໍ້ມູນການບິນ:

1. ຜູ້ເປັນກຳມະສິດ.
2. ປະເພດ ແລະ ລະຫັດ.
3. ສີ.
4. ມາດຖານຮັບຮູ້.
5. ເລກລະຫັດຢູ່ລໍາຕົວເຄື່ອງບິນ.
6. ລະຫັດຕິດຕໍ່.
7. ອຸປະກອນລາດາມີ ຫຼື ບໍ່ມີ.

IV.ບັນດາຂໍ້ມູນຂອງເຄື່ອງຖ່າຍພາບ

1. ປະເພດ ແລະ ລະຫັດ.
2. ໄລຍະໄກ.

ອີກເທື່ອໜຶ່ງ, ກະຊວງການຕ່າງປະເທດ (ສະຖານທູດ) ... (ຊື່ປະເທດ) ຂໍສະແດງຄວາມ ນັບຖືຢ່າງສູງມາ ຍັງສະຖານເອກອັກຄະລັດຖະທູດ (ກະຊວງການຕ່າງປະເທດ) ແຫ່ງ ... (ຊື່ປະເທດ) ມານະໂອກາດນີ້ດ້ວຍ.

ກະຊວງການຕ່າງປະເທດ (ສະຖານທູດ) ແຫ່ງ ... (ຊື່ປະເທດ)
ທີ່ ... ວັນທີ ... ເດືອນ ... ປີ..

ປຶ້ມຜ່ານແດນ/ໃບຜ່ານແດນ
ເຂົ້າ-ອອກເມືອງຢູ່ບໍລິເວນຊາຍແດນ

ປະກອບດ້ວຍເນື້ອໃນດັ່ງລຸ່ມນີ້:

1. ກາຊາດ, ຊື່ປະເທດ.
2. ຊື່ເອກະສານ: ປຶ້ມຜ່ານແດນ/ໃບຜ່ານແດນ.
3. ລະຫັດ: ປຶ້ມຜ່ານແດນ/ໃບຜ່ານແດນ.
4. ຂໍ້ມູນຂອງຜູ້ກ່ຽວມີ:
   - ຊື່ ແລະ ນາມສະກຸນ, ເພດ, ອາຊີບ, ວັນເດືອນປີເກີດ, ບັດປະຈຳຕົວເລກທີ, ສະຖານທີ່ຢູ່ອາໃສ.
   - ຮູບ, ລາຍເຊັນຜູ້ຖືປຶ້ມຜ່ານແດນ/ໃບຜ່ານແດນ.
5. ເຫດຜົນການອອກເມືອງ, ບ່ອນໄປເຖິງ, ດ່ານຂ້າມຜ່ານ, ດ່ານເຂົ້າ, ໝາຍເຫດ.
6. ປຶ້ມຜ່ານແດນ/ໃບຜ່ານແດນມີອາຍຸແຕ່ວັນທີ ... ເດືອນ ... ປີ ... ເຖິງວັນທີ ... ເດືອນ ... ປີ ...
7. ອົງການອອກປຶ້ມຜ່ານແດນ/ໃບຜ່ານແດນ (ເຊັນ ແລະ ປະທັບຕາ).
8. ຢັ້ງຢືນເອກະສານ.
9. ບັນດາຂໍ້ຄວາມທີ່ຕ້ອງເອົາໃຈໃສ່.

ເອກະສານຊ້ອນທ້າຍ 9

ບົດບັນທຶກ

ການມອບ-ຮັບ ຄົນເຂົ້າ-ອອກເມືອງຜິດກົດໝາຍ

ເລກທີ ...

ວັນທີ ...

ເວລາ ...

ສະຖານທີ່ ...

ປະຕິບັດຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ຢູ່ໃນ ມາດຕາ 44 ຂອງສັນຍາ ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016.

ຝ່າຍມອບ ທ້າວ/ນາງ ... (ຊື່ ແລະ ນາມສະກຸນ, ຊັ້ນຕຳແໜ່ງ, ຊື່ປະເທດ), ຝ່າຍຮັບທ້າວ/ນາງ ... (ຊື່ ແລະ ນາມສະກຸນ, ຊັ້ນຕຳແໜ່ງ, ຊື່ປະເທດ).

ໄດ້ດຳເນີນການມອບ ແລະ ຮັບ ຄົນເຂົ້າ-ອອກເມືອງຜິດກົດໝາຍ ... (ຊື່ ແລະ ນາມສະກຸນ, ເກີດເມື່ອວັນທີ ... ເດືອນ ... ປີ ..., ບ່ອນເກີດ, ເພດ, ສັນຊາດ). ຜູ້ກ່ຽວເຂົ້າ-ອອກເມືອງຜິດກົດໝາຍເວລາ ... ໂມງ, ວັນທີ ... ເດືອນ ... ປີ ... ທີ່ ... (ສະຖານທີ່, ໃກ້ກັບບໍລິເວນຫຼັກໝາຍຊາຍແດນປະເທດ) ແລະ ຖືກ ... (ໃຜ) ຈັບເວລາ ... ໂມງ, ວັນທີ ... ເດືອນ ... ປີ ... ທີ່ ... (ສະຖານທີ່, ໃກ້ກັບບໍລິເວນຫຼັກໝາຍຊາຍແດນປະເທດ). ສາເຫດເຂົ້າ-ອອກເມືອງຜິດກົດໝາຍແມ່ນ ...

ຊັບສິນ ແລະ ຍານພາຫະນະຂົນສົ່ງໄດ້ມອບ-ຮັບນຳຜູ້ເຂົ້າ-ອອກເມືອງຜິດກົດໝາຍລວມມີ: ... (ບັນຊີ, ຈຳນວນ, ຈຸດພິເສດຕື່ມຕໍ).

(ຖ້າຍັງບໍ່ທັນມອບ-ຮັບຍານພາຫະນະຂົນສົ່ງ ຫຼື ຊັບສິນ, ຄວນຂຽນສາເຫດຈະແຈ້ງທີ່ຍັງບໍ່ທັນມອບສິ່ງໄດ້).

ໃນການມອບ-ຮັບ ... (ຂຽນແຈ້ງວຽກງານທີ່ສອງຝ່າຍຄວນເອົາໃຈໃສ່ໃນເວລາມອບ-ຮັບ).

ບົດບັນທຶກສະບັບນີ້ ເຮັດທີ່ ... ວັນທີ ... ເດືອນ ... ປີ ... ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

ຝ່າຍມອບ	ຝ່າຍຮັບ
(ເຊັນ, ຂຽນຊື່ແຈ້ງ ແລະ ປະທັບຕາ)	(ເຊັນ, ຂຽນຊື່ແຈ້ງ ແລະ ປະທັບຕາ)

ເອກະສານຊ້ອນທ້າຍ 10

ບົດບັນທຶກ

ການມອບ-ຮັບຊາກສົບຄົນ

ເລກທີ ...

ວັນທີ ...

ເວລາ ...

ສະຖານທີ່ ...

ປະຕິບັດຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ຢູ່ໃນ ມາດຕາ 45 ຂອງສັນຍາ ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016.

ຝ່າຍມອບ ທ້າວ/ນາງ ... (ຊື່ ແລະ ນາມສະກຸນ, ຊັ້ນຕຳແໜ່ງ), ຝ່າຍຮັບ, ທ້າວ/ນາງ ... (ຊື່ ແລະ ນາມສະກຸນ, ຊັ້ນຕຳແໜ່ງ).

ໄດ້ດຳເນີນການມອບ ແລະ ຮັບຊາກສົບຄົນຕາຍ: ຈຳນວນ, (ຊື່ ແລະ ນາມສະກຸນ, ເກີດເມື່ອວັນທີ ... ເດືອນ ... ປີ ...), ຖ້າມີຈຸດພິເສດຕື້ນຕໍ. ຊາກສົບຂ້າງເທິງໄດ້ຖືກ ... (ໃຜ) ພົບເຫັນເວລາ ... ໂມງ, ວັນທີ ... ເດືອນ ... ປີ ... ທີ່ ... (ສະຖານທີ່, ໃກ້ກັບບໍລິເວນຫຼັກໝາຍຊາຍແດນປະເທດ). ສອງຝ່າຍຢັ້ງຢືນ, ຜູ້ກ່ຽວແມ່ນ ພົນລະເມືອງ ... (ສັນຊາດ), ສາເຫດທີ່ພາໃຫ້ເສຍຊີວິດອາດແມ່ນ...

ຊັບສົມໄດ້ມອບ-ຮັບພ້ອມຊາກສົບລວມມີ: ... (ຊື່ເອີ້ນ, ຈຳນວນ, ຈຸດພິເສດຕື້ນຕໍ). ຖ້າຍັງບໍ່ທັນມອບ-ຮັບ ຊັບສົມບັດ, ຄວນຂຽນແຈ້ງສາເຫດທີ່ຍັງບໍ່ທັນມອບສິ່ງໄດ້.

ໃນການມອບ-ຮັບ ... (ຂຽນແຈ້ງວຽກງານທີ່ສອງຝ່າຍຄວນເອົາໃຈໃສ່ໃນເວລາມອບ-ຮັບ).

ບົດບັນທຶກສະບັບນີ້ ເຮັດທີ່ ... ວັນທີ ... ເດືອນ ... ປີ ... ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

ຝ່າຍມອບ	ຝ່າຍຮັບ
(ເຊັນ, ຂຽນຊື່ແຈ້ງ ແລະ ປະທັບຕາ)	(ເຊັນ, ຂຽນຊື່ແຈ້ງ ແລະ ປະທັບຕາ)

ບົດບັນທຶກ

ການມອບ-ຮັບຊັບສິນ

ເລກທີ ...

ວັນທີ ...

ເວລາ ...

ສະຖານທີ ...

ປະຕິບັດຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ຢູ່ໃນ ມາດຕາ 47 ຂອງສັນຍາ ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ 16 ມີນາ 2016.

ຝ່າຍມອບ ທ້າວ/ນາງ ... (ຊື່ ແລະ ນາມສະກຸນ, ຊັ້ນຕຳແໜ່ງ), ຝ່າຍຮັບ ທ້າວ/ນາງ ... (ຊື່ ແລະ ນາມສະກຸນ, ຊັ້ນຕຳແໜ່ງ).

ໄດ້ດຳເນີນການມອບ ແລະ ຮັບຊັບສິນ ... (ຊື່ເອີ້ນ, ຈຳນວນ, ຈຸດພິເສດຕົ້ນຕໍ).

ຊັບສິນຂ້າງເທິງຖືກ ... (ໃຜ) ພິບເຫັນເວລາ ... ໂມງ, ວັນທີ ... ເດືອນ ... ປີ ... ທີ່ ... (ສະຖານທີ່, ໃກ້ກັບບໍລິເວນຫຼັກໝາຍຊາຍແດນປະເທດ). ສອງຝ່າຍຢັ້ງຢືນຊັບສິນນີ້ແມ່ນກຳມະສິດຂອງປະເທດ ...

(ຊື່ປະເທດ).

ໃນການມອບ-ຮັບ ... (ຂຽນແຈ້ງວຽກງານທີ່ສອງຝ່າຍຄວນເອົາໃຈໃສ່ໃນເວລາມອບ-ຮັບ).

ບົດບັນທຶກສະບັບນີ້ ເຮັດທີ່ ... ວັນທີ ... ເດືອນ ... ປີ ... ເປັນສອງສະບັບຕົ້ນ, ເປັນພາສາລາວ ແລະ ພາສາຫວຽດ, ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.

ຝ່າຍມອບ	ຝ່າຍຮັບ
(ເຊັນ ແລະ ຂຽນຊື່ແຈ້ງ)	(ເຊັນ ແລະ ຂຽນຊື່ແຈ້ງ)

ເອກະສານຊ້ອນທ້າຍ 12

ບັນຊີບັນດາຫົວໜ່ວຍການປົກຄອງຂັ້ນເມືອງທີ່ມີເຂດແດນ ສ່ວນໜຶ່ງຕິດກັບເສັ້ນຊາຍແດນປະເທດ ລາວ-ຫວຽດນາມ

ປະຕິບັດຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ຢູ່ໃນ ມາດຕາ 51 ຂອງສົນຍາ ວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ແລະ ດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ, ສະບັບລົງວັນທີ ... ເດືອນ ... ປີ ..., ກຳນົດບັນຊີ ບັນດາຫົວໜ່ວຍການປົກຄອງທີ່ມີເຂດແດນສ່ວນໜຶ່ງຕິດກັບເສັ້ນຊາຍແດນປະເທດ ລາວ-ຫວຽດນາມ ຄືດັ່ງນີ້:

I. ຝ່າຍ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ລ/ດ	ແຂວງຊາຍແດນ	ເມືອງຊາຍແດນ
1	ຜົ້ງສາລີ	- ເມືອງຍອດອູ - ເມືອງຜົ້ງສາລີ - ເມືອງສໍາພັນ - ເມືອງໃໝ່
2	ຫຼວງພະບາງ	- ເມືອງໂພນທອງ
3	ຫົວພັນ	- ເມືອງຊອນ - ເມືອງແອດ - ເມືອງຊຽງຄໍ້ - ເມືອງສົບເບົາ - ເມືອງວຽງໄຊ - ເມືອງຊໍາໃຕ້ - ເມືອງກວານ
4	ຊຽງຂວາງ	- ເມືອງໜອງແຮດ - ເມືອງໜອກ
5	ບໍລິຄໍາໄຊ	- ເມືອງວຽງທອງ - ເມືອງໄຊຈໍາພອນ - ເມືອງຄໍາເກີດ
6	ຄໍາມ່ວນ	- ເມືອງນາກາຍ - ເມືອງບົວລະພາ
7	ສະຫວັນນະເຂດ	- ເມືອງເຊໂປນ - ເມືອງນອງ
8	ສາລະວັນ	- ເມືອງສະໝ້ວຍ

9	ເຊກອງ	- ເມືອງກະລຶມ - ເມືອງດາກຈຶງ
10	ອັດຕະປື	- ເມືອງສາມໄຊ - ເມືອງພູວົງ

II. ฝ่าย สาทาละนะลัด สังคมนิยม ซาวดนาม

ລ/ດ	ແຂວງຊາຍແດນ	ເມືອງຊາຍແດນ
1	ດຽນບຽນ	- ເມືອງແຢ - ເມືອງນ້ຳໂປ່ - ເມືອງຈາ - ເມືອງດຽນບຽນ
2	ເຊີນລາ	- ເມືອງສິບກົກ - ເມືອງຊິງມາ - ເມືອງມາຍເຊີນ - ເມືອງອຽນເຈົາ - ເມືອງມົກເຈົາ - ເມືອງເວີນໂຮ່
3	ແຫ້ງຮວາ	- ເມືອງລາດ - ເມືອງກວານຮວາ - ເມືອງກວານເຊີນ - ເມືອງລາງແຈງ - ເມືອງເຫືອງຊ໋ອນ
4	ເຫງະອານ	- ເມືອງເກວຟອງ - ເມືອງເຕືອງເຢືອງ - ເມືອງກີເຊີນ - ເມືອງກອນກວ໋າງ - ເມືອງແອງເຊີນ - ເມືອງແຫ້ງເຈືອງ
5	ຮ່າຕິງ	- ເມືອງເຮືອງເຊີນ - ເມືອງຫວຸກວາງ - ເມືອງເຮືອງເຄ
6	ກວາງບິງ	- ເມືອງຕຽນຮວາ - ເມືອງມິງຮວາ

		- ເມືອງໂພແຈ້ກ - ເມືອງກວາງນິງ - ເມືອງເຫລ້ທຸ້ຍ
7	ກວາງຈິ	- ເມືອງເຮືອງຮວາ - ເມືອງດາຫຼົງ
8	ເທືອທຽນເຫວ້	- ເມືອງອາເລື້ອຍ
9	ກວາງນາມ	- ເມືອງເຕີຍຢາງ - ເມືອງນາມຢາງ
10	ກອນຕຸມ	- ເມືອງດັກເກຣີ - ເມືອງງ່ອກໂຮ່ຍ